# ບົດລາຍງານປະຈຳປີ

# ANNUAL REPORT 2024



Call center 021-561111

# ສາລະບານ

ໜ້າ

**ສານຈາກທ່ານປະທານສະພາບໍລິຫານ ....................................................I**

**ສານຈາກ ຜູ້ອຳນວຍການໃຫຍ່ .................................................... II**

**I. ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ. ............................................. 1**

1. ວິໄສທັດ.................................................................................... 1
2. ພາລະກິດ ................................................................................. 1
3. ປະຫວັດຄວາມເປັນມາ ໂດຍຫຍໍ້ ຂອງ ສຸວັນນີ. ........................................... 1

**II. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ 2024.................................. 8**

1. ທີ່ຕັ້ງ ແລະ ເຄືອຂ່າຍ ........................................................................ 8
2. ປະເພດທຸລະກິດ ແລະ ເລກທະບຽນວິສາຫະກິດ............................................. 8
3. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ. ......................................... 8
4. ເຫດການທີ່ສຳຄັນ ທີ່ເກີດຂຶ້ນພາຍໃນປີ 2024 ................................................. 9
5. ນະໂຍບາຍຈ່າຍເງິນປັນຜົນຂອງບໍລິສັດ ........................................................ 10

**III. ທົບທວນຜົນການດຳເນີນງານ ປີ 2024 ...............................................10**

1. ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2024 ................................... 10
2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2024 ........... 10
3. ຜົນການດຳເນີນງານປະຈຳປີ 2024 ...........................................................11-12
4. ບົດລາຍງານດ້ານການເງິນຂອງບໍລິສັດ ປະຈຳປີ 2024........................................... 13
5. ເສັ້ນສະແດງແນວໂນ້ມຜົນການດຳເນີນງານ ແລະ ສະຖານະການເງິນ ໃນຊ່ວງ 5ປີ ຍ້ອນຫຼັງຂອງບໍລິສັດ. 14
6. ວຽກງານດ້ານການຕະຫຼາດ ປີ 2024 ...........................................................16-19
7. ວຽກງານດ້ານບຸກຄະລາກອນ ປີ 2024 ........................................................ 20

**IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2024 ...........................................21**

1. ທຶນຈົດທະບຽນ .............................................................................. 21
2. ຜູ້ຖືຮຸ້ນ 5 ສ່ວນຮ້ອຍຂຶ້ນໄປ.................................................................. 21

**V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ .....................................................................................22**

1. ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ ......................................................... 22

2. ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 2024................................ 23
3. ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ .....................................................24-29
4. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2024....30-31
5. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.................................... 32

**VI. ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ປະຈຳປີ 2024.......................................32**

**VII. ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2024 ......................................................................32**

1. ການມອບພັນທະອາກອນ ປີ 2024 ........................................................................ 32
2. ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2024 ..........................................................32-33

**VIII. ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ 2024 ........................................34**

**IX. ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2024 ....................................................................34**

**X. ນະໂຍບາຍດ້ານສິ່ງແວດລ້ອມ ປະຈຳປີ 2024.............................................................35**

**XI. ແຜນການດຳເນີນງານປະຈຳປີ 2025 .......................................................................35**

1. ແຜນການສ້າງລາຍໄດ້ປະຈຳປີ 2025......................................................................... 35
2. ແຜນການຕະຫຼາດ ປະຈຳປີ 2025........................................................................... 35
3. ແຜນການພັດທະນາມາດຕະຖານການຈັດການ ປະຈຳປີ 2025 ............................................ 35
4. ແຜນພັດທະນາດ້ານບຸກຄະລາກອນ ປະຈຳປີ 2025 ....................................................... 35
5. ແຜນການລົງທຶນ ແລະ ຂະຫຍາຍກິດຈະການ ປະຈຳປີ 2025.............................................. 36



# ສານຈາກທ່ານປະທານສະພາບໍລິຫານ

ເຖິງ: ບັນດາທ່ານ ຜູ້ຖືຮຸ້ນ ທີ່ນັບຖື ແລະ ຮັກແພງ

ສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມ ສະພາບໍລິຫານ ຄັ້ງທີ 1/2025 ໃນວັນທີ 17 ກຸມພາ 2025 ເວລາ 10:00 ໂມງ ຢູ່ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ ຊັ້ນ 4, ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫລວງວຽງຈັນ.

ກອງປະຊຸມໄດ້ພິຈາລະນາ 9 ບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງ ບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ; ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2024 ແລະ ບົດລາຍງານການເງິນປະຈຳປີ 2024; ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2025; ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024; ການແຕ່ງຕັ້ງຜູ້ກວດສອບບັນຊີຈາກພາຍນອກ ແລະ ກຳນົດຄ່າບໍລິການກວດສອບບັນຊີພາຍນອກປີ 2025, ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານ ແທນສະມາຊິກສະພາບໍລິຫານທີ່ຄົບວາລະ; ການຮຽກປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024; ກຳນົດການປິດປື້ມບັນຊີຜູ້ຖືຮຸ້ນ ແລະ ການອະນຸມັດໃຫ້ແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ຖືຮຸ້ນ ຈະໄດ້ຮັບຊາບ ແລະ ພ້ອມກັນພິຈາລະນາປະກອບສ່ວນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປະຕິບັດແຜນທຸລະກິດປະຈຳປີ 2025 ດຳເນີນໄປດ້ວຍດີ, ມີປະສິດທິຜົນສູງ ແລະ ຍືນຍົງ, ທ້າຍນີ້ຂໍອວຍພອນໃຫ້ບັນດາທ່ານຜູ້ຖືຮຸ້ນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ.

ທ່ານສົມຈິດ ອິນທະມິດ

ປະທານສະພາບໍລິຫານ



# ສານຈາກ ຜູ້ອຳນວຍການໃຫຍ່

ເຖິງ: ທ່ານ ຜູ້ຖືຮຸ້ນທີ່ນັບຖື

ໃນປີທີ່ຜ່ານມາ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມຸ່ງໝັ້ນດຳເນີນທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນດ້ວຍເປົ້າໝາຍສ້າງຄວາມເພິງພໍໃຈໃຫ້ແກ່ລູກຄ້າ ຕະຫຼອດເຖິງການສ້າງຜົນຕອບແທນທີ່ໝັ້ນຄົງແກ່ຜູ້ຖືຮຸ້ນ

ຈາກຄວາມທ້າທາຍຕ່າງໆໃນຕະຫຼາດ ບໍລິສັດໄດ້ເຕີບໂຕຢ່າງຕໍ່ເນື່ອງ ໂດຍສາມາດສ້າງຍອດຂາຍເຕີບໂຕໄດ້ເກືອບ 16% ໃນປີ 2024 ທຽບປີ 2023 ໂດຍຜ່ານກົນລະຍຸດການຂະຫຍາຍຕະຫຼາດ, ການເປີດສາຂາໃໝ່ ແລະ ພັດທະນາຊ່ອງທາງການຂາຍທັງ Offline ແລະ Online ສິ່ງສຳຄັນທີ່ສຸດຄື ການພັດທະນາປະສິດທິພາບຂອງການບໍລິການ ແລະ ການຈັດການສາງສິນຄ້າ, ການສ້າງພັນທະມິດທາງທຸລະກິດ ແລະ ການພັດທະນາບຸກຄະລາກອນຂອງພວກເຮົາ ເພື່ອຮອງຮັບການເຕີບໂຕຂອງທຸລະກິດ ແລະ ຕອບສະໜອງຄວາມຕ້ອງການຂອງລູກຄ້າໃນທຸກພື້ນທີ່

ໃນຖານະຜູ້ບໍລິຫານ ຂ້າພະເຈົ້າ, ຂໍສະແດງຄວາມຂອບໃຈທ່ານຜູ້ຖືຮຸ້ນທຸກໆທ່ານ ທີ່ໃຫ້ການສະໜັບສະໜູນພວກຂ້າພະເຈົ້າຢ່າງຕໍ່ເນື່ອງ, ຂ້າພະເຈົ້າ ເຊື່ອໝັ້ນວ່າ ດ້ວຍການມຸ່ງໝັ້ນເຮັດໜ້າທີ່ວຽກງານ ທີ່ເນັ້ນຜົນຮັບ ແລະ ນະວັດຕະກຳໃໝ່ໆ ເຮົາຈະສາມາດນຳພາບໍລິສັດໃຫ້ເຕີບໂຕ ພ້ອມທັງສ້າງຜົນຕອບແທນທີ່ຍັ້ງຢືນແກ່ທຸກໆຝ່າຍ ແລະ ທ້າຍສຸດຂໍອວຍພອນ ໃຫ້ທຸກໆທ່ານມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານ

ທ່ານວັດດານາ ສຸຄະບັນດິດ

ຜູ້ອຳນວຍການໃຫຍ່

# ບົດລາຍງານປະຈຳປີ 2024

## I. ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ.

### 1. ວິໄສທັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນໍາການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ

### 2. ພາລະກິດ

- ພັດທະນາການນໍາເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ ແລະ ລາຄາຍຸດຕິທໍາໄປສູ່ທຸກກຸ່ມລູກຄ້າທຸກລະດັບລູກຄ້າ ແລະ ທຸກພື້ນທີ່ ຂອງປະເທດລາວ. ປະກອບສ່ວນເປັນອົງປະກອບໜຶ່ງ ທີ່ຂັບເຄື່ອນເສດຖະກິດລາວ;
- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍໃຫ້ທັນສະໄຫມ;
- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ໃນໄລຍະປ່ຽນຜ່ານ ແລະ ພຶດຕິກໍາຂອງຜູ້ບໍລິໂພກໃນຍຸກໃໝ່;
- ພັດທະນາການເຊື່ອມໂຍງການຄ້າ ຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກໃນຖານະທີ່ ປະເທດລາວເປັນໃຈກາງຂອງພາກພື້ນ;
- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

### 3. ປະຫວັດຄວາມເປັນມາ ໂດຍຫຍໍ້ ຂອງ ສຸວັນນີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດໍາເນີນທຸລະກິດຈັດຈໍາໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົກແຕ່ງພາຍໃນເຊັ່ນ: ກະໂລ້, ສຸຂະພັນ, ນໍ້າສີ, ວັດສະດຸຕົກແຕ່ງເຮືອນ ແລະ ອາຄານສໍາ

ນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນ ໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນໍ້າ, ຫຼັງຄາ ພ້ອມ ການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ ສິນຄ້າສ່ວນ ຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບ ສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີ ທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມ ສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບສະໜອງ ຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົກແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: **"ຍົກລະດັບດ້ານ ຄຸນນະພາບຂອງສິນຄ້າ ແລະ ການບໍລິການໃຫ້ກົງກັບຄວາມຕ້ອງການຂອງກຸ່ມລູກຄ້າເປົ້າໝາຍ ສ້າງຄວາມເພິງ ພໍໃຈໃຫ້ແກ່ລູກຄ້າ ຄວບຄຸມການປະຕິບັດງານໃຫ້ໄດ້ມາດຕະຖານ ພັດທະນາຢ່າງຕໍ່ເນື່ອງ"** ການຈັດຈຳໜ່າຍ ສິນຄ້າຮູບແບບທັນສະ ໄໝພາຍໃນສູນສະ ແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍ ການຄ້າ **"ສຸວັນນີ"** (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ປີ 1988 ໂດຍ ທ່ານ ນາງສຸວັນນີ ສຸຄະບັນດິດ (ທ່ານ ນາງສຸວັນນີ). ທ່ານ ວັດດານາ ສຸຄະບັນດິດ (ທ່ານວັດດານາ) ແລະ ທ່ານພັນໂນລາ ສຸຄະບັນດິດ (ທ່ານພັນໂນລາ)

➢ ປີ ແລະ ເຫດການສຳຄັນ

- **ປີ 1988**

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງສຸວັນນີ ໄດ້ເບິ່ງເຫັນເຖິງໂອກາດການ ຂະຫຍາຍຕົວຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານວັດດານາ ໄດ້ສຳເລັດການສຶກສາດ້ານ ສະຖາປັດຕະຍະກຳ ແລະ ມີປະສົບການກ່ຽວກັບການກໍ່ສ້າງ ພ້ອມຍັງເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການ ເຕີບໃຫຍ່ຂະຫຍາຍຕົວດ້ານການກໍ່ສ້າງພື້ນຖານໂຄງລ່າງ ສະນັ້ນ, ຈຶ່ງໄດ້ເລີ່ມຕົ້ນດຳເນີນທຸລະກິດຈັດຈຳໜ່າຍ ວັດສະດຸກໍ່ສ້າງທົ່ວໄປ ໃນຮ້ານຄ້າຂະໜາດໜຶ່ງຫ້ອງແຖວ (ພື້ນທີ່ປະມານ 50ຕາແມັດ) ທີ່ ບ້ານສີສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນ 3,250,000 ກີບ ເຊິ່ງປັດຈຸ ບັນເປັນໄດ້ປິດການໃຫ້ບໍລິການແລ້ວ

- **ປີ 1993**

ເປັນຊ່ວງທີ່ພາກການກໍ່ສ້າງໃນ ສປປ ລາວ ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ແລະ ມີຄວາມຕ້ອງການ ສິນຄ້າປະເພດວັດສະດຸກໍ່ສ້າງເພີ່ມຂຶ້ນ ການແຂ່ງຂັນທາງດ້ານທຸລະກິດວັດສະດຸກໍ່ສ້າງ ຈຶ່ງເພີ່ມຂຶ້ນ ອັນເປັນສາ ເຫດເຮັດໃຫ້ຕົ້ນທຶນສິນຄ້າ ທີ່ນຳເຂົ້າມາຈັດຈຳໜ່າຍ ບໍ່ສາມາດແຂ່ງຂັນກັບຄູ່ແຂ່ງໄດ້ ເພື່ອໃຫ້ທຸລະກິດສາມາດ ນຳສິນຄ້າມາຈາກໂຮງງານຜູ້ຜະລິດໄດ້ ໂດຍກົງໃນຕົ້ນທຶນທີ່ຖືກລົງ ປະກອບກັບທາງພັກ ແລະ ລັດຖະບານມີ ນະໂຍບາຍສະໜັບສະໜູນໃຫ້ຊື້ກົກຂາຍປາຍ ຫຼື ການຫຼຸດຜ່ອນການຊື້ສິນຄ້າຜ່ານພໍ່ຄ້າຄົນກາງຕາມຊາຍແດນ ເພື່ອໃຫ້ຜູ້ບໍລິໂພກໃນ ສປປ ລາວ ໄດ້ຊົມໃຊ້ສິນຄ້າໃນລາຄາຖືກລົງ ອັນນຳໄປສູ່ການຍົກລະດັບຄວາມສາມາດ ໃນການແຂ່ງຂັນໃຫ້ສູງຂຶ້ນ ພ້ອມທັງຜູ້ບໍລິຫານບໍລິສັດ ຕ້ອງການໃຫ້ບໍລິສັດມີໂຄງສ້າງການຈັດການ ທີ່ເປັນ ລະບົບ ແລະ ມີແບບແຜນຫຼາຍຂຶ້ນ ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າຂາ ອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100,000,000 ກີບ.

- **ປີ 2000** (ສາຂາໂພນຕ້ອງ)



ນັບແຕ່ປີນັ້ນເປັນຕົ້ນມາ ທຸລະກິດຂອງ ບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນມາ ໂດຍຕະຫຼອດ ແລະ ໄດ້ມີການຈະເລີນເຕີບ ໂຕຢ່າງຕໍ່ເນື່ອງ ຄວາມຕ້ອງການສິນຄ້າ ທາງ ດ້ານວັດສະດຸກໍ່ສ້າງເພີ່ມຂຶ້ນຕາມການຈະ ເລີນເຕີບໂຕຂອງ ສປປ ລາວ ປະກອບກັບ ທ່ານ ກິດສະດາ ສຸດຍະບັນດິດ ໄດ້ສໍາເລັດການ ສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອຈັດຈໍາໜ່າຍວັດສະດຸກໍ່ສ້າງ, ຕົບແຕ່ງ ແລະ ສ້ອມແປງ ເຮືອນ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທໍາອິດຂອງ ສປປ ລາວ ດ້ວຍຂະໜາດເນື້ອທີ່ໂຊລູມ ແລະ ສາງສິນຄ້າບໍ່ຕໍ່າກວ່າ 6,000 ຕາແມັດ ເນື້ອທີ່ຈອດລົດ 60 ຄັນ ແລະ ມີ ການຍ້າຍສໍານັກງານໃຫຍ່ຈາກ ສາຂາທົ່ງຂັນຄໍາ ມາເປັນ ສາຂາໂພນຕ້ອງ (ສໍານັກງານໃຫຍ່ໃນປັດຈຸບັນ).

- **ປີ 2004** (ສາຂາສີໄຄ)



ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນ ພາກການລົງທຶນ ແລະ ເພື່ອຮອງຮັບການ ເປັນເຈົ້າພາບການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນໃນປີ 2009. ບໍລິສັດ ໄດ້ ມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານນາແຮ່ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນຈັດຈໍາໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດສະດຸກໍ່ສ້າງ, ຕົກແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ ວາງສະແດງສິນຄ້າ ແລະ ພື້ນທີ່ສາງປະມານ 20,000 ຕາແມັດ ແລະ ພື້ນທີ່ຈອດລົດ 60ຄັນ.

- **ປີ 2015**

- ໃນປີ 2015 ບໍລິສັດ ໄດ້ມີການປັບປຸງວິສາຫະກິດ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່, ສະພາບ ຄວາມຕ້ອງການ ຫຼື ຄວາມຈໍາເປັນທາງທຸລະກິດ ແລະ ບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເຊິ່ງ ບໍລິສັດໄດ້ປ່ຽນຮູບແບບວິສາຫະກິດ ຈາກບໍລິສັດສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈໍາກັດຜູ້ດຽວ ມາເປັນ ບໍລິສັດສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈໍາກັດ ດ້ວຍທຶນຈົດທະບຽນ 500,000,000 ກີບ;
- ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກົດ 2015 ທີ່ໄດ້ມີວາລະ ພິຈາລະນາປັບປຸງມູນຄ່າທີ່ກໍານົດຮຸ້ນຂອງບໍລິສັດ ຈາກເດີມ 50,000 ກີບຕໍ່ຮຸ້ນ ເປັນ 2,000 ກີບຕໍ່ ຮຸ້ນ. ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກເດີມ 500,000,000 ກີບ ເປັນ 280 ຕື້ກີບ ໂດຍ ມີຈໍານວນຮຸ້ນທັງໝົດ 140,000,000 ຮຸ້ນ;
- ບໍລິສັດ ໄດ້ມີການຮ່ວມລົງທຶນກັບ **ບໍລິສັດ ໂກວບ້ອນເຮົ້າ ອິນເຕີເນຊັນແນວ ຈໍາກັດ** ເຊິ່ງເປັນບໍລິສັດ ຮ່ວມທຶນລະຫວ່າງ ບໍລິສັດ ສະຫຍາມໂກວບ້ອນເຮົ້າ ຈໍາກັດ (ມະຫາຊົນ) ແລະ ບໍລິສັດ ປູນຊີເມັນໄທ

ຈຳກັດ (ມະຫາຊົນ) ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົບແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ (ໂດຍຄອບຄົວສຸຄະບັນດິດ ຖືຮຸ້ນ 51% ແລະ ບໍລິສັດໂກວບ້ອນເຮົາ ອິນເຕີເນຊັ່ນແນວ ຈຳກັດ (ມະຫາຊົນ) ຖືຮຸ້ນ 33,94%);

- ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ "ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ" ພ້ອມກັບໄດ້ເພີ່ມທຶນຈົດທະບຽນ ເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນ ເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25,000,000 ຮຸ້ນ. ມູນຄ່າການົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົບແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ໃນ ສປປ ລາວ;
- ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001: VERSION 2008 ວັນທີ 25 ກັນຍາ 2015;

Cert No. 75Q17255

- ພ້ອມດຽວກັນນັ້ນ ທາງ ບໍລິສັດສຸວັນນີ ໂຮມເຊັນເຕີ ມາຫາຊົນ ໄດ້ເປີດຈອງຮຸ້ນ (IPO) ລະຫວ່າງວັນທີ 29-30 ພະຈິກ 01 ທັນວາ 2015 ລວມທັງໝົດ 25,000,000 ຮຸ້ນ ໃນລາຄາຂາຍ 3,100 ກີບ/ຮຸ້ນ;
- ນອກຈາກນັ້ນ, ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນເຂົ້າເປັນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015 ຢ່າງເປັນທາງການ.

- **ປີ 2016**

ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສວນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເມື່ອວັນທີ 22 ເມສາ 2016 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ (ຕລຊລ) ບ້ານໂພນທັນເໜືອ ຖະໜົນ T4 ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 118 ທ່ານ ຖືຮຸ້ນລວມ 157,735,300 ຮຸ້ນ ຄິດເປັນ 95,60% ຂອງຈຳນວນຮຸ້ນທັງໝົດ ຂອງບໍລິສັດ ໂດຍທີ່ປະຊຸມພິຈາລະນາ 9 ວາລະ ວາລະສຳຄັນຄື: ການພິຈາລະນາເງິນປັນຜົນປະຈຳປີ 2015 ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິ ແບ່ງປັນເງິນປັນຜົນເປັນຈຳນວນເງິນ 45ກີບ/ຮຸ້ນ

- **ປີ 2017** (ສາຂາໂຊກໃຫຍ່)

ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ເປີດສາຂາໃໝ່ທີ່ ບ້ານໂຊກໃຫຍ່ (ເສັ້ນທາງ 450 ປີ) ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໃນວັນທີ 30 ມັງກອນ 2017 ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າບໍ່ຕ່ຳກ່ວາ 25,000 ຕາແມັດ ດ້ວຍສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເຊິ່ງໄດ້ຮັບການຕອບຮັບຈາກລູກຄ້າ ຊາວນະຄອນຫຼວງໄດ້ເປັນຢ່າງດີ.




- **ປີ 2017** (ສາຂາປາກຊັນ)

ປີ 2017 ເດືອນ 9 ທາງ ບໍລິສັດ ໄດ້ມີພິທີເປີດອີກໜຶ່ງສາຂາຄື: ສາຂາປາກຊັນ ໃນວັນທີ 30 ກັນຍາ 2017 ເຊິ່ງເປັນສາຂາທຳອິດ ຂອງບໍລິສັດສຸວັນນີ ໂຮມເຊັນເຕີ ມາຫາຊົນ ທີ່ໄດ້ເປີດໃຫ້ບໍລິການຢູ່ຕ່າງແຂວງ ທີ່ຕັ້ງຢູ່ ບ້ານສີສະອາດ ເມືອງປາກຊັນ ແຂວງບໍລິຄຳໄຊ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕ່ຳກ່ວາ 15,000 ຕາແມັດ ໂດຍມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ໂດຍການເຂົ້າຮ່ວມຂອງ ທ່ານ ກອງແກ້ວ ໄຊສົງຄາມ ເຈົ້າແຂວງບໍລິຄຳໄຊ ໂດຍໄດ້ຮັບການຕອບຮັບ ຈາກຊາວເມືອງປາກຊັນ ກໍ່ຄື ຊາວແຂວງບໍລິຄຳໄຊ ເປັນຢ່າງດີ.



- **ປີ 2018** (ສາຂາປາກເຊ)

- ພາຍໃນປີ 2018 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດອີກ ໜຶ່ງສາຂາທີ່ທາງພາກໃຕ້ ເຊິ່ງກວມເອົາຕະຫຼາດພາກໃຕ້ 4ແຂວງຄື: ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື ນັ້ນກໍ່ຄື: ສາຂາປາກເຊ ທີ່ຕັ້ງຢູ່ບ້ານກາງ ນະຄອນປາກເຊ ແຂວງຈຳປາສັກ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕ່ຳກ່ວາ 15,000 ຕາແມັດ ເຊິ່ງເປີດໃຫ້ບໍລິການຢ່າງເປັນທາງການເມື່ອວັນທີ 17 ມິຖຸນາ 2018 ໂດຍການເຂົ້າຮ່ວມພິທີເປີດຂອງ ທ່ານສິມສະຫວາດ ເລັ່ງສະຫວັດ ທີ່ປຶກສາຄະນະບໍລິຫານສູນກາງພັກ ແລະ ທ່ານ ປອ ບຸນທອງ ດີວິໄຊ ເຈົ້າແຂວງ ແຂວງຈຳປາສັກ.



- ແລະ ໃນວັນທີ 22 ກັນຍາ 2018 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປ່ຽນເວີຊັ່ນຈາກ ISO 9001 Version 2008 ມາເປັນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 VERSION 2015.

Cert No. 75Q17255

- **ປີ 2019**

ໃນວັນທີ 1 ກໍລະກົດ 2019 ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາທົ່ງຕູມ.

- **ປີ 2020** (ສາຂາທ່າແຂກ)

ໃນວັນທີ 02 ມີນາ 2020 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຂະຫຍາຍສາຂາເພີ່ມອີກ 1 ສາຂາຄື: ສາຂາທ່າແຂກ ຢູ່ທີ່ ບ້ານໂພນພິມ ເມືອງທ່າແຂກ ແຂວງຄຳມ່ວນ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕໍ່າກວ່າ 15,000 ຕາແມັດ



- **ປີ 2021** (ສາຂາສະຫວັນນະເຂດ)

ໃນວັນທີ 14 ທັນວາ 2021 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍເພີ່ມອີກ 1 ສາຂາຄື: **ສາຂາສະຫວັນນະເຂດ** ຢູ່ທີ່ ບ້ານໂພນສະຫວ່າງເໜືອ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ເປັນສູນວາງສະແດງສິນຄ້າຂະໜາດກາງ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕໍ່າກວ່າ 16,000 ຕາແມັດ ມີສິນຄ້າຈຳໜ່າຍຫຼາຍກວ່າ 10,000 ລາຍການ



- **ປີ 2023**

ໃນວັນທີ 09 ມິຖຸນາ 2023 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດການຊື້-ຂາຍຮຸ້ນກູ້ຄັ້ງທຳອິດ ໃນຕະຫຼາດຫຼັກຊັບລາວ ເຊິ່ງມີມູນຄ່າຮຸ້ນກູ້ 3 ລ້ານໂດລາສະຫະລັດ ຫຼື ປະມານ 51.6 ຕື້ກີບ, ມູນຄ່າກຳນົດ 50 ພັນໂດລາສະຫະລັດ ຕໍ່ໜ່ວຍ, ອັດຕາດອກເບ້ຍ 7,50% ຕໍ່ປີ ແລະ ມີອາຍຸຮຸ້ນກູ້ 4 ປີ ເພື່ອໃຫ້ບໍລິສັດມີເງິນທຶນໃນການດຳເນີນທຸລະກິດ ຫຼື ຊຳລະຄືນເງິນກູ້ຂອງສະຖາບັນການເງິນ ຫຼື ໃຊ້ໃນການລົງທຶນຂະຫຍາຍສາຂາ ຫຼື ໃຊ້ເປັນທຶນໝູນວຽນຂອງບໍລິສັດ



## ແຜນວາດການຂະຫຍາຍຕົວ ຂອງທຸລະກິດໂດຍຫຍໍ້



## II. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ 2024

### 1. ທີ່ຕັ້ງ ແລະ ເຄືອຂ່າຍ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366 ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເຊິ່ງໃນປັດຈຸບັນປະກອບມີ 8 ສາຂາ ໃນນັ້ນຢູ່ນະຄອນຫຼວງວຽງຈັນ ມີ 3 ສາຂາ ແລະ ອີກ 5 ສາຂາ ຢູ່ຕ່າງແຂວງໄດ້ແກ່:

➢ **ມີ 3 ສາຂາ ທີ່ຕັ້ງຢູ່ ນະຄອນຫຼວງວຽງຈັນຄື:**

1. ສາຂາໂພນຕ້ອງ ຕັ້ງຢູ່ ເລກທີ 366 ຖະໜົນໂພນຕ້ອງ ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນມ ເບີໂທ 021 560000 ແລະ 020 56082311;
2. ສາຂາສາຂາສີໄຄ ຕັ້ງຢູ່ ຖະໜົນຫຼວງພະບາງ 109 ບ້ານນາແຮ່ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເບີໂທ 021 621254 ແລະ 020 58842414;
3. ສາຂາໂຊກໃຫຍ່ ຕັ້ງຢູ່ ຖະໜົນ 450 ບ້ານໂຊກໃຫຍ່ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ເບີໂທ 021 466009 ແລະ 020 55112509;

➢ **ແລະ ມີ 5 ສາຂາທີ່ຕັ້ງຢູ່ຕ່າງແຂວງຄື:**

4. ສາຂາປາກຊັນ ຕັ້ງຢູ່ ຖະໜົນເລກທີ 13 ໃຕ້ ບ້ານສີສະອາດ ເມືອງປາກຊັນ.ແຂວງບໍລິຄຳໄຊ, ເບີໂທ 054 791026 ແລະ 020 58097558;
5. ສາຂາປາກເຊ ຕັ້ງຢູ່ ຖະໜົນເລກທີ 38 ບ້ານກາງ ນະຄອນປາກເຊ ແຂວງຈຳປາສັກ, 031 514091 ແລະ 020 56206753;
6. ສາຂາທ່າແຂກ ຕັ້ງຢູ່ ຖະໜົນເລກທີ 13 ໃຕ້ ບ້ານໂພນພິມ ເມືອງທ່າແຂກ ແຂວງຄຳມ່ວນ, 051 212353 ແລະ 020 94071293;
7. ສາຂາສະຫວັນນະເຂດ ຕັ້ງຢູ່ ຖະໜົນເລກທີ 09 ບ້ານໂພນສະຫວ່າງເໜືອ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ, 041 215858;
8. ສາຂາຫຼວງພະບາງຕັ້ງຢູ່ ຖະໜົນເລກທີ 13 ເໜືອ ບ້ານພອນໄຊ ນະຄອນຫຼວງພະບາງ ແຂວງຫຼວງພະບາງ, ເບີໂທ 071 211 455.

### 2. ປະເພດທຸລະກິດ ແລະ ເລກທະບຽນວິສາຫະກິດ

2.1. **ປະເພດທຸລະກິດ:** ການຄ້າຂາຍຍົກ ແລະ ຍ່ອຍ ສິນຄ້າປະເພດວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນຄົບວົງຈອນ ພາຍໃນໃຕ້ຮູບການ ຫຼື ຮູບແບບວິສາຫະກິດເປັນ ບໍລິສັດ ມະຫາຊົນ

2.2. **ເລກທະບຽນວິສາຫະກິດ:** ແມ່ນ 01-00001304

### 3. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: (+856-21) 415645
- ເບີ What apps: (+856-20) 96 935 223
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la
- App: Souvanny Retail App
- Facebook: Souvanny Home Center
- Line ID: @Souvanny
- Instagram: Souvanny Home Center
- TIKTOK:  Souvanny Home Center

## 4. ເຫດການທີ່ສຳຄັນ ທີ່ເກີດຂຶ້ນພາຍໃນປີ 2024

### ➢ ສຸວັນນີ ເປີດສາຂາໃໝ່ ສາຂາຫຼວງພະບາງ

ໃນວັນທີ 13 ຕຸລາ 2024 ສຸວັນນີ ໂຮມເຊັນເຕີ ເປີດສາຂາໃໝ່ ສາຂາທີ 8 ສາຂາຫຼວງພະບາງ ຢ່າງເປັນທາງການ ທີ່ບ້ານພອນໄຊ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າບໍ່ຕ່ຳກວ່າ 15,000 ຕາແມັດ ໂດຍມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເພື່ອຕອບໂຈດຕາມຄວາມຕ້ອງການຂອງລູກຄ້າໃນການສ້າງເຮືອນໃໝ່, ການປັບປຸງ ຫຼື ຕໍ່ເຕີມອາຄານບ້ານເຮືອນ ທັງພາຍໃນ ແລະ ພາຍນອກ ຄວບຄຸມທຸກໝວດສິນຄ້າວັດສະດຸກໍ່ສ້າງ ແລະ ຕົກແຕ່ງເຮືອນເຊັ່ນ: ຊີມັງ, ເຫຼັກ, ຫຼັງຄາ ກະໂລ້, ສຸຂະພັນ, ສີ, ເຄື່ອງໃຊ້ໄຟຟ້າ, ເຟີນີເຈີ ແລະ ເຄື່ອງຕົກແຕ່ງເຮືອນຫຼາຍກວ່າ 10,000ລາຍການສິນຄ້າ ພ້ອມມີສະຖານທີ່ຈອດລົດທີ່ສະດວກກ້ວາງຂວາງ.








### ➢ ສຸວັນນີ ໄດ້ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ

ໃນວັນທີ 20 ທັນວາ 2024 ທີ່ຜ່ານມານີ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມຮັບຟັງກອງປະຊຸມສະຫຼຸບຜົນງານການຈັດຕັ້ງປະຕິບັດວຽກງານເປີດເຜີຍຂໍ້ມູນ ແລະ ວຽກງານການປະເມີນການຈັດຕັ້ງປະຕິບັດຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ (ຕລຊລ) ປີ 2023.

ໂດຍຜ່ານການສະຫຼຸບການດຳເນີນງານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ມີຄວາມຖືກຕ້ອງຊັດເຈນຈິ່ງສາມາດເຮັດໄດ້ຜົນງານດັ່ງນີ້:

1. ຜົນງານການເປີດເຜີຍຂໍ້ມູນດີເດັ່ນປະເພດ I.
2. ຜົນງານການຄຸ້ມຄອງບໍລິຫານດີເດັ່ນປະເພດ II.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຮູ້ສຶກເປັນກຽດ ແລະ ປິຕິຍິນດີ ກັບຜົນງານທີ່ສູ້ຊົນມາໄດ້ ພ້ອມທັງຮັກສາຄຸນນະພາບ ແລະ ຍົກລະດັບການຈັດຕັ້ງປະຕິບັດທຸກວຽກງານໃຫ້ດີຍິ່ງໆຂຶ້ນໃນທຸກໆປີ.









### 5. ນະໂຍບາຍຈ່າຍເງິນປັນຜົນຂອງບໍລິສັດ

**5.1.** ກຳໄລຂອງ ສ.ວ.ນ ພາຍຫຼັງທີ່ປະຕິບັດພັນທະອາກອນ ແລະ ຫັກຄັງສຳຮອງຕາມລະບຽບກົດໝາຍແລ້ວ ຈະຕ້ອງນຳມາແບ່ງປັນໃຫ້ຜູ້ຖືຮຸ້ນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ;

**5.2.** ຜູ້ຖືຮຸ້ນຈະໄດ້ຮັບເງິນປັນຜົນຕາມອັດຕາສ່ວນການຖືຮຸ້ນຂອງຕົນ ພາຍໃນກຳນົດເວລາສາມສິບ (30) ວັນ ນັບຈາກວັນທີ ທີ່ກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງເອົາການແບ່ງປັນເງິນປັນຜົນ ແລະ ຕ້ອງເປັນຜູ້ທີ່ມີລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ຖືຮຸ້ນ ທີ່ມີສິດໄດ້ຮັບເງິນປັນຜົນ;

**5.3.** ຜູ້ຖືຮຸ້ນສາມັນມີສິດໄດ້ຮັບເງິນປັນຜົນເປັນເງິນສົດ ຫຼື ເປັນຮຸ້ນສາມັນຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ໃນກໍລະນີແບ່ງປັນເງິນປັນຜົນພາຍໃຕ້ຮູບການເປັນຮຸ້ນ ຈະຕ້ອງໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

**5.4.** ຈຳນວນຮຸ້ນເພີ່ມເຕີມທີ່ນຳໃຊ້ ເພື່ອຈ່າຍເງິນປັນຜົນດັ່ງກ່າວ ຈະຖືກບັນທຶກເປັນຮຸ້ນ ຊຶ່ງລາຄາຊື້ຮຸ້ນດັ່ງກ່າວ ຖືວ່າໄດ້ຊຳລະຢ່າງຄົບຖ້ວນແລ້ວ ແລະ ມູນຄ່າຮຸ້ນທີ່ໄດ້ຮັບແທນເງິນປັນຜົນນັ້ນ ແມ່ນກົງກັນກັບມູນຄ່າ ເປັນເງິນສຳລັບການຈ່າຍເງິນປັນຜົນ;

**5.5.** ໃນກໍລະນີທີ່ໄດ້ຮຸ້ນເພີ່ມເຕີມຈາກເງິນປັນຜົນທີ່ຄິດໄລ່ອອກມາບໍ່ເປັນເລກຖ້ວນ, ຈຳນວນເລກເສດດັ່ງກ່າວ ຈະຖືກຄິດໄລ່ ແລະ ຊຳລະເປັນເງິນຕາມມູນຄ່າຮຸ້ນ ທີ່ລະບຸໄວ້ໃນກົດລະບຽບສະບັບນີ້.

## III. ທົບທວນຜົນການດຳເນີນງານ ປີ 2024

### 1. ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2024

ສະພາບເສດຖະກິດໂລກ ແລະ ພາກພື້ນຍັງພະເຊີນກັບຄວາມບໍ່ແນ່ນອນຂອງຄວາມຂາດແຄນທາງດ້ານວັດຖຸດິບ ແລະ ຕ່ອງໂສ້ການຜະລິດ ເຮັດໃຫ້ຕົ້ນທຶນໃນການຜະລິດສູງຂຶ້ນ ອັນເນື່ອງມາຈາກຄວາມຂັດແຍ້ງທາງສົງຄາມ ແລະ ການກີດກັນທາງການຄ້າທາງກົງ ແລະ ທາງອ້ອມ ເຮັດໃຫ້ເກີດການຖົດຖອຍທາງດ້ານເສດຖະກິດ ແລະ ການເງິນ ສົ່ງຜົນຕໍ່ພາວະເງິນເຟີ້ ແລະ ຄ່າເງິນ ເຮັດໃຫ້ກຳລັງຊື້ຂອງລູກຄ້າລົດລົງ ແລະ ຜົນຕາມມາກໍ່ຄືການຂະຫຍາຍຕົວຂອງເສດຖະກິດບາງເຂດຕິດລົບ ແລະ ບາງເຂດເຕີບໂຕຕໍ່າ.

### 2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2024

ປີ 2024 ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພວກເຮົາໄດ້ປະສົບຜົນສຳເລັດໃນການສ້າງຍອດຂາຍໂດຍເຕີບໂຕລວມເກືອບ 16% ອັນເນື່ອງມາຈາກມີການປັບປຸງຂອງໝວດສິນຄ້າໃໝ່ ທີ່ມີຄວາມຖືກຕ້ອງຕາມຕະຫຼາດຫຼາຍຂຶ້ນ ຊຶ່ງນຳມາຍອດຂາຍທີ່ເຕີບໂຕຂຶ້ນ.

## 3. ຜົນການດຳເນີນງານປະຈຳປີ 2024

### 3.1. ລາຍຮັບ

ຫົວໜ່ວຍ: ລ້ານກີບ




ບໍລິສັດມີລາຍຮັບລວມໃນປີ 2023 ເທົ່າກັບ **767,140** ລ້ານກີບ ແລະ ໃນປີ 2024 ໄດ້ມີລາຍຮັບລວມເພີ່ມຂຶ້ນມາເປັນ **889,136** ລ້ານກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນ **121,264** ລ້ານກີບ ຫຼື ໃນອັດຕາສ່ວນ **15.79** ສ່ວນຮ້ອຍຈາກລາຍຮັບປີ 2023 ເນື່ອງຈາກວ່າ ບໍລິສັດໄດ້ມີການເພີ່ມຄວາມຫຼາກຫຼາຍຂອງສິນຄ້າ ພ້ອມດຽວກັນນັ້ນ ບໍລິສັດຍັງໄດ້ມີການຈັດໂປຣໂມຊັ່ນຕ່າງໆ ເພື່ອສົ່ງເສີມການຂາຍ ເຮັດໃຫ້ລູກຄ້າມີຄວາມສົນໃຈໃນມາໃຊ້ການບໍລິການຫຼາຍຂຶ້ນ ແລະ ບໍລິສັດມີລາຍຮັບເພີ່ມຈາກສາຂາເປີດໃໝ່ ຄື ສາຂາຫຼວງພະບາງ ທີ່ເປີດໃນທ້າຍປີ2024.

### 3.2. ກຳໄລສຸດທິ




ຫົວໜ່ວຍ: ລ້ານກີບ




ບໍລິສັດມີກຳໄລສຸດທິໃນປີ 2023 ເທົ່າກັບ **60,799** ລ້ານກີບ ແລະ ມີອັດຕາກຳໄລສຸດທິເທົ່າກັບ 7.92 ສ່ວນຮ້ອຍ ແລະ ໃນປີ 2024 ບໍລິສັດໄດ້ມີກຳໄລສຸດທິລົດລົງ ເທົ່າກັບ **58,318** ລ້ານກີບ ມີອັດຕາກຳໄລສຸດທິ ເທົ່າກັບ 6.65 ສ່ວນຮ້ອຍ ການທີ່ບໍລິສັດໄດ້ມີກຳໄລສຸດທິລົດລົງ ເນື່ອງຈາກ ບໍລິສັດ ມີລາຍ

ຈ່າຍໃນການຂາຍ, ລາຍຈ່າຍການບໍລິຫານ ແລະ ສ່ວນໜຶ່ງແມ່ນເພີ່ມຈາກລາຍການສົ່ງເສີມການຂາຍຂອງສາຂາທີ່ເປີດໃໝ່ຄື: ສາຂາຫຼວງພະບາງ.

## 3.3. ຊັບສິນ

ຫົວໜ່ວຍ:ລ້ານກີບ




ຊັບສິນລວມໃນ ວັນທີ 31 ທັນວາ 2023 ເທົ່າກັບ **1,806,353** ລ້ານກີບ ເພີ່ມຂຶ້ນເປັນ **1,816,127** ລ້ານກີບໃນວັນທີ 31 ທັນວາ 2024 ເມື່ອທຽບກັນເຫັນວ່າເພີ່ມຂຶ້ນ **9.774** ລ້ານກີບ ຫຼື ຄິດເປັນ **0.54** ສ່ວນຮ້ອຍ ການທີ່ມີຊັບສິນລວມເພີ່ມຂຶ້ນ ເນື່ອງຈາກການເພີ່ມສິນຄ້າເຂົ້າມາ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ, ມີຊັບສິນບໍ່ໝູນວຽນເພີ່ມຂຶ້ນຈາກການຂະຫຍາຍສາຂາໃໝ່ ທີ່ກຳລັງກໍ່ສ້າງທັງໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ແລະ ຊັບສິນໝູນວຽນອື່ນໆ ກໍ່ເພີ່ມຂຶ້ນຕາມລຳດັບ.

## 3.4. ໜີ້ສິນ

ຫົວໜ່ວຍ: ລ້ານກີບ




ໜີ້ສິນລວມສິ້ນສຸດໃນວັນທີ 31 ທັນວາ 2023 ເທົ່າກັບ **291,644** ລ້ານກີບ ລົດລົງເປັນ **287,072** ລ້ານກີບ ໃນວັນທີ 31 ທັນວາ 2024 ເມື່ອທຽບກັນເຫັນວ່າລົດລົງ **4,571** ລ້ານກີບ ຫຼື ຄິດເປັນ **1.59** ສ່ວນຮ້ອຍ ເຊິ່ງໜີ້ສິນຂອງບໍລິສັດລົດລົງ ເນື່ອງຈາກວ່າ ບໍລິສັດໄດ້ຊຳລະຄືນເງິນກູ້ໄລຍະຍາວບາງສ່ວນ ທີ່ຄົບກຳນົດຊຳລະແລ້ວ.

### 3.5. ທຶນ




ສິ້ນສຸດວັນທີ 31 ທັນວາ 2023 ລວມທຶນຈາກຜູ້ຖືຮຸ້ນທັງໝົດເທົ່າກັບ **1,514,709** ລ້ານກີບ ເຊິ່ງສິ້ນສຸດໃນວັນທີ 31 ທັນວາ 2024 ເພີ່ມຂຶ້ນເປັນ **1,529,055** ລ້ານກີບ ເຫັນວ່າເພີ່ມຂຶ້ນ **14,346** ລ້ານກີບ ຫຼື ຄິດເປັນ **0.95** ສ່ວນຮ້ອຍ ເນື່ອງຈາກໄດ້ມີກຳໄລສຸດທິພາຍໃນປີເພີ່ມຂຶ້ນ ພ້ອມດຽວກັນນັ້ນຍັງມີອັດຕາແລກປ່ຽນຈາກການແປງຄ່າງົບການເງິນທີ່ເພີ່ມຂຶ້ນຕາມລຳດັບ

### 3.6. ອັດຕາສ່ວນທາງການເງິນ

| | 2024 | 2023 |
|---|---|---|
| ອັດຕາສ່ວນໜີ້ສິນຕໍ່ຊັບສິນ (D/A) | 0.16 | 0.16 |
| ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງເຈົ້າຂອງ (D/E) | 0.19 | 0.19 |
| ອັດຕາຜົນຕອບແທນຈາກຊັບສິນ (ROA) | 3.21% | 3.37% |
| ອັດຕາຜົນຕອບແທນຈາກທຶນ (ROE) | 3.81% | 4.01% |
| ກຳໄລຂັ້ນຕົ້ນຕໍ່ລາຍຮັບລວມ (G/P) | 25.48% | 24.74% |
| ກຳໄລສຸດທິຕໍ່ລາຍຮັບລວມ (N/P) | 6.56% | 7.92% |
| ອັດຕາສ່ວນສະພາບຄ່ອງ (Current Ratio) | 3.18 | 3.45 |
| ອັດຕາໝູນວຽນຂອງສິນຄ້າຄົງເຫຼືອ (Inventory Turnover Period) | 269 | 274 |
| ອັດຕາສ່ວນຄວາມສາມາດໃນການຊຳລະໜີ້ (DSCR) | 4.45 | 4.09 |
| ອັດຕາສ່ວນລາຄາຮຸ້ນຕໍ່ກຳໄລສຸດທິຕໍ່ຮຸ້ນ (P/E) | 7 | 10 |

## 4. ບົດລາຍງານດ້ານການເງິນຂອງບໍລິສັດ ປະຈຳປີ 2024

ຕາມເອກະສານແນບ ແຕ່ໜ້າທີ 01-39

# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ

ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024

Building a better
working world

## ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ສາລະບານ**

*ໜ້າ*


| | |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງຄະນະບໍລິຫານ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 7 |
| ໃບລາຍງານຖານະການເງິນທີ່ຖືກແປງຄ່າເປັນເງິນກີບ | 8 - 9 |
| ໃບລາຍງານຜົນການດຳເນີນງານທີ່ຖືກແປງຄ່າເປັນເງິນກີບ | 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ຖືກແປງຄ່າເປັນເງິນກີບ | 11 |
| ໃບລາຍງານກະແສເງິນສົດທີ່ຖືກແປງຄ່າເປັນເງິນກີບ | 12 – 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ | 14 - 39 |

# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຂໍ້ມູນທົ່ວໄປ

## ບໍລິສັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ (ຕລຊ) ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ. ບໍລິສັດດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ສະບັບລ່າສຸດ ເລກທີ 0371/ຈອທ, ລົງວັນທີ 29 ສິງຫາ 2024. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົກແຕ່ງພາຍໃນເຊັ່ນ: ກະໂລ, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ - ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໂຄງສ້າງການຖືຮຸ້ນຂອງບໍລິສັດນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

| *ຂາຮຸ້ນ* | *ຈຳນວນຮຸ້ນ (ມູນຄ່າຮຸ້ນ: 2,000 ກີບ/ຮຸ້ນ)* | *ອັດຕາສ່ວນຮ້ອຍຂອງຮຸ້ນ* |
|---|---|---|
| ທ່ານ ວັດດານາ ສຸຄະບັນດິດ (*) | 28,524,440 | 17.29% |
| ທ່ານ ພັນໂນລາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານ ກິດສະດາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານນາງ ປະພັດສອນ ສຸຄະບັນດິດ (*) | 840,000 | 0.51% |
| ທ່ານນາງ ວຽງດາລາ ບຸບຜາ (*) | 840,000 | 0.51% |
| ທ່ານ ອານຸສອນ ອຸ່ນໄຕ (*) | 28,000 | 0.02% |
| ທ່ານ ບຸນທະວີ ສີມມາໄຊ (*) | 22,400 | 0.01% |
| ທ່ານ ສຸວັນນີ ສີສົມໃຈ (*) | 28,000 | 0.02% |
| ທ່ານ ໄຊສັງຄົມ ຊຸມມະນີວົງ (*) | 28,000 | 0.02% |
| Global House International Limited | 56,000,000 | 33.94% |
| ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ | 25,000,000 | 15.15% |
| | **165,000,000** | |

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%.

ທຶນຈົດທະບຽນເບື້ອງຕົ້ນຂອງບໍລິສັດແມ່ນ 330,000,000,000 ກີບ. ທຶນຊຳລະຕົວຈິງຂອງບໍລິສັດມາຮອດວັນທີ 31 ທັນວາ 2024 ແມ່ນ 330,000,000,000 ກີບ (31 ທັນວາ 2023: 330,000,000,000 ກີບ).

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ບ້ານເລກທີ 366 ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດມີ 8 ສາຂາໃນ ສປປ ລາວ ໃນນັ້ນ 3 ສາຂາຕັ້ງຢູ່ທີ່ ນະຄອນຫຼວງວຽງຈັນ ແລະ 5 ສາຂາຕັ້ງຢູ່ທີ່ແຂວງອື່ນໆ ດັ່ງລາຍລະອຽດລຸ່ມນີ້:

- ສາຂາ ໂພນຕ້ອງສະຫວາດ ສະຖານທີ່ຕັ້ງຢູ່ບ້ານເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ;
- ສາຂາ ສີໃຄ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ໂຊກໃຫຍ່ ສະຖານທີ່ຕັ້ງຢູ່ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ປາກຊັນ ສະຖານຕັ້ງຢູ່ຖະໜົນ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ;
- ສາຂາ ທ່າແຂກ ສະຖານທີ່ຕັ້ງຢູ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ;
- ສາຂາ ສະຫວັນນະເຂດ ສະຖານທີ່ຕັ້ງຢູ່ ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ເມືອງ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ;
- ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈຳປາສັກ;
- ສາຂາ ຫຼວງພະບາງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ພອນໄຊ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ.

## ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຂໍ້ມູນທົ່ວໄປ

ພ້ອມນີ້, ບໍລິສັດກໍຍັງມີ 3 ສາຂາ ທີ່ພວມກໍ່ສ້າງດັ່ງນີ້:

- ສາຂາ ສີມສະໜຸກ ສະຖານທີ່ຕັ້ງຢູ່ ຖະໜົນ T5, ບ້ານ ສີມສະໜຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ;
- ສາຂາ ອຸດົມໄຊ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ນາສ້າວ, ເມືອງ ໄຊ, ແຂວງ ອຸດົມໄຊ;
- ສາຂາ ວັງວຽງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ຂົນໜາກ, ເມືອງ ວັງວຽງ, ແຂວງ ວຽງຈັນ.

ຈຳນວນພະນັກງານຂອງບໍລິສັດນະວັນທີ 31 ທັນວາ 2024 ແມ່ນ 733 ຄົນ (31 ທັນວາ 2023: 687 ຄົນ ).

**ສະພາອໍານວຍການ**

ສະມາຊິກຂອງສະພາອໍານວຍການພາຍໃນປີ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕໍາແໜ່ງ* | ວັນທີແຕ່ງຕັ້ງ/ລາອອກ |
|---|---|---|
| ທ່ານ ສົມຈິດ ອິນທະມິດ | ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ຣສ. ປອ ໄຊພອນ ກອງມະນີລາ | ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ວັດດານາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ສອນສະຫວັນ ແສງອະໄພ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 8 ເມສາ 2024 |
| ທ່ານ ບຸນເຕີມ ກົມມິດຕະພາບ | ສະມາຊິກສະພາບໍລິຫານ | ລາອອກນະວັນທີ 7 ເມສາ 2024 |
| ທ່ານ ພັນໂນລາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ກິດສະດາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ນາງ ຄໍາໄຂ ລໍວັນໄຊ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ນາງ ຊຸຕິການ ສີແສງຈັນ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |
| ທ່ານ ພິພັບ ວາດສະໜາອາຊາສະກຸນ | ສະມາຊິກສະພາບໍລິຫານ | ແຕ່ງຕັ້ງນະວັນທີ 7 ເມສາ 2023 |

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕໍາແໜ່ງ* |
|---|---|
| ທ່ານ ວັດດານາ ສຸຄະບັນດິດ | ຜູ້ອໍານວຍການໃຫຍ່ |
| ທ່ານ ພັນໂນລາ ສຸຄະບັນດິດ | ຜູ້ອໍານວຍການຝ່າຍການເງິນ |
| ທ່ານ ກິດສະດາ ສຸຄະບັນດິດ | ຜູ້ອໍານວຍການຝ່າຍປະຕິບັດການ |

**ຜູ້ຕາງໜ້າທາງດ້ານກົດໝາຍ**

ຜູ້ຕາງຫນ້າທາງດ້ານກົດໝາຍຂອງບໍລິສັດພາຍໃນປີ ແລະ ນະວັນທີມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ວັດດານາ ສຸຄະບັນດິດ ຜູ້ອໍານວຍການໃຫຍ່.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ.

# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີໃນການນໍາສະເໜີບົດລາຍງານສະບັບນີ້ ແລະ ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດສໍາລັບປີສິ້ນສຸດວັນທີ 31 ທັນວາ 2024 ("ເອກະສານລາຍງານການເງິນ").

**ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ**

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ. ນະໂຍບາຍບັນຊີດັ່ງກ່າວບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດໍາເນີນງານ ແລະ ກະແສເງິນສົດ ຂອງບໍລິສັດທີ່ສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ມີການເປີດເຜີຍຂໍ້ມູນທີ່ສໍາຄັນ ແລະ ໄດ້ອະທິບາຍໃນເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ; ແລະ
- ກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ເທິງພື້ນຖານຄວາມສືບເນື່ອງໃນການດໍາເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດໍາເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນໍາໃຊ້ຢູ່. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຈຶ່ງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ໄດ້ປະຕິບັດຕາມຂໍ້ກໍານົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບທີ່ກ່ຽວຂ້ອງ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຄະນະບໍລິຫານ:

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ວັດຖານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

20 ກຸມພາ 2025

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 13642391/68220877 – ທີ່ຖືກແປງຄ່າເປັນເງິນກີບ

**ບົດລາຍງານຂອງນັກກວດສອບອິດສະຫຼະ**

**ເຖິງ: ຜູ້ຖືຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

*ຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ໂດຍປະກອບມີ ໃບລາຍງານຖານະການເງິນທີ່ຖືກແປງຄ່າເປັນເງິນກີບ ນະວັນທີ 31 ທັນວາ 2024, ໃບລາຍງານຜົນການດຳເນີນງານທີ່ຖືກແປງຄ່າເປັນເງິນກີບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ຖືກແປງຄ່າເປັນເງິນກີບ ແລະ ໃບລາຍງານກະແສເງິນສົດທີ່ຖືກແປງຄ່າເປັນເງິນກີບສຳລັບປີທີ່ສິ້ນສຸດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍການບັນຊີທີ່ສຳຄັນ (ເອີ້ນລວມກັນວ່າ "ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ").

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດໄດ້ຖືກກະກຽມ ແລະ ນຳສະເໜີໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ.

*ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບຕໍ່ກັບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່*

ພວກຂ້າພະເຈົ້າເອົາໃຈໃສ່ຕໍ່ກັບບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ເຊິ່ງໄດ້ອະທິບາຍກ່ຽວກັບນະໂຍບາຍທາງບັນຊີທີ່ບໍລິສັດນຳໃຊ້. ນະໂຍບາຍທາງບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ນຳສະເໜີໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ ແລະ ລາຍງານກະແສເງິນສົດຂອງບໍລິສັດໂດຍສອດຄ່ອງກັບຫຼັກການບັນຊີຂອງສາກົນທີ່ຍອມຮັບໄດ້ທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ-

*ບັນຫາອື່ນໆ*

ເອກະສານລາຍງານທາງການເງິນທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023 ແມ່ນຖືກກວດສອບໂດຍບໍລິສັດກວດສອບອື່ນເຊິ່ງສະແດງຄຳເຫັນແບບບໍ່ມີເງື່ອນໄຂໃນເອກະສານລາຍງານການເງິນເຫຼົ່ານັ້ນ ລົງວັນທີ 13 ກຸມພາ 2024.



A member firm of Ernst & Young Global Limited

EY
Building a better
working world

*ບັນຫາສຳຄັນໃນການກວດສອບ*

ບັນຫາສຳຄັນໃນການກວດສອບ ແມ່ນບັນດາບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານທາງການເງິນທີ່ຖືກແປງຄ່າເປັນກີບປີປັດຈຸບັນຕາມການຕັດສິນທາງວິຊາຊີບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ພິຈາລະນາແລ້ວວ່າບັນຫາທີ່ອະທິບາຍໄວ້ດ້ານລຸ່ມນີ້ເປັນບັນຫາທີ່ສຳຄັນໃນການກວດສອບທີ່ໄດ້ສື່ສານໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ແມ່ນໄດ້ຖືກເອົາໃຈໃສ່ໃນຂອບເຂດຂອງການກວດສອບເອກະສານລາຍງານທາງການເງິນທີ່ຖືກແປງຄ່າເປັນກີບຂອງພວກຂ້າພະເຈົ້າ ແລະ ໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແຍກຕໍ່ກັບບັນຫາເຫຼົ່ານີ້. ສຳລັບແຕ່ລະບັນຫາລຸ່ມນີ້, ພວກຂ້າພະເຈົ້າກໍໄດ້ອະທິບາຍວິທີການກວດສອບຕໍ່ກັບບັນຫາດັ່ງກ່າວ.

ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທີ່ໄດ້ຖືກອະທິບາຍໄວ້ໃນວັກຂອງຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບຂອງບົດລາຍງານຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງບັນຫາເຫຼົ່ານີ້ດ້ວຍ. ດັ່ງນັ້ນ, ການກວດສອບຂອງຂ້າພະເຈົ້າແມ່ນລວມເຖິງການປະຕິບັດຂັ້ນຕອນໃນການອອກແບບເພື່ອຕອບສະໜອງການປະເມີນຄວາມສ່ຽງທີ່ອາດຈະເກີດຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບ. ຜົນຂອງຂັ້ນຕອນກວດສອບຂອງຂ້າພະເຈົ້າ ລວມມີບັນດາຂັ້ນຕອນທີ່ດຳເນີນການເພື່ອຕອບສະໜອງຕໍ່ກັບບັນຫາດ້ານລຸ່ມນີ້ ແມ່ນໄດ້ເປັນຫຼັກການໃນການອອກຄຳເຫັນຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບຂອງບໍລິສັດ.

*ເງິນແຮສຳລັບສິນຄ້າທີ່ເຄື່ອນໄຫວຊ້າ ແລະ ລ້າສະໄໝ ແລະ ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້*

ດັ່ງທີ່ສະແດງໃນບົດອະທິບາຍເລກທີ 7 ຂອງເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບ ເຊິ່ງມີມູນຄ່າຕາມບັນຊີຂອງເຄື່ອງໃນສາງ ນະວັນທີ 31 ທັນວາ 2024 ແມ່ນ 500,736,982,852 ກີບ (ທຽບເທົ່າ 795,862,809 ບາດ) ແລະ ເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ ແມ່ນ 7,801,849,905 ກີບ (ທຽບເທົ່າ 2,400,127 ບາດ) ແລະ ເງິນແຮສຳລັບມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ແມ່ນ 173,875,028 ກີບ (ທຽບເທົ່າ 276,354 ບາດ).

ການຕັດສິນທາງວິຊາຊີບແມ່ນມີຄວາມຈຳເປັນໃນການປະເມີນລະດັບທີ່ເໝາະສົມຂອງເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ. ການຕັດສິນດັ່ງກ່າວປະກອບດ້ວຍການຄາດຄະເນຂອງຄະນະບໍລິຫານ ໃນການຄາດການສ່ວນຫຼຸດຂາຍ ແລະ ອາຍຸຂອງເຄື່ອງໃນສາງ. ຂະບວນການປະເມີນໃນການກຳນົດມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ແມ່ນກ່ຽວຂ້ອງກັບການປະມານລາຄາຂາຍທີ່ຄາດວ່າຈະຂາຍ ແລະ ຕົ້ນທຶນທີ່ຄາດວ່າຈະຂາຍ. ດ້ວຍເຫດນີ້ ພວກຂ້າພະເຈົ້າຈຶ່ງໄດ້ພິຈາລະນາເອົາ ເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ ແລະ ເງິນແຮສຳລັບມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ເປັນບັນຫາສຳຄັນໃນການກວດສອບ.

ເປັນສ່ວນໜຶ່ງຂອງການກວດສອບຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າໄດ້ປະເມີນຄວາມສົມເຫດສົມຜົນໃນສົມມຸດຖານຂອງຄະນະບໍລິຫານທີ່ຕິດພັນກັບການຕັ້ງເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ ໂດຍເລືອກຕົວຢ່າງແລ້ວເຮັດການສຳຫຼວດສ່ວນຫຼຸດໃນການຂາຍຕົວຈິງທີ່ປະກາດໃນຫ້ອງຂາຍເພື່ອຢືນຢັນນະໂຍບາຍສ່ວນຫຼຸດໃນການຂາຍສິນຄ້າເຄື່ອນໄຫວຊ້າ. ພວກຂ້າພະເຈົ້າໄດ້ສຳຫຼວດການນັບເຄື່ອງໃນສາງຕົວຈິງທີ່ປະຕິບັດໂດຍຄະນະບໍລິຫານ ແລະ ປະເມີນເງື່ອນໄຂທາງກາຍຍະພາບຂອງເຄື່ອງໃນສາງເພື່ອລະບຸລາຍການທີ່ເຄື່ອນໄຫວຊ້າ ແລະ ລ້າສະໄໝ. ພວກຂ້າພະເຈົ້າໄດ້ທົດສອບອາຍຸຂອງເຄື່ອງໃນສາງ ແລະ ຄິດໄລ່ຄືນເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ. ພວກຂ້າພະເຈົ້າໄດ້ທົດສອບຄວາມສົມເຫດສົມຜົນຂອງລາຄາຂາຍທີ່ໃຊ້ໃນການຄິດໄລ່ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້. ພວກຂ້າພະເຈົ້າຍັງໄດ້ທົບທວນຄືນຄວາມເໝາະສົມ ແລະ ຄວາມພຽງພໍຂອງການເປີດເຜີຍເອກະສານທາງການເງິນທີ່ກ່ຽວຂ້ອງກັບການຕັ້ງເງິນແຮສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ ແລະ ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ໃນເອກະສານທາງການເງິນ.



A member firm of Ernst & Young Global Limited

EY

Building a better working world

*ຂໍ້ມູນອື່ນໆ*

ຄະນະຜູ້ບໍລິຫານແມ່ນມີຄວາມຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆ, ຂໍ້ມູນອື່ນໆທີ່ປະກອບມີຂໍ້ມູນທີ່ລວມຢູ່ໃນ ບົດລາຍງານປະຈຳປີ ແຕ່ບໍ່ໄດ້ລວມເອົາເອກະສານລາຍງານທາງການເງິນທີ່ຖືກແປງຄ່າເປັນກີບ ແລະ ບົດລາຍງານນັກກວດສອບຂອງພວກຂ້າພະເຈົ້າ. ບົດລາຍງານປະຈຳປີຄາດຄະເນວ່າຈະສາມາດເຂົ້າເຖິງໄດ້ຫຼັງຈາກວັນທີຂອງບົດລາຍງານກວດສອບສະບັບນີ້.

ຄຳເຫັນຂອງພວກຂ້າພະເຈົ້າກ່ຽວກັບເອກະສານລາຍງານທາງການເງິນທີ່ຖືກແປງຄ່າເປັນກີບ ບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກຂ້າພະເຈົ້າຈະບໍ່ສະແດງຄຳເຫັນຕໍ່ກັບຂໍ້ມູນດັ່ງກ່າວ.

ໃນການກວດສອບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບຂອງພວກຂ້າພະເຈົ້າ, ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຄືການອ່ານຂໍ້ມູນອື່ນໆທີ່ກ່າວເຖິງຂ້າງເທິງເມື່ອຂໍ້ມູນດັ່ງກ່າວສາມາດເຂົ້າເຖິງໄດ້ ແລະ ຖ້າຫາກພິຈາລະນາວ່າ ຂໍ້ມູນອື່ນໆນັ້ນບໍ່ສອດຄ່ອງກັບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບ ຫຼື ຂໍ້ມູນທີ່ໄດ້ຮັບຈາກການກວດສອບ, ຫຼື ອາດຈະມີການບິດບຽນຂໍ້ມູນຢ່າງມີສາລະສຳຄັນ. ເມື່ອພວກຂ້າພະເຈົ້າອ່ານບົດລາຍງານປະຈຳປີ ຖ້າພວກຂ້າພະເຈົ້າສະຫຼຸບໄດ້ວ່າມີການບິດບຽນຂໍ້ມູນຢ່າງມີສາລະສຳຄັນ ພວກຂ້າພະເຈົ້າຈຳເປັນຕ້ອງສື່ສານບັນຫາດັ່ງກ່າວໃຫ້ຜູ້ມີອຳນາດໃນການຄວບຄຸມໄດ້ຮັບຮູ້.

*ຄວາມຮັບຜິດຊອບຂອງຄະນະບໍລິຫານບໍລິສັດຕໍ່ກັບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ*

ຄະນະບໍລິຫານຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ແລະ ບັນດາລະບຽບການອື່ນໆທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ+ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ+ຄະນະບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດໃນການສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຕາມເໝາະສົມ+ບັນຫາທີ່ກ່ຽວຂ້ອງກັບການສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານບໍລິສັດ ຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ-

*ຄວາມຮັບຜິດຊອບຂອງນັກກວດສອບຕໍ່ກັບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ ໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ+ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ຖືກພິຈາລະນາຢ່າມີສາລະສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ-



A member firm of Ernst & Young Global Limited

EY
Building a better working world

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ+ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້ອ

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ+ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ+ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ+ການປອມແປງ+ການລະເລີຍໂດຍຕັ້ງໃຈ+ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ-
- ເຮັດຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ-
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນຄວາມສືບເນື່ອງໃນການດໍາເນີນທຸລະກິດ ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ ພວກຂ້າພະເຈົ້າຈະໄດ້ລະບຸໄວ້ໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ+ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ ແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆອາດເປັນສາເຫດເຮັດໃຫ້ບໍລິສັດຍຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຜູ້ມີອໍານາດໃນການຄວບຄຸມທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ+ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສໍາຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສໍາຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກໍານົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ-

ພວກຂ້າພະເຈົ້າໄດ້ຈັດກຽມຄໍາຖະແຫຼງການກັບຜູ້ມີອໍານາດໃນການຄວບຄຸມ ວ່າພວກຂ້າພະເຈົ້າໄດ້ປະຕິບັດຕາມທຸກຂໍ້ກໍານົດດ້ານກິດຈັນຍາບັນທີ່ກໍານົດເຊິ່ງກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສໍາພັນ ແລະ ບັນຫາອື່ນໆທີ່ອາດມີເຫດຜົນຕໍ່ກັບຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າມີ.

ຈາກການປຶກສາຫາລືບັນຫາກັບຜູ້ມີອໍານາດໃນການຄວບຄຸມ ພວກຂ້າພະເຈົ້າໄດ້ພິຈາລະນາບັນຫາອື່ນທີ່ມີສາລະສໍາຄັນໃນການກວດສອບເອກະສານລາຍງານການເງິນທີ່ຖືກແປງຄ່າເປັນກີບຂອງປີປັດຈຸບັນ ແລະ ບັນຫາສໍາຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍບັນຫາເຫຼົ່ານີ້ໃນບົດລາຍງານຂອງນັກກວດສອບອິດສະຫຼະ ເວັ້ນແຕ່ມີກົດໝາຍ ຫຼື ຂໍ້ບັງຄັບໃນການຫ້າມເປີດເຜີຍກ່ຽວກັບບັນຫາໃດໜຶ່ງຕໍ່ສາທາລະນະ ຫຼື ເມື່ອໃນສະຖານະການທີ່ພົບຍາກ ພວກຂ້າພະເຈົ້າພິຈາລະນາວ່າບໍ່ຄວນສື່ສານບັນຫາໃດໜຶ່ງໃນບົດລາຍງານຂອງພວກຂ້າພະເຈົ້າ ເນື່ອງຈາກວ່າຜົນກະທົບໃນແງ່ລົບທີ່ຕາມມາອາດຈະສົ່ງຜົນຫຼາຍກວ່າຜົນປະໂຫຍດຂອງສາທາລະນະທີ່ເກີດຈາກການສື່ສານດັ່ງກ່າວ.

ທ່ານ ວັນ ເລ
ຮຸ້ນສ່ວນ
ໃບອະນຸຍາດດໍາເນີນການກວດສອບເລກທີ 018/LCPAA-APT-2019
ນະຄອນຫຼວງວຽງຈັນ, ສປປ ລາວ
20 ກຸມພາ 2025



A member firm of Ernst & Young Global Limited

## ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານຖານະການເງິນທີ່ຖືກແປງຄ່າເປັນເງິນກີບ
ມະວັນທີ 31 ທັນວາ 2024

| | *ບົດອະທິບາຍ ເລກທີ* | *31 ທັນວາ 2024 ກີບ* | *31 ທັນວາ 2023 ກີບ* |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ທຽບເທົ່າເງິນສົດ | 4 | 18,620,031,453 | 97,622,510,973 |
| ເງິນຝາກໄລຍະສັ້ນມີກຳນົດ | 5 | 31,899,172,500 | - |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 6 | 9,506,989,027 | 5,158,247,340 |
| ເຄື່ອງໃນສາງ | 7 | 492,761,257,919 | 484,347,770,402 |
| ຊັບສິນໝູນວຽນອື່ນໆ | 8 | 37,382,604,013 | 38,829,875,578 |
| **ລວມຊັບສິນໝູນວຽນ** | | **590,170,054,912** | **625,958,404,293** |
| **ຊັບສິນບໍ່ໝູນວຽນ** | | | |
| ຊັບສິນພວມຊື້ ແລະ ພວມກໍ່ສ້າງ | 9.1 | 86,445,154,337 | 51,471,515,161 |
| ຊັບສິນບັດຄົງທີ່ມີຕົວຕົນ | 9.2 | 426,732,466,152 | 411,083,693,711 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 9.3 | 698,577,813,801 | 709,109,081,833 |
| ຊັບສິນບໍ່ໝູນວຽນອື່ນໆ | 10 | 14,202,483,420 | 8,730,500,190 |
| **ລວມຊັບສິນບໍ່ໝູນວຽນ** | | **1,225,957,917,710** | **1,180,394,790,895** |
| **ລວມຊັບສິນ** | | **1,816,127,972,622** | **1,806,353,195,188** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານຖານະການເງິນທີ່ຖືກແປງຄ່າເປັນເງິນກີບ (ຕໍ່)
ນະວັນທີ 31 ທັນວາ 2024

| | *ບົດອະທິບາຍ ເລກທີ* | *31 ທັນວາ 2024 ກີບ* | *31 ທັນວາ 2023 ກີບ* |
|---|---|---|---|
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນໝູນວຽນ** | | | |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 11 | 58,576,579,443 | 65,565,702,900 |
| ເງິນກູ້ເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 12 | 67,390,661,817 | 54,694,740,214 |
| ເງິນກູ້ຢືມໄລຍະຍາວ - ສ່ວນໝູນວຽນ | 12 | 24,031,020,120 | 26,353,809,980 |
| ໜີ້ຕ້ອງສົ່ງອາກອນກຳໄລ | 24 | 11,293,089,759 | 12,359,633,801 |
| ເງິນມັດຈຳຈາກລູກຄ້າ | 14 | 4,342,244,971 | 2,952,230,119 |
| ໜີ້ສິນໝູນວຽນອື່ນໆ | 15 | 19,728,450,938 | 19,538,533,683 |
| **ລວມໜີ້ສິນໝູນວຽນ** | | **185,362,047,048** | **181,464,650,697** |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວ - ສ່ວນບໍ່ໝູນວຽນ | 12 | 35,347,370,505 | 48,063,332,611 |
| ຮຸ້ນກູ້ | 13 | 66,233,252,250 | 62,116,071,600 |
| **ລວມໜີ້ສິນບໍ່ໝູນວຽນ** | | **101,580,622,755** | **110,179,404,211** |
| **ລວມໜີ້ສິນ** | | **286,942,669,803** | **291,644,054,908** |
| **ທຶນ** | | | |
| ທຶນຈົດທະບຽນ | 16 | 330,000,000,000 | 330,000,000,000 |
| ສ່ວນເພີ່ມມູນຄ່າຮຸ້ນ | 16 | 24,735,724,722 | 24,735,724,722 |
| ຄັງສຳຮອງຕາມລະບຽບການ | | 26,027,348,763 | 20,181,970,566 |
| ຄັງສຳຮອງອື່ນໆ | | 25,777,348,763 | 19,931,970,566 |
| ກຳໄລສະສົມ | | 277,057,393,458 | 250,094,367,876 |
| ຜົດດ່ຽງຈາກການແປງຄ່າ | | 845,587,487,113 | 869,765,106,550 |
| **ລວມທຶນ** | | **1,529,185,302,819** | **1,514,709,140,280** |
| **ລວມໜີ້ສິນ ແລະ ທຶນ** | | **1,816,127,972,622** | **1,806,353,195,188** |

ທ່ານ ອັດດາພາ ສຸດຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸດຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ກຸມພາ 2025

# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານຜົນການດໍາເນີນງານທີ່ຖືກແປງຄ່າເປັນເງິນກີບ
ສໍາລັບປີສິ້ນສຸດ 31 ທັນວາ 2024

| | *ບົດອະທິບາຍ ເລກທີ* | *2024 ກີບ* | *2023 ກີບ* |
|---|---|---|---|
| ລາຍຮັບຈາກການຂາຍ | 17 | 889,136,410,513 | 767,139,816,343 |
| ຕົ້ນທຶນການຂາຍ | 18 | (662,599,988,428) | (577,868,541,221) |
| **ກໍາໄລຂັ້ນຕົ້ນ** | | **226,536,422,085** | **189,271,275,122** |
| ລາຍຮັບອື່ນໆ | 19 | 3,674,805,642 | 3,775,988,159 |
| ຄ່າໃຊ້ຈ່າຍໃນການຂາຍ | 20 | (102,634,073,576) | (81,245,888,252) |
| ລາຍຈ່າຍບໍລິຫານ | 21 | (46,358,197,235) | (31,339,965,443) |
| ລາຍຈ່າຍການເງິນ | 22 | (7,185,538,145) | (10,029,444,797) |
| (ຂາດທຶນ)/ກໍາໄລສຸດທິຈາກອັດຕາແລກປ່ຽນ | 23 | (2,910,643,490) | 1,160,130,886 |
| | | **(155,413,646,804)** | **(117,679,179,447)** |
| **ກໍາໄລກ່ອນອາກອນ** | | **71,122,775,281** | **71,592,095,675** |
| ລາຍຈ່າຍອາກອນກໍາໄລ | 24 | (12,668,993,305) | (10,792,859,692) |
| **ກໍາໄລສຸດທິໃນປີ** | | **58,453,781,976** | **60,799,235,983** |
| **ກໍາໄລພື້ນຖານຕໍ່ຮຸ້ນ** | **25** | **354** | **368** |

ທ່ານ ວັດຄານາ ສຸດຄະບັນດິດ
ຜູ້ອໍານວຍການໃຫຍ່

ທ່ານ ພັນໃນສາ ສຸດຄະບັນດິດ
ຜູ້ອໍານວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ກຸມພາ 2025

# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ຖືກແປງຄ່າເປັນເງິນກີບ
ສໍາລັບປີສິ້ນສຸດ 31 ທັນວາ 2024

| | *ທຶນຈົດທະບຽນ* | *ສ່ວນເພີ່ມມູນຄ່າຮຸ້ນ* | *ຄັງສໍາຮອງ ຕາມລະບຽບການ* | *ຄັງສໍາຮອງອື່ນໆ* | *ກໍາໄລສະສົມ* | *ຜົດດ່ຽງຈາກ ການແປງຄ່າ* | *ລວມ* |
|---|---|---|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຍອດເຫຼືອ ນະວັນທີ 1 ມັງກອນ 2023** | **330,000,000,000** | **24,735,724,722** | **14,102,046,968** | **13,852,046,968** | **217,954,979,089** | **548,444,251,473** | **1,149,089,049,220** |
| ກໍາໄລສຸດທິໃນປີ | - | - | - | - | 60,799,235,983 | - | 60,799,235,983 |
| ຄັງສໍາຮອງຕາມລະບຽບການ | - | - | 6,079,923,598 | - | (6,079,923,598) | - | - |
| ຄັງສໍາຮອງອື່ນໆ | - | - | - | 6,079,923,598 | (6,079,923,598) | - | - |
| ຈ່າຍເງິນປັນຜົນ | - | - | - | - | (16,500,000,000) | - | (16,500,000,000) |
| ຜົດດ່ຽງຈາກການແປງຄ່າ | - | - | - | - | - | 321,320,855,077 | 321,320,855,077 |
| **ຍອດເຫຼືອ ນະວັນທີ 31 ທັນວາ 2023** | **330,000,000,000** | **24,735,724,722** | **20,181,970,566** | **19,931,970,566** | **250,094,367,876** | **869,765,106,550** | **1,514,709,140,280** |
| **ຍອດເຫຼືອ ນະວັນທີ 1 ມັງກອນ 2024** | **330,000,000,000** | **24,735,724,722** | **20,181,970,566** | **19,931,970,566** | **250,094,367,876** | **869,765,106,550** | **1,514,709,140,280** |
| ກໍາໄລສຸດທິໃນປີ | - | - | - | - | 58,453,781,976 | - | 58,453,781,976 |
| ຄັງສໍາຮອງຕາມລະບຽບການ | - | - | 5,845,378,197 | - | (5,845,378,197) | - | - |
| ຄັງສໍາຮອງອື່ນໆ | - | - | - | 5,845,378,197 | (5,845,378,197) | - | - |
| ຈ່າຍເງິນປັນຜົນ (*ບົດອະທິບາຍເລກທີ 26*) | - | - | - | - | (19,800,000,000) | - | (19,800,000,000) |
| ຜົດດ່ຽງຈາກການແປງຄ່າ | - | - | - | - | - | (24,177,619,437) | (24,177,619,437) |
| **ຍອດເຫຼືອ ນະວັນທີ 31 ທັນວາ 2024** | **330,000,000,000** | **24,735,724,722** | **26,027,348,763** | **25,777,348,763** | **277,057,393,458** | **845,587,487,113** | **1,529,185,302,819** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ວັດຖານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່
ນະຄອນຫຼວງວຽງຈັນ, ສປປ ລາວ
20 ກຸມພາ 2025

ທ່ານ ພັນໃນລາ ສຸຄະບັນດິດ
ຜູ້ອໍານວຍການຝ່າຍການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານກະແສເງິນສົດທີ່ຖືກແປງຄ່າເປັນເງິນກີບ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2024

| | *ບົດອະທິບາຍ ເລກທີ* | *2024 ກີບ* | *2023 ກີບ* |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ** | | | |
| **ກຳໄລພາຍໃນປີ** | | **71,122,775,281** | **71,592,095,675** |
| *ດັດແກ້ສຳລັບ:* | | | |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 9.2 | 28,709,027,609 | 26,264,684,632 |
| ຄ່າເສື່ອມມູນຄ່າພາຍໃນປີ | 9.3 | - | 276,619 |
| ກຳໄລຈາກການສະສາງຊັບສິນ, ອາຄານ ແລະ ອຸປະກອນ | | 69,791,733 | 241,033,613 |
| ກຳໄລ/(ຂາດທຶນ)ຈາກອັດຕາແລກປ່ຽນທີ່ບໍ່ທັນເກີດຂຶ້ນຈິງ | 23 | 1,258,575,646 | 15,766,091,931 |
| ລາຍຈ່າຍດອກເບ້ຍ | 22 | 6,380,811,909 | 7,288,621,421 |
| ສຳຮອງເງິນແຮເຄື່ອງໃນສາງເຄື່ອນໄຫວຊ້າ ແລະ ລ້າສະໄໝ | | 1,369,945,340 | (1,968,627,461) |
| ການເກັບຄືນຂອງເງິນແຮໜີ້ສົງໄສຈະເສຍ | 21 | (1,975,652,644) | (1,839,104,424) |
| ເງິນແຮສຳລັບການສົ່ງຄືນສິນຄ້າຂອງໜີ້ຕ້ອງຮັບ | | (111,485,582) | 721,179,343 |
| *ການປ່ຽນແປງຂອງທຶນໝູນວຽນ:* | | | |
| ປ່ຽນແປງໃນໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (2,632,301,159) | 3,671,661,218 |
| ປ່ຽນແປງໃນເຄື່ອງໃນສາງ | | (17,620,665,713) | 30,992,773,852) |
| ປ່ຽນແປງໃນຊັບສິນໝູນວຽນ ແລະ ຊັບສິນບໍ່ໝູນວຽນ | | (4,926,270,000) | 4,634,987,252 |
| ປ່ຽນແປງໃນໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (6,152,109,870) | (2,827,444,258) |
| ປ່ຽນແປງໃນເງິນມັດຈຳຈາກລູກຄ້າ | | 4,521,621,849 | 396,759,860 |
| ປ່ຽນແປງໃນໜີ້ສິນໝູນວຽນອື່ນໆ | | 1,133,883,510 | 1,198,248,403 |
| ຈ່າຍອາກອນກຳໄລ | | (10,782,859,692) | (10,944,957,710) |
| **ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການດຳເນີນງານ** | | **70,365,088,217** | **145,188,279,966** |
| **ກິດຈະກຳການລົງທຶນ** | | | |
| ການລົງທຶນໃນເງິນຝາກມີກຳນົດ | 5 | (31,899,172,500) | - |
| ຊື້ທີ່ດິນ, ອາຄານ ແລະ ອຸປະກອນ ແລະ ຊັບສິນພວມກໍ່ສ້າງ | | (86,385,421,366) | (45,475,264,153) |
| ຊື້ຊອບແວ ຄອມພິວເຕີ້ | | - | (216,925,978) |
| ການລ້າງດິນ, ອາຄານ ແລະ ອຸປະກອນ ແລະ ຊັບສິນພວມກໍ່ສ້າງ | | - | 245,388,000 |
| **ເງິນສົດສຸດທິ ໃຊ້ໄປສຳລັບການລົງທຶນ** | | **(118,284,593,866)** | **(45,446,802,131)** |
| **ກິດຈະກຳການເງິນ** | | | |
| ເພີ່ມຂຶ້ນຈາກການກູ້ຢືມໄລຍະສັ້ນ | | 357,300,100,406 | 481,773,255,542 |
| ການຊຳລະເງິນຄືນຈາກການກູ້ຢືມທະນາຄານ | | (360,285,320,801) | (553,376,221,402) |
| ເພີ່ມຂຶ້ນຈາກການອອກຮຸ້ນກູ້ | | - | 62,116,071,600 |
| ຈ່າຍດອກເບ້ຍ | | (8,909,506,025) | (7,246,570,390) |
| ຈ່າຍເງິນປັນຜົນ | 26 | (19,800,000,000) | (16,500,000,000) |
| **ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການການເງິນ** | | **(31,694,726,420)** | **(33,233,464,650)** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານກະແສເງິນສົດທີ່ຖືກແປງຄ່າເປັນເງິນກີບ (ຕໍ່)
ສຳລັບປີສິ້ນສຸດວັນທີ 31 ທັນວາ 2024

| | ບົດອະທິບາຍ ເລກທີ | 2024 ກີບ | 2023 ກີບ |
|---|---|---|---|
| **ເງິນສົດສຸດທິເພີ່ມຂຶ້ນ/ (ຫຼຸດລົງ)** | | (79,614,232,069) | 66,508,013,185 |
| ເງິນສົດໃນຕົ້ນປີ | | 97,622,510,973 | 38,288,451,914 |
| ຜົດດ່ຽງຈາກການແປງຄ່າ | | (1,417,212,879) | (7,173,954,126) |
| **ເງິນສົດໃນທ້າຍປີ** | 4 | **16,591,066,025** | **97,622,510,973** |

ທ່ານ ອັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ກຸມພາ 2025

## 1. ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ (ຕລຊ) ທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ. ບໍລິສັດດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ສະບັບລ່າສຸດເລກທີ 3271/ຈອທ, ລົງວັນທີ 29 ສິງຫາ 2024. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໂລ, ສຸຂະພັນ, ນໍ້າສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນໍ້າ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ.

ໂຄງສ້າງການຖືຮຸ້ນສ່ວນຂອງບໍລິສັດນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

| *ຂາຮຸ້ນ* | *ຈຳນວນຮຸ້ນ (ມູນຄ່າຮຸ້ນ: 2,000 ກີບ/ຮຸ້ນ)* | *ອັດຕາສ່ວນຮ້ອຍຂອງຮຸ້ນ* |
|---|---|---|
| ທ່ານ ວັດດານາ ສຸຄະບັນດິດ (*) | 28,524,440 | 17.29% |
| ທ່ານ ພັນໂນລາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານ ກິດສະດາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານນາງ ປະພັດສອນ ສຸຄະບັນດິດ (*) | 840,000 | 0.51% |
| ທ່ານນາງ ວຽງດາລາ ບຸບຜາ (*) | 840,000 | 0.51% |
| ທ່ານ ອານຸສອນ ອຸ່ນໄຕ (*) | 28,000 | 0.02% |
| ທ່ານ ບຸນທະວີ ສີມມາໄຊ (*) | 22,400 | 0.01% |
| ທ່ານ ສຸວັນນີ ສີສົມໃຈ (*) | 28,000 | 0.02% |
| ທ່ານ ໄຊສັງຄົມ ຊຸ່ມມະນີວົງ (*) | 28,000 | 0.02% |
| Global House International Limited | 56,000,000 | 33.94% |
| ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ | 25,000,000 | 15.15% |
| | **165,000,000** | |

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%.

ທຶນຈົດທະບຽນເບື້ອງຕົ້ນຂອງບໍລິສັດແມ່ນ 330,000,000,000 ກີບ. ທຶນຊຳລະຕົວຈິງຂອງບໍລິສັດມາຮອດວັນທີ 31 ທັນວາ 2024 ແມ່ນ 330,000,000,000 ກີບ (31 ທັນວາ 2023: 330,000,000,000 ກີບ).

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ບ້ານເລກທີ 366 ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດມີ 8 ສາຂາໃນ ສປປ ລາວ ໃນນັ້ນ 3 ສາຂາຕັ້ງຢູ່ທີ່ ນະຄອນຫຼວງວຽງຈັນ ແລະ 5 ສາຂາຕັ້ງຢູ່ທີ່ແຂວງອື່ນໆ ດັ່ງລາຍລະອຽດລຸ່ມນີ້:

- ສາຂາ ໂພນຕ້ອງສະຫວາດ ສະຖານທີ່ຕັ້ງຢູ່ບ້ານເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ;
- ສາຂາ ສີໃຄ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ໂຊກໃຫຍ່ ສະຖານທີ່ຕັ້ງຢູ່ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ປາກຊັນ ສະຖານຕັ້ງຢູ່ຖະໜົນ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ;
- ສາຂາ ທ່າແຂກ ສະຖານທີ່ຕັ້ງຢູ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ;

1. **ຂໍ້ມູນທົ່ວໄປ** (ຕໍ່)

- ສາຂາ ສະຫວັນນະເຂດ ສະຖານທີ່ຕັ້ງຢູ່ ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ເມືອງ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ;
- ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈໍາປາສັກວ
- ສາຂາ ຫຼວງພະບາງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ພອນໄຊ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ.

ພ້ອມນີ້, ບໍລິສັດກໍຍັງມີ 3 ສາຂາ ທີ່ພວມກໍ່ສ້າງດັ່ງນີ້:

- ສາຂາ ສີມສະໝຸກ ສະຖານທີ່ຕັ້ງຢູ່ ຖະໜົນ T5, ບ້ານ ສີມສະໝຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ;
- ສາຂາ ອຸດົມໄຊ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ນາສ້າວ, ເມືອງ ໄຊ, ແຂວງ ອຸດົມໄຊວ
- ສາຂາ ວັງວຽງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ຂັນໝາກ, ເມືອງ ວັງວຽງ, ແຂວງ ວຽງຈັນ.

ຈໍານວນພະນັກງານຂອງບໍລິສັດນະວັນທີ 31 ທັນວາ 2024 ແມ່ນ 733 ຄົນ (31 ທັນວາ 2023: 687 ຄົນ ).

2. **ພື້ນຖານໃນການກະກຽມບົດລາຍງານ**

2.1 *ນະໂຍບາຍການບັນຊີ*

ອີງຕາມກົດໝາຍການບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ, ລວມທັງບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອນນໍາໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນ. ອີງຕາມແຈ້ງການທາງລັດຖະການ ສະບັບເລກທີ 1137/ກງ, ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາການນໍາໃຊ້ IFRS ໄປຈົນເຖິງວັນທີ 1 ມັງກອນ 2026. ເຊິ່ງຄະນະບໍລິຫານກໍາລັງກະກຽມການນໍາໃຊ້ IFRSs ອີງຕາມການແຈ້ງການດັ່ງກ່າວ.

2.2 *ຈຸດປະສົງຂອງການກະກຽມເອກະສານລາຍງານເງິນທີ່ຖືກແປງຄ່າເປັນເງິນກີບ*

ບໍລິສັດນໍາໃຊ້ສະກຸນເງິນບາດເປັນສະກຸນເງິນທາງບັນຊີ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 2.4. ບໍລິສັດໄດ້ມີການກະກຽມເອກະສານລາຍງານການເງິນສະກຸນເງິນບາດ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ໃນວັນທີ 20 ກຸມພາ 2025.

ນອກຈາກເອກະສານລາຍງານການເງິນສະກຸນເງິນບາດແລ້ວນັ້ນ, ບໍລິສັດຍັງໄດ້ມີກະກຽມເອກະສານລາຍງານການເງິນເພື່ອນໍາສະເໜີເປັນສະກຸນເງິນກີບ (ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ) ໂດຍການແປງຄ່າຈາກເອກະສານລາຍງານການເງິນສະກຸນເງິນບາດ. ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນສະກຸນເງິນກີບແມ່ນເພື່ອຊ່ວຍບໍລິສັດໃນການນໍາສົ່ງເອກະສານລາຍງານການເງິນໃຫ້ກັບຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຮຸ້ນ.

ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນສະກຸນເງິນກີບແມ່ນຖືກກະກຽມໂດຍອີງໃສ່ເອກະສານລາຍງານການເງິນສະກຸນເງິນບາດທີ່ໄດ້ກະກຽມໂດຍອີງຕາມບົດອະທິບາຍຊ້ອນທ້າຍເລກທີ 3 ຂອງເອກະສານລາຍງານການເງິນ ສະກຸນເງິນບາດ ແລະ ຂໍ້ກໍານົດກົດລະບຽບທີ່ກ່ຽວຂ້ອງກັບການກະກຽມ ແລະ ລາຍງານເອກະສານລາຍງານການເງິນ.

## 2. ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

### 2.2 *ຈຸດປະສົງຂອງການກະກຽມເອກະສານລາຍງານເງິນທີ່ຖືກແປງຄ່າເປັນເງິນກີບ* (ຕໍ່)

ດັ່ງນັ້ນ, ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນສະກຸນເງິນກີບ ບໍ່ໄດ້ຖືກອອກແບບສໍາລັບການນໍາໃຊ້ສໍາລັບບຸກຄົນອື່ນທີ່ບໍ່ໄດ້ຮັບຂໍ້ມູນກ່ຽວກັບຫຼັກການ, ວິທີ ແລະ ການປະຕິບັດທາງດ້ານການບັນຊີຂອງປະເທດລາວ ແລະ ນອກຈາກນັ້ນ, ຍັງບໍ່ມີຈຸດປະສົງໃນການນໍາສະເໜີ ໃບລາຍງານຖານະທາງການເງິນ ແລະ ໃບລາຍງານຜົນການດໍາເນີນງານ ແລະ ໃບລາຍງານກະແສເງິນສົດຂອງບໍລິສັດໂດຍອີງຕາມຫຼັກການ ແລະ ການປະຕິບັດທາງບັນຊີທີ່ຖືກຍອມຮັບໂດຍທົ່ວໄປໃນປະເທດອື່ນນອກເໜືອຈາກປະເທດລາວ.

### 2.3 *ປີການບັນຊີ*

ປີການບັນຊີຂອງບໍລິສັດແມ່ນເລີ່ມໃນວັນທີ 1 ມັງກອນ ແລະສິ້ນສຸດໃນວັນທີ 31 ທັນວາ.

### 2.4 *ສະກຸນເງິນທາງບັນຊີ*

ບໍລິສັດນໍາໃຊ້ສະກຸນເງິນບາດໃນການບັນທຶກທາງບັນຊີ ເນື່ອງຈາກເປັນສະກຸນເງິນຫຼັກທີ່ບໍລິສັດໃຊ້ໃນການເຮັດທຸລະກໍາສ່ວນໃຫຍ່ທັງການຊື້ ແລະ ການຊໍາລະສິນຄ້າ. ທຸກມູນຄ່າທີ່ນໍາສະເໜີແມ່ນເປັນສະກຸນເງິນບາດນອກຈາກທີ່ໄດ້ມີການລະບຸອື່ນໆ.

### 2.5 *ສະກຸນເງິນເພື່ອການນໍາສະເໜີ*

ເນື່ອງຈາກວັດຖຸປະສົງຂອງການລາຍງານໃຫ້ທາງຕະຫຼາດຫຼັກຊັບລາວ, ບໍລິສັດຈຶ່ງໄດ້ມີການກະກຽມເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບເພື່ອການນໍາສະເໜີ.

### 2.6 *ດຸນພິນິດ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສໍາຄັນ*

ບໍລິສັດໄດ້ມີການຕັ້ງສົມມຸດຖານ ແລະ ການຄາດຄະເນໂດຍຄໍານຶງເຖິງເຫດການທີ່ຈະເກີດຂຶ້ນໃນອະນາຄົດ. ຜົນຂອງການຄາດຄະເນອາດຈະບໍ່ທຽບເທົ່າກັບຈໍານວນຕົວຈິງທີ່ຈະເກີດຂຶ້ນໃນອານາຄົດ. ການຄາດຄະເນ ແລະ ການຕັ້ງສົມມຸດຖານ ຈະມີຄວາມສ່ຽງທີ່ຕ້ອງເຮັດໃຫ້ມີການດັດແກ້ ສໍາລັບຈໍານວນທີ່ຕັ້ງປະມານການໄວ້ຂອງຊັບສິນ ແລະ ໜີ້ສິນ ໃນປີການບັນຊີຕໍ່ໄປຈາກທີ່ເປີດເຜີຍເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

*ອາກອນ*

ຄວາມບໍ່ແນ່ນອນໃນການຕີຄວາມຫມາຍຂອງລະບຽບການພາສີອາກອນທີ່ຊັບຊ້ອນ, ການປ່ຽນແປງກົດໝາຍພາສີອາກອນ, ແລະ ຈໍານວນ ແລະ ເວລາຂອງລາຍຮັບທຸລະກິດໃນອະນາຄົດ. ເນື່ອງຈາກລັກສະນະໄລຍະຍາວ ແລະ ຄວາມຊັບຊ້ອນຂອງສັນຍາທີ່ມີຢູ່ແລ້ວ, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ການສົມມຸດຕິຖານທີ່ໄດ້ເຮັດ, ຫຼື ການປ່ຽນແປງໃນອະນາຄົດຂອງສົມມຸດຕິຖານດັ່ງກ່າວ, ອາດຈະຈໍາເປັນຕ້ອງມີການດັດແກ້ໃນອະນາຄົດຕໍ່ລາຍຮັບທຸລະກິດ ແລະ ລາຍຈ່າຍທາງອາກອນທີ່ຖືກບັນທຶກໄວ້ແລ້ວ. ບໍລິສັດໄດ້ບັນທຶກເງິນແຮ ອີງໃສ່ການຕັ້ງປະມານການທີ່ສົມເຫດສົມຜົນ ສໍາລັບຜົນສະທ້ອນທີ່ເປັນໄປໄດ້ຂອງການກວດສອບໂດຍກົມພາສີ-ອາກອນຂອງ ສປປ ລາວ. ຈໍານວນປະມານການດັ່ງກ່າວແມ່ນອີງໃສ່ປັດໄຈຕ່າງໆ ເຊັ່ນ: ອີງຕາມການກວດສອບໂດຍກົມພາສີ-ອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງກັນຂອງຫົວໜ່ວຍທຸລະກິດ ແລະ ກົມພາສີ-ອາກອນ ຜູ້ຮັບຜິດຊອບ. ຄວາມແຕກຕ່າງໃນການຕີຄວາມໝາຍດັ່ງກ່າວອາດເກີດຂຶ້ນໄດ້ກັບເງື່ອນໄຂທີ່ເປັນຢູ່ໃນ ສປປ ລາວ.

## 2. ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

### 2.6 *ນະໂຍບາຍການບັນຊີ* (ຕໍ່)

*ຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ*

ບໍລິສັດໄດ້ກໍານົດສໍາຮອງໜີ້ສົງໄສຈະສູນທີ່ສະທ້ອນໃຫ້ເຫັນເຖິງຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບຈາກການຄ້າ, ທີ່ກ່ຽວຂ້ອງກັບເງິນສໍາຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ. ການສໍາຮອງໜີ້ສົງໄສຈະສູນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຂອງບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານພິຈາລະນາປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າ ແລະ ການຜິດນັດໃນການຊໍາລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

*ເງິນແຮສໍາລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງ*

ບໍລິສັດໄດ້ປະເມີນການເງິນແຮສໍາລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິຂອງເຄື່ອງໃນສາງ. ເງິນແຮສໍາລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງແມ່ນໄດ້ສະແດງການວິເຄາະຄວາມລ້າສະໄໝຂອງສິນຄ້າ ແລະການຄາດຄະການທີ່ກ່ຽວກັບການຂາຍສິນຄ້າໃນອະນາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງ ແມ່ນຈະຖືກຕັດອອກທາງບັນຊີເມື່ອຮັບຮູ້ວ່າສິນຄ້າດັ່ງກ່າວແມ່ນໄດ້ລ້າສະໄໝ ຫຼື ບໍ່ສາມາດຂາຍໄດ້.

## 3. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

### 3.1 *ການແປງຄ່າຈາກເອກະສານລາຍງານການເງິນສະກຸນເງິນບາດ ມາເປັນ ເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບ*

ບໍລິສັດໄດ້ມີການແປງຄ່າເອກະສານລາຍງານການເງິນ ຈາກສະກຸນເງິນບາດມາເປັນສະກຸນເງິນກີບ "ກີບ" ໂດຍການປະຕິບັດຕາມຂັ້ນຕອນລຸ່ມນີ້:

- ລາຍການໃນໃບລາຍງານຖານະທາງການເງິນນະວັນທີ 31 ທັນວາ 2024 ທີ່ຖືກແປງຄ່າເປັນເງິນກີບ ແມ່ນຖືກແປງຄ່າໂດຍນໍາໃຊ້ອັດຕາແລກປ່ຽນມະມື້ປິດບັນຊີຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເຊິ່ງແມ່ນ 629.18 ກີບ/ບາດ ຍົກເວັ້ນລາຍການຂອງທຶນຈົດທະບຽນ, ສ່ວນເພີ່ມມູນຄ່າຮຸ້ນ, ຄັງສໍາຮອງຕາມລະບຽບການ, ຄັງສໍາຮອງອື່ນໆ ທີ່ຖືກແປງຄ່າດ້ວຍອັດຕາແລກປ່ຽນເດີມຂອງບໍລິສັດ;
- ລາຍການໃນໃບລາຍງານຜົນໄດ້ຮັບທີ່ຖືກແປງຄ່າເປັນເງິນກີບ ແລະ ໃບລາຍງານກະແສເງິນສົດທີ່ຖືກແປງຄ່າເປັນເງິນກີບສໍາລັບປີທີ່ສິ້ນສຸດນະວັນທີ 31 ທັນວາ 2024 ແມ່ນຖືກແປງຄ່າໂດຍນໍາໃຊ້ອັດຕາແລກປ່ຽນສະເລ່ຍພາຍໃນປີຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເຊິ່ງແມ່ນ 655.14 ກີບ/ບາດ;
- ສ່ວນຜິດດ່ຽງທັງໝົດຈາກອັດຕາແລກປ່ຽນທີ່ເກີດຈາກການແປງຄ່າ ຈາກສະກຸນເງິນບາດເປັນສະກຸນເງິນກີບ ແມ່ນຖືກນໍາສະເໜີໃນລາຍການສ່ວນຜິດດ່ຽງຈາກການແປງຄ່າໃນໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ.

### 3.2 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດ ລວມມີເງິນສົດໃນຄັງ, ເງິນຝາກທະນາຄານ ແລະ ເງິນຝາກມີກໍານົດໄລຍະສັ້ນອື່ນໆທີ່ມີໄລຍະເວລາຄົບກໍານົດ ເດືອນ ຫຼື ຕໍ່າກວ່າ, ການລົງທຶນທີ່ມີສະພາບຄ່ອງສູງ ແມ່ນສາມາດປ່ຽນແປງເປັນເງິນສົດ ແລະ ມີຄວາມສ່ຽງໜ້ອຍທີ່ຈະມີການປ່ຽນແປງມູນຄ່າໂດຍມີໄລຍະເວລາຄົບກໍານົດ 3 ເດືອນ ຫຼື ຕໍ່າກວ່າ. ເງິນເບີກເກີນບັນຊີແມ່ນຖືວ່າເປັນກິດຈະກໍາທາງການເງິນທີ່ຄ້າຍຄືກັບການກູ້ຢືມ. ເຖິງຢ່າງໃດກໍຕາມ, ຖ້າຫາກບໍລິສັດຊໍາລະຄືນຕາມຄວາມຕ້ອງການ ແລະປະກອບເປັນພາກສ່ວນໜຶ່ງທີ່ສໍາຄັນຂອງການບໍລິຫານເງິນສົດຂອງບໍລິສັດ, ເງິນເບີກເກີນບັນຊີແມ່ນສ່ວນປະກອບຂອງເງິນສົດ ແລະ ທຽບເທົ່າເງິນສົດ.

**3. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)**

**3.3 *ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ***

ໜີ້ຕ້ອງຮັບການຄ້າ ແມ່ນຖືກຮັບຮູ້ ແລະ ບັນທຶກ ຕາມຈໍານວນຂອງໃບເກັບເງິນເດີມ ແລະ ປະເມີນມູນຄ່າພາຍຫຼັງດ້ວຍຍອດຄົງເຫຼືອທີ່ຫັກດ້ວຍເງິນແຮສໍາລັບໜີ້ສົງໄສ.

*ເງິນແຮສໍາລັບໜີ້ສົງໄສຈະເສຍ*

ການຄາດຄະເນຕາມເງິນແຮສໍາລັບໜີ້ສົງໄສຈະເສຍແມ່ນ ອີງໃສ່ຈໍານວນວັນທີ່ເກີນກໍານົດຊໍາລະໂດຍໃຊ້ອັດຕາເງິນແຮດັ່ງຕໍ່ໄປນີ້:

| *ຈໍານວນວັນທີ່ເກີນກໍານົດຊໍາລະ* | *ອັດຕາເງິນແຮ* |
|---|---|
| 0 – 180 ວັນ | 0% |
| ຫຼາຍກວ່າ 180 ວັນ | 100% |

ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງຍອດເຫຼືອຂອງເງິນແຮສໍາລັບໜີ້ສົງໄສຈະເສຍແມ່ນໄດ້ຖືກບັນທຶກເຂົ້າໃນລາຍຈ່າຍບໍລິຫານຂອງໃບລາຍງານຜົນການດໍາເນີນງານພາຍໃນປີ.

**3.4 *ເຄື່ອງໃນສາງ***

ເຄື່ອງໃນສາງສະແດງອອກຕາມລາຄາທີ່ຕໍ່າກວ່າລະຫວ່າງລາຄາຕົ້ນທຶນ ແລະ ມູນຄ່າຂາຍອອກໄດ້ສຸດທິ. ຕົ້ນທຶນ ໄດ້ນໍາໃຊ້ວິທີການຄິດໄລ່ແບບສະເລ່ຍຖ່ວງນໍ້າໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງເຊັ່ນ: ຄ່າທໍານຽມທີ່ກ່ຽວຂ້ອງກັບການນໍາເຂົ້າ ແລະ ຄ່າຂົນສົ່ງ, ຫັກດ້ວຍສ່ວນຫຼຸດທີ່ໄດ້ຮັບ, ຄັງສໍາຮອງ ຫຼື ສ່ວນຫຼຸດການຄ້າຈາກຜູ້ສະໜອງ.

*ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້*

ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ("NRV") ຖືກປະເມີນດ້ວຍລາຄາຂາຍສິນຄ້າ ໃນຂະນະທີ່ດໍາເນີນທຸລະກິດຕາມປົກກະຕິ ຫັກໃຫ້ ຕົ້ນທຶນປ່ຽນແປງອື່ນໆທີ່ກ່ຽວຂ້ອງກັບການຂາຍ.

*ເງິນແຮສໍາລັບສິນຄ້າລ້າສະໄໝ*

ເງິນແຮສໍາລັບສິນຄ້າໃນສາງ ແມ່ນໄດ້ສ້າງຂຶ້ນສໍາລັບການຄາດຄະເນຄວາມສູນເສຍທີ່ເກີດຂຶ້ນເນື່ອງຈາກເກີດມີຄ່າເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງສິນຄ້າໃນສາງທີ່ເປັນຂອງບໍລິສັດໂດຍອີງໃສ່ຫຼັກຖານທີ່ສົມເຫດສົມຜົນຂອງຄ່າເສື່ອມມູນຄ່າ ນະວັນທີຂອງໃບລາຍງານຖານະການເງິນພາຍໃນປີ.

ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງຍອດເຫຼືອເງິນແຮ ແມ່ນໄດ້ຖືກບັນທຶກເຂົ້າໃນຕົ້ນທຶນສິນຄ້າທີ່ຂາຍໃນໃບລາຍງານຜົນການດໍາເນີນງານພາຍໃນປີ.

**3.5 *ຊັບສິນ, ອາຄານ ແລະ ອຸປະກອນ***

ຊັບສິນ, ອາຄານ ແລະ ອຸປະກອນ ແມ່ນໄດ້ຖືກລາຍງານຕາມມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າຫຼຸຍຫ້ຽນສະສົມ.

ຕົ້ນທຶນຂອງລາຍການຊັບສິນ, ອາຄານ ແລະ ອຸປະກອນ ແມ່ນປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງໃນການເຮັດໃຫ້ເປັນຊັບສິນບັດຢູ່ໃນສະພາບທີ່ສາມາດໃຊ້ງານໄດ້ຕາມຈຸດປະສົງ.

**3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

**3.5 *ຊັບສິນ, ອາຄານ ແລະ ອຸປະກອນ*** (ຕໍ່)

ລາຍຈ່າຍໃນການຊື້ເຂົ້າເພີ່ມ, ການປັບປຸງ ແລະ ການສ້ອມແປງຍືດອາຍຸການໃຊ້ ແມ່ນຖືກຮັບຮູ້ເພີ່ມເຂົ້າໃນມູນຄ່າຂອງຊັບສິນ ແລະ ຄ່າໃຊ້ຈ່າຍໃນການບຳລຸງຮັກສາ ແລະ ສ້ອມແປງແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານທີ່ເກີດຂຶ້ນ.

ເມື່ອລາຍການຊັບສິນ, ອາຄານ ແລະ ອຸປະກອນ ຖືກຂາຍ ຫຼື ໝົດອາຍຸການໃຊ້ງານ, ຜົນກຳໄລ ຫຼື ຂາດທຶນໃດໆທີ່ມາຈາກການສະສາງ (ຄວາມແຕກຕ່າງລະຫວ່າງມູນຄ່າສະສາງສຸດທິ ແລະ ມູນຄ່າຕາມບັນຊີ) ແມ່ນຖືກລວມເຂົ້າໃນໃບລາຍງານຜົນການດຳເນີນງານ.

*ຄ່າຫຼຸ້ຍຫ້ຽນ*

ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ ແມ່ນການຫັກສ່ວນທີ່ຫຼຸດລົງຂອງມູນຄ່າຊັບສິນ ແລະ ຫັກດ້ອຍມູນຄ່າຊາກ ຕາມອາຍຸການນຳໃຊ້ໂດຍປະມານ, ໂດຍການຄິດໄລ່ວິທີແບບເສັ້ນຊື່. ອາຍຸການໃຊ້ງານຂອງຊັບສິນຖືກປະເມີນໄວ້ດັ່ງນີ້:

| | |
|---|---|
| ອາຄານ | 20 - 30 ປີ |
| ເຄື່ອງຈັກ ແລະ ອຸປະກອນ | 3 - 5 ປີ |
| ເຄື່ອງຕົກແຕ່ງ ແລະ ອຸປະກອນຕິດຕັ້ງ | 2 - 10 ປີ |
| ພາຫະນະ | 3 - 5 ປີ |

**3.6 *ຊັບສິນບັດຄົງທີ່ບໍ່ມີຕົວຕົນ***

ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບດ້ວຍ ຊອບແວ ຄອມພິວເຕີ້ ແລະ ທີ່ດິນທີ່ບໍ່ກຳນົດອາຍຸການນຳໃຊ້. ຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນໄດ້ຖືກລາຍງານຕາມມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າເສື່ອມມູນຄ່າສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ແມ່ນປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງໃນການເຮັດໃຫ້ເປັນຊັບສິນບັດຄົງທີ່ບໍ່ມີຕົວຕົນຢູ່ໃນສະພາບທີ່ສາມາດໃຊ້ງານໄດ້ຕາມຈຸດປະສົງ.

ລາຍຈ່າຍໃນການຊື້ເຂົ້າເພີ່ມ, ການປັບປຸງ ແລະ ການສ້ອມແປງຍືດອາຍຸການໃຊ້ ແມ່ນຖືກຮັບຮູ້ເພີ່ມເຂົ້າໃນມູນຄ່າຂອງຊັບສິນ ແລະ ຄ່າໃຊ້ຈ່າຍອື່ນໆ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານທີ່ເກີດຂຶ້ນ.

ເມື່ອຊັບສິນບັດຄົງບໍ່ມີຕົວຕົນຖືກຂາຍ ຫຼື ສະສາງອອກ, ຕົ້ນທຶນເດີມ ແລະ ຄ່າຫຼຸ້ຍຫ້ຽນສະສົມ ຈະຖືກສະສາງອອກ (ສ່ວນຕ່າງລະຫວ່າງການສະສາງອອກ ແລະ ມູນຄ່າຕົ້ນທຶນສະສົມ) ແມ່ນຖືກລວມເຂົ້າໃນໃບລາຍງານຜົນການດຳເນີນງານ.

ຄ່າເສື່ອມມູນຄ່າຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນຖືກຄິດໄລ່ວິທີແບບເສັ້ນຊື່ຕະຫຼອດອາຍຸການນຳໃຊ້ໂດຍປະມານຂອງຊັບສິນດັ່ງລຸ່ມນີ້:

| | |
|---|---|
| ຊອບແວ ຄອມພິວເຕີ້ | 5 ປີ |
| ສິດນຳໃຊ້ທີ່ດິນ | ບໍ່ກຳນົດອາຍຸການນຳໃຊ້ |

**3.7 *ໜີ້ຕ້ອງສົ່ງການຄ້າ, ໜີ້ຕ້ອງສົ່ງອື່ນໆ ແລະ ເງິນຄ້າງຈ່າຍ***

ໜີ້ຕ້ອງສົ່ງການຄ້າ, ໜີ້ຕ້ອງສົ່ງອື່ນໆ ແລະ ເງິນຄ້າງຈ່າຍ ແມ່ນຖືກຮັບຮູ້ສຳລັບຈຳນວນທີ່ຕ້ອງຈ່າຍໃນອະນາຄົດສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ ບໍ່ວ່າບໍລິສັດຈະໄດ້ຮັບໃບຮຽກເກັບເງິນແລ້ວ ຫຼື ບໍ່ກໍຕາມ.

**3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*3.8 ເງິນກູ້ຢືມ*

ເງິນກູ້ຢືມ ແມ່ນຮັບຮູ້ໃນເບື້ອງຕົ້ນດ້ວຍເງິນສົດທີ່ໄດ້ຮັບ; ຄ່າໃຊ້ຈ່າຍສຸດທິຂອງທຸລະກຳທີ່ເກີດຂຶ້ນ.

ເງິນກູ້ຢືມຖືກຈັດປະເພດເປັນໜີ້ສິນໝູນວຽນ ເວັ້ນເສຍແຕ່ວ່າບໍລິສັດມີສິດ ທີ່ຈະເລື່ອນເວລາການຊຳລະໜີ້ສິນແບບບໍ່ມີເງື່ອນໄຂຢ່າງໜ້ອຍ 12 ເດືອນຫຼັງຈາກວັນທີຂອງໃບລາຍງານຖານະທາງການເງິນສະບັບນີ້.

*ຕົ້ນທຶນຂອງເງິນກູ້ຢືມ*

ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຄ່າໃຊ້ຈ່າຍອື່ນໆທີ່ມີສ່ວນກ່ຽວຂ້ອງກັບການກູ້ຢືມເງິນຂອງບໍລິສັດ.

ຕົ້ນທຶນທົ່ວໄປ ແລະ ກ່ຽວຂ້ອງໂດຍກົງຂອງເງິນກູ້ຢືມ ເພື່ອໃຫ້ໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ມີຄຸນສົມບັດຕາມທີ່ກຳນົດ ເຊິ່ງເປັນຊັບສິນທີ່ຈຳເປັນຕ້ອງໃຊ້ໄລຍະເວລາພໍສົມຄວນໃນການກຽມໃຫ້ພ້ອມສຳລັບໃຊ້ງານ ຫຼື ຂາຍຕາມວັດຖຸປະສົງ ຈະຖືກລວມເຂົ້າໃນຕົ້ນທຶນຂອງຊັບສິນດັ່ງກ່າວຈົນກວ່າຈະເຖິງເວລາທີ່ຊັບສິນມີຄວາມພ້ອມສຳລັບໃຊ້ງານ ຫຼື ຂາຍ.

ຄ່າທຳນຽມທີ່ຈ່າຍໄປສຳລັບການກູ້ຢືມຈະໄດ້ຮັບຮູ້ເປັນຕົ້ນທຶນຂອງການກູ້ຢືມ ຕໍ່ເມື່ອມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ. ໃນກໍລະນີນີ້, ຄ່າທຳນຽມ ແມ່ນຈະຖືກຮັບຮູ້ຈົນຮອດມື້ຖອນເງິນ ຫາກບໍ່ມີຫຼັກຖານທີ່ມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ຄ່າທຳນຽມແມ່ນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍຈ່າຍລ່ວງໜ້າສຳລັບການໃຫ້ບໍລິການ ແລະ ຕັດຄ່າເສື່ອມຕາມໄລຍະເວລາຂອງເງິນກູ້ທີ່ກ່ຽວຂ້ອງ.

ຕົ້ນທຶນເງິນກູ້ຢືມອື່ນ ຈະຖືກຮັບຮູ້ເປັນລາຍຈ່າຍໃນງວດທີ່ເກີດຂຶ້ນ.

*3.9 ຄ້າງຮັບສ່ວນຫຼຸດຈາກຜູ້ສະໜອງ*

ສ່ວນຫຼຸດແມ່ນອີງໃສ່ຍອດຊື້ສິນຄ້າຄູນກັບອັດຕາສ່ວນຫຼຸດເຊິ່ງໄດ້ລະບຸໄວ້ໃນສັນຍາກັບຜູ້ສະໜອງ. ສ່ວນຫຼຸດຖືກຊຳລະໂດຍຫັກກັບໃບແຈ້ງໜີ້ເມື່ອບໍລິສັດຊຳລະເງິນໃຫ້ແກ່ຜູ້ສະໜອງ.

*3.10 ຄັງສຳຮອງຕາມລະບຽບການ*

ຄັງສຳຮອງຕາມລະບຽບການແມ່ນຄັງຮັບປະກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ ໂດຍທີ່ບໍລິສັດຕ້ອງຫັກ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າໃນຄັງສຳຮອງ ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງສຳຮອງນີ້ຮອດເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດສາມາດໂຈະການຫັກເຂົ້າຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ບໍລິສັດຈະໄດ້ຮັບການອະນຸມັດເປັນຢ່າງອື່ນຈາກເຈົ້າຂອງບໍລິສັດ.

*3.11 ເງິນຕາຕ່າງປະເທດ*

ລາຍການທຸລະກຳທີ່ເປັນສະກຸນເງິນອື່ນຈະຖືກແປງເປັນເງິນບາດດ້ວຍອັດຕາແລກປ່ຽນນະມື້ທີ່ທຸລະກຳນັ້ນເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນສະກຸນເງິນອື່ນແມ່ນຈະຖືກແປງເປັນສະກຸນເງິນບາດ ດ້ວຍອັດຕາແລກປ່ຽນນະມື້ສິ້ນສຸດຂອງປີການລາຍງານ.

ກຳໄລ ແລະ ຂາດທຶນທີ່ເກີດຈາກການແປງຄ່າສະກຸນເງິນ ແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານທີ່ຖືກແປງຄ່າເປັນເງິນກີບ.

## 3. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *3.12 ການຮັບຮູ້ລາຍຮັບ*

ລາຍຮັບແມ່ນຖືກຮັບຮູ້ຕາມມູນຄ່າຍຸດຕິທໍາທີ່ຄາດວ່າຈະໄດ້ຮັບ ຫຼື ເປັນໜີ້ຕ້ອງຮັບຈາກການຂາຍສິນຄ້າທີ່ເປັນກິດຈະກໍາຫຼັກຂອງບໍລິສັດ. ລາຍຮັບຈະສະແດງເປັນມູນຄ່າສຸດທິຂອງອາກອນມູນຄ່າເພີ່ມ, ການສົ່ງຄືນສິນຄ້າ, ສ່ວນຫຼຸດການຄ້າ ແລະ ສ່ວນຫຼຸດອື່ນໆ.

ບໍລິສັດມີການຮັບຮູ້ລາຍຮັບຕາມຈໍານວນທີ່ສາມາດປະມານການໄດ້ຢ່າງໜ້າເຊື່ອຖື. ຄວາມເປັນໄປໄດ້ທີ່ຜົນປະໂຫຍດທາງເສດຖະກິດຂອງບໍລິສັດ ຈະໄຫຼເຂົ້າບໍລິສັດ ແລະ ບັນລຸມາດຕະຖານທີ່ກໍານົດສໍາລັບການດໍາເນີນກິດຈະການຂອງບໍລິສັດ ດັ່ງລຸ່ມນີ້:

*ລາຍຮັບຈາກການຂາຍສິນຄ້າ*

ລາຍຮັບຈາກການຂາຍສິນຄ້າຈະຖືກຮັບຮູ້ກໍຕໍ່ເມື່ອຄວາມສ່ຽງ ແລະ ລາງວັນທີ່ສໍາຄັນຂອງການເປັນເຈົ້າຂອງສິນຄ້າຖືກໂອນໄປຫາຜູ້ຊື້ໂດຍປົກກະຕິຈະເກີດຂຶ້ນເມື່ອມີການຈັດສົ່ງສິນຄ້າ. ການຂາຍສິນຄ້າທີ່ຂຶ້ນກັບເງື່ອນໄຂການຕິດຕັ້ງ ແລະ ການກວດສອບຈະຖືກຮັບຮູ້ເມື່ອຜູ້ຊື້ຕົກລົງໃຫ້ຈັດສົ່ງສິນຄ້າ ແລະ ການຕິດຕັ້ງ ແລະ ການກວດສອບສໍາເລັດແລ້ວ.

ນະໂຍບາຍຂອງບໍລິສັດໃນການຂາຍສິນຄ້າໃຫ້ກັບລູກຄ້າປາຍທາງພ້ອມສິດໃນການສົ່ງຄືນສິນຄ້າໄດ້ພາຍໃນ 30 ວັນ. ດັ່ງນັ້ນ, ໜີ້ສິນການສົ່ງເງິນຄືນ (ລວມໃນໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ) ແລະ ສິດໃນການສົ່ງຄືນສິນຄ້າ (ຖືກລວມໃນຊັບສິນໝູນວຽນອື່ນໆ) ແມ່ນຖືກຮັບຮູ້ສໍາລັບສິນຄ້າທີ່ຄາດວ່າຈະມີການສົ່ງຄືນ. ປະສົບການທີ່ຜ່ານມາຖືກນໍາມາໃຊ້ໃນການປະມານການການສົ່ງຄືນສິນຄ້າໂດຍການໃຊ້ວິທີການປະມານການມູນຄ່າທີ່ຄາດວ່າຈະເກີດຂຶ້ນ. ເນື່ອງຈາກຈໍານວນການສົ່ງຄືນສິນຄ້າມີມູນຄ່າທີ່ໃກ້ຄຽງກັນທຸກປີ, ຈຶ່ງເປັນໄປໄດ້ວ່າ ການກັບລາຍການທີ່ສົ່ງຜົນກະທົບໃຫຍ່ຫຼວງຕໍ່ລາຍຮັບສະສົມຈະບໍ່ເກີດຂຶ້ນ. ຄວາມຖືກຕ້ອງຂອງການປະມານການການສົ່ງຄືນສິນຄ້ານີ້ຈະຖືກປະເມີນຄືນໃໝ່ນະມື້ລາຍງານຂອງແຕ່ລະມື້.

*ລາຍຮັບອື່ນໆປະກອບມີ ລາຍຮັບດອກເບ້ຍ ແລະ ລາຍຮັບຄ່າເຊົ່າຖືກຮັບຮູ້ເທິງພື້ນຖານດັ່ງຕໍ່ໄປນີ້:*

- ລາຍຮັບດອກເບ້ຍແມ່ນຖືກຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ ອີງຕາມອັດຕາດອກເບ້ຍທີ່ລະບຸໃນສັນຍາ;
- ລາຍຮັບຄ່າເຊົ່າຈາກການເຊົ່າປ້າຍໂຄສະນາສໍາລັບຜູ້ສະໜອງແມ່ນຖືກຮັບຮູ້ໃນ ໃບລາຍງານຜົນການດໍາເນີນງານພາຍໃນປີ ດ້ວຍວິທີຄິດໄລ່ແບບເສັ້ນຊື່ ອີງຕາມໄລຍະເວລາຂອງສັນຍາ.

## 3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 3.13 *ການເກັບອາກອນ*

*ອາກອນພາຍໃນປີ*

ອາກອນກຳໄລພາຍໃນປີຈະຖືກຫັກເງິນແຮໄວ້ເພື່ອມອບອາກອນ, ອີງຕາມກົດໝາຍອາກອນລາຍໄດ້ ແຫ່ງ ສປປ ລາວ. ບໍລິສັດມີພັນທະໃນການມອບອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນອາກອນທັງໝົດ ອີງຕາມກົດໝາຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ທີ່ມີຜົນບັງຄັບໃຊ້ ຫຼື ຫຼັງວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ດັ່ງນັ້ນ, ບໍລິສັດຈຶ່ງຕ້ອງເສຍອາກອນໃນອັດຕາ 20%. ການສົ່ງຄືນອາກອນຂອງບໍລິສັດແມ່ນຂຶ້ນກັບການກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ເນື່ອງຈາກວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການໃນຫຼາຍປະເພດຂອງທຸລະກຳເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ມູນຄ່າທີ່ຖືກລາຍງານໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຫຼັງຈາກໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ອາກອນອື່ນໆ*

ອາກອນອື່ນໆທີ່ຕ້ອງຈ່າຍລວມມີອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ກຳນົດກ່ຽວກັບລາຍຮັບສຳລັບໄລຍະເວລາທີ່ຄິດໄລ່ໂດຍໃຊ້ອັດຕາອາກອນທີ່ບັງຄັບໃຊ້ສຳລັບປີ.

ອາກອນລາຍໄດ້ສ່ວນບຸກຄົນແມ່ນໜີ້ຕ້ອງສົ່ງອາກອນຂອງເງິນເດືອນທີ່ຕ້ອງຈ່າຍໃຫ້ພະນັກງານສຳລັບໄລຍະເວລາທີ່ກຳນົດໂດຍນຳໃຊ້ອັດຕາອາກອນທີ່ບັງຄັບໃຊ້ສຳລັບປີ.

### 3.14 *ກຳໄລຕໍ່ຮຸ້ນ*

ກຳໄລຂັ້ນພື້ນຖານຕໍ່ຈຳນວນຮຸ້ນ ແມ່ນຄິດໄລ່ດ້ວຍການຫານກຳໄລສຸດທິ ຫຼັງອາກອນສຳລັບໄລຍະ ທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ຫຼັງຈາກໄດ້ປັບສຳລັບເງິນໂບນັດ ແລະ ສະຫວັດດີການ) ໂດຍຈຳນວນສະເລ່ຍຖ່ວງນ້ຳໜັກຂອງຮຸ້ນສາມັນທີ່ຍັງເຫຼືອໃນໄລຍະ.

ລາຍຮັບຈາກການຫັກຕໍ່ຈຳນວນຮຸ້ນບໍ່ໄດ້ຖືກຄິດໄລ່ ແລະ ນຳສະເໜີ.

### 3.15 *ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ*

ບັນດາພາກສ່ວນຕ່າງໆທີ່ຖືວ່າມີສ່ວນກ່ຽວຂ້ອງຖ້າຝ່າຍໜຶ່ງມີຄວາມສາມາດຄວບຄຸມ ຫຼື ໃຊ້ອິດທິພົນທີ່ສຳຄັນຕໍ່ອີກຝ່າຍ ໃນການຕັດສິນໃຈດ້ານການເງິນ ແລະ ການດຳເນີນງານ ຫຼື ມີການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນດຳເນີນການໂດຍອີງໃສ່ລາຄາຂອງຕະຫຼາດ ຫຼື ອີງຕາມລາຄາທີ່ໄດ້ຕົກລົງກັນຕາມສັນຍາໃນກໍລະນີບໍ່ມີລາຄາຕະຫຼາດ.

### 3.16 *ການຈ່າຍເງິນປັນຜົນ*

ການຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນຂອງບໍລິສັດແມ່ນຖືກຮັບຮູ້ເປັນໜີ້ຕ້ອງສົ່ງໃນໄລຍະຂອງເອກະສານລາຍງານການເງິນໂດຍຈຳນວນເງິນປັນຜົນຈະຕ້ອງມີການຕົກລົງອະນຸມັດໂດຍຜູ້ຖືຮຸ້ນຂອງບໍລິສັດ.

## 3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 3.17 *ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດພາຍຫຼັງອອກການ*

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ໃນເວລາທີ່ພະນັກງານອອກບໍານານຂອງບໍລິສັດໂດຍກົມກອງທຶນສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ບໍລິສັດຕ້ອງໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດພະນັກງານຫຼັງອອກການ ໂດຍການຈ່າຍຄ່າເບ້ຍປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ.

*ນອກນັ້ນ, ບໍລິສັດ ແລະ ພະນັກງານໄດ້ຫັກເງິນເດືອນຂອງພະນັກງານຈຳນວນໜຶ່ງ, ຕັ້ງແຕ່ 0.5 - 2%, ອີງຕາມຕໍາແໜ່ງການ* ຈ້າງງານ. ເງິນອຸດໜູນຫຼັງການຈ້າງງານແມ່ນຈ່າຍໃຫ້ພະນັກງານບໍານານໃນເວລາບໍານານ, ໃນອັດຕາສ່ວນເລີ່ມຕົ້ນແຕ່ 50 – 100% ຂອງກອງທຶນບໍານານທີ່ບໍລິສັດປະກອບສ່ວນ ແລະ ອີງໃສ່ຈຳນວນປີເຮັດວຽກດັ່ງລາຍລະອຽດດັ່ງລຸ່ມນີ້:

| *ຈຳນວນປີເຮັດວຽກ* | *ອັດຕາກອງທຶນບໍານານທີ່ບໍລິສັດປະກອບສ່ວນ (*)* |
|---|---|
| ຕໍ່າກວ່າ 10 ປີ | ບໍ່ມີຜົນປະໂຫຍດເງິນບໍານານ |
| 10 ປີ ແລະ ຫຼາຍກວ່າ | 50% |
| 15 ປີ ແລະ ຫຼາຍກວ່າ | 60% |
| 20 ປີ ແລະ ຫຼາຍກວ່າ | 70% |
| 25 ປີ ແລະ ຫຼາຍກວ່າ | 80% |
| 30 ປີ ແລະ ຫຼາຍກວ່າ | 100% |

*(*) ພະນັກງານຈະໄດ້ຮັບເງິນບໍານານເຕັມຈຳນວນ ສຳລັບສ່ວນທີ່ພະນັກງານປະກອບສ່ວນກອງທຶນດັ່ງກ່າວນະມື້ອອກບໍານານ*

ບໍລິສັດບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຫຼັງການຈ້າງງານສຳລັບພະນັກງານຂອງບໍລິສັດ.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງເລກທີ 43/ສພຊ ອອກໂດຍປະທານປະເທດຂອງ ສປປ ລາວ ລົງວັນທີ 28 ມັງກອນ 2014, ບໍລິສັດມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຕາມເງື່ອນໄຂດັ່ງລຸ່ມນີ້:

- ໃນກໍລະນີເມື່ອພະນັກງານຂາດທັກສະຄວາມຊໍານິຊໍານານ ຫຼື ບໍ່ມີສຸຂະພາບແຂງແຮງ ສິ່ງຜົນໃຫ້ບໍ່ສາມາດເຮັດວຽກຕໍ່ໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈໍາເປັນຈະຕ້ອງໄດ້ຫຼຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເລີກຈ້າງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກ. ນະວັນທີ 31 ທັນວາ 2024, ບໍ່ມີພະນັກງານບໍລິສັດຜູ້ທີ່ຖືກເລີກຈ້າງເກີດຂຶ້ນດັ່ງທີ່ກ່າວຂ້າງເທິງ. ດັ່ງນັ້ນ, ບໍລິສັດ ບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນພາຍໃນປີ

## 4. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---:|---:|
| | *ກີບ* | *ກີບ* |
| ເງິນສົດໃນຄັງ | 684,574,488 | 1,873,737,112 |
| ເງິນຝາກທະນາຄານ | 17,935,456,965 | 95,691,118,829 |
| ເງິນເບີກເກີນບັນຊີ | - | 57,655,032 |
| | **18,620,031,453** | **97,622,510,973** |

ເງິນສົດ, ລາຍການທຽບເທົ່າເງິນສົດ ແລະ ເງິນເບີກເງິນບັນຊີ ເພື່ອຈຸດປະສົງຂອງໃບລາຍງານກະແສເງິນສົດ ລວມມີລາຍການດັ່ງລຸ່ມນີ້:

| | *31 ທັນວາ 2024* | *31 ທັນວາ 2023* |
|---|---:|---:|
| | *ກີບ* | *ກີບ* |
| ເງິນສົດໃນຄັງ | 684,574,488 | 1,873,737,112 |
| ເງິນຝາກທະນາຄານ | 17,935,456,965 | 95,691,118,829 |
| ເງິນເບີກເກີນບັນຊີ | - | 57,655,032 |
| | **18,620,031,453** | **97,622,510,973** |
| ເງິນເບີກເກີນບັນຊີ | (2,028,965,428) | - |
| | **16,591,066,025** | **97,622,510,973** |

## 5. ເງິນຝາກໄລຍະສັ້ນມີກໍານົດ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---:|---:|
| | *ກີບ* | *ກີບ* |
| ເງິນຝາກໄລຍະສັ້ນ | 31,899,172,500 | - |
| | **31,899,172,500** | **-** |

ນະວັນທີ 31 ທັນວາ 2024, ເງິນຝາກມີກໍານົດກັບທະນາຄານພາຍໃນປະເທດປະກອບມີ ສັນຍາຝາກມີກໍານົດເປັນເງິນໂດລາໄລຍະ 3 ເດືອນ, 6 ເດືອນ ໃນອັດຕາດອກເບ້ຍລະຫວ່າງ 1.35% ເຖິງ 2.10% ຕໍ່ປີ.

## 6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ໜີ້ຕ້ອງຮັບການຄ້າ | 13,409,175,790 | 11,045,224,899 |
| ຫັກເງິນແຮຈາກໜີ້ສົງໄສຈະເສຍ | (3,902,186,763) | (5,886,977,559) |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | **9,506,989,027** | **5,158,247,340** |

ຍອດເຫຼືອໃນບັນຊີໜີ້ສິນນະວັນທີ 31 ທັນວາ 2024 ມີອາຍຸດັ່ງນີ້:

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ຍັງບໍ່ທັນຮອດກຳນົດ | 7,950,921,596 | 3,752,442,359 |
| ເກີນກຳນົດ | | |
| 1 – 3 ເດືອນ | 1,489,591,946 | 880,190,355 |
| 3 – 6 ເດືອນ | 66,475,485 | 525,615,903 |
| 6 – 12 ເດືອນ | - | 400,720,830 |
| ຫຼາຍກວ່າ 12 ເດືອນ | 3,902,186,763 | 5,486,255,452 |
| ບັນຊີໜີ້ຕ້ອງຮັບ | **13,409,175,790** | **11,045,224,899** |
| ຫັກເງິນແຮຈາກໜີ້ສົງໄສຈະເສຍ | (3,902,186,763) | (5,886,977,559) |
| ບັນຊີໜີ້ຕ້ອງຮັບ, ສຸດທິ | **9,506,989,027** | **5,158,247,340** |

## 7. ເຄື່ອງໃນສາງ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ເຄື່ອງໃນສາງ | 500,736,982,852 | 491,108,241,328 |
| *ຫັກ:* | | |
| ຫັກເງິນແຮສຳລັບສິນຄ້າທີ່ເຄື່ອນໄຫວຊ້າ ແລະ ລ້າສະໄໝ | (7,801,849,905) | (6,532,248,329) |
| ຫັກເງິນແຮສຳລັບມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ("NRV") | (173,875,028) | (228,222,597) |
| ເຄື່ອງໃນສາງ, ສຸດທິ | **492,761,257,919** | **484,347,770,402** |

## 8. ຊັບສິນໝູນວຽນອື່ນໆ

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---:|---:|
| ຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 5,706,649,338 | 4,583,529,979 |
| ສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງ (i) | 1,949,361,577 | 4,065,261,221 |
| ຄ່າປະກັນໄພຈ່າຍລ່ວງໜ້າ | 56,238,807 | 74,945,474 |
| ຄ່າເຊົ່າຈ່າຍລ່ວງໜ້າສຳລັບໜີ້ສິນສັນຍາເຊົ່າ (ii) | 27,747,965,086 | 27,831,104,087 |
| ອື່ນໆ (iii) | 1,565,079,464 | 925,905,164 |
| ເງິນກູ້ຢືມໃຫ້ພະນັກງານ | 357,309,741 | 347,851,278 |
| ອາກອນກຳໄລຈ່າຍລ່ວງໜ້າ | - | 1,001,278,375 |
| | **37,382,604,013** | **38,829,875,578** |

(i) ສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງ ແມ່ນສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງທີ່ຈະມີການສະສາງ ໂດຍການຫັກລົບກັບໃບຮຽກເກັບເງິນເມື່ອບໍລິສັດມີການຊຳລະໃຫ້ກັບຜູ້ສະໜອງເຫຼົ່ານັ້ນ;

(ii) ຄ່າເຊົ່າຈ່າຍລ່ວງໜ້າປະກອບມີ (i) ໜີ້ສິນສັນຍາເຊົ່າຂອງທີ່ດິນຂອງສາຂາ ອຸດົມໄຊ, ສີມສະໝຸກ ແລະ ວັງວຽງ ທີ່ຢູ່ໃນຂັ້ນຕອນການກໍ່ສ້າງ ແລະ (ii) ໜີ້ສິນສັນຍາເຊົ່າຂອງອາຄານ ຂອງສາຂາ ໂພນຕ້ອງ, ໄຊກໃຫຍ່, ທ່າແຂກ , ສະຫວັນນະເຂດ, ປາກຊັນ, ປາກເຊ ແລະ ຫຼວງພະບາງ.

(iii) ຊັບສິນໝູນວຽນອື່ນໆປະກອບມີ ຄ່າທຳນຽມອະນຸມັດເງິນກູ້, ຄ່າເຊົ່າຈ່າຍລ່ວງໜ້າເດີ່ນຈອດລົດສຳລັບ ພະນັກງານ, ຄ່າເຊົ່າຈ່າຍລ່ວງໜ້າທີ່ພັກສຳລັບພະນັກງານລະດັບສູງ ແລະ ລາຍຮັບດອກເບ້ຍຄ້າງຮັບ.

## 9. ທີ່ດິນ, ອາຄານ ແລະ ອຸປະກອນ

### *9.1 ຊັບສິນທີ່ພວມຊື້ ແລະ ພວມກໍ່ສ້າງ*

ການເຄື່ອນໄຫວຂອງຊັບສິນທີ່ພວມຊື້ ແລະ ພວມກໍ່ສ້າງ ນະວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ສິ່ງປຸກສ້າງ* | *ເຄື່ອງຈັກ ແລະ ອຸປະກອນ* | *ເຄື່ອງຕົກແຕ່ງ ແລະ ອຸປະກອນຕິດຕັ້ງ* | *ພາຫະນະ* | *ຊ້ອບແວ ຄອມພິວເຕີ້* | *ລວມ* |
|---|---|---|---|---|---|---|
| | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ** | | | | | | |
| ນະວັນທີ 1 ມັງກອນ 2024 | 48,654,494,474 | - | 2,451,945,388 | - | 365,075,299 | 51,471,515,161 |
| ຊື້ເຂົ້າເພີ່ມ | 51,778,944,832 | 23,263,758 | 25,392,646,177 | 20,762,775 | 248,679,525 | 77,464,297,067 |
| ການປັບຕົ້ນທຶນ | 2,168,252,818 | - | - | - | - | 2,168,252,818 |
| ໂອນໄປເປັນຊັບສິນ | (33,740,421,694) | - | (10,154,062,042) | - | - | (43,894,483,736) |
| ຜິດດ່ຽງຈາກການແປງຄ່າ | (722,587,731) | - | (36,414,843) | - | (5,424,399) | (764,426,973) |
| ນະວັນທີ 31 ທັນວາ 2024 | **68,138,682,699** | **23,263,758** | **17,654,114,680** | **20,762,775** | **608,330,425** | **86,445,154,337** |

## 9. ທີ່ດິນ, ອາຄານ ແລະ ອຸປະກອນ (ຕໍ່)

### 9.2 *ຊັບສິນບັດຄົງທີ່ມີຕົວຕົນ*

| | *ອາຄານ ແລະ ສິ່ງປຸກສ້າງ*<br>*ກີບ* | *ເຄື່ອງຈັກ ແລະ ອຸປະກອນ*<br>*ກີບ* | *ເຄື່ອງຕົກແຕ່ງ ແລະ ອຸປະກອນ ຕິດຕັ້ງ*<br>*ກີບ* | *ພາຫະນະ*<br>*ກີບ* | *ລວມ*<br>*ກີບ* |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ນະວັນທີ 1 ມັງກອນ 2024 | 503,958,104,299 | 18,955,973,353 | 112,223,429,611 | 38,077,258,094 | 673,214,765,357 |
| ຊື້ເຂົ້າເພີ່ມ | - | 2,044,032,074 | 3,165,987,038 | 287,807,440 | 5,497,826,552 |
| ໂອນເຂົ້າຈາກຊັບສິນທີ່ພວມຊື້ ແລະ ພວມກໍ່ສ້າງ | 33,740,421,471 | - | 10,154,062,042 | - | 43,894,483,513 |
| ສະສາງອອກ | - | (159,197,634) | (549,708,801) | (29,149,118) | (738,055,553) |
| ຜິດດ່ຽງຈາກການແປງຄ່າ | (7,484,487,238) | (281,522,887) | (1,666,675,899) | (565,500,888) | (9,998,186,912) |
| ນະວັນທີ 31 ທັນວາ 2024 | 530,214,038,532 | 20,559,284,906 | 123,327,093,991 | 37,770,415,528 | 711,870,832,957 |
| **ຄ່າຫຼຸຍຫ້ຽນສະສົມ** | | | | | |
| ນະວັນທີ 1 ມັງກອນ 2024 | 129,281,999,681 | 15,989,674,161 | 81,694,982,831 | 35,164,414,973 | 262,131,071,646 |
| ຄ່າຫຼຸຍຫ້ຽນພາຍໃນປີ | 17,209,451,676 | 1,202,413,728 | 9,096,953,026 | 1,200,209,179 | 28,709,027,609 |
| ສະສາງອອກ | - | (141,033,911) | (514,901,462) | (15,085,062) | (671,020,435) |
| ຜິດດ່ຽງຈາກການແປງຄ່າ | (2,602,009,509) | (285,118,652) | (1,573,780,672) | (569,803,182) | (5,030,712,015) |
| ນະວັນທີ 31 ທັນວາ 2024 | 143,889,441,848 | 16,765,935,326 | 88,703,253,723 | 35,779,735,908 | 285,138,366,805 |
| **ມູນຄ່າສຸດທິ** | | | | | |
| ນະວັນທີ 1 ມັງກອນ 2024 | 374,676,104,618 | 2,966,299,192 | 30,528,446,780 | 2,912,843,121 | 411,083,693,711 |
| ນະວັນທີ 31 ທັນວາ 2024 | 386,324,596,684 | 3,793,349,580 | 34,623,840,268 | 1,990,679,620 | 426,732,466,152 |

## 9. ທີ່ດິນ, ອາຄານ ແລະ ອຸປະກອນ (ຕໍ່)

### 9.3 *ຊັບສິນບັດຄຶງທີ່ບໍ່ມີຕົວຕົນ*

| | *ສິດນຳໃຊ້ທີ່ດິນ* | *ຊັອບແວ ຄອມພິວເຕີ້* | *ລວມ* |
|---|---|---|---|
| | *ກີບ* | *ກີບ* | *ກີບ* |
| **ຕົ້ນທຶນ** | | | |
| ນະວັນທີ 1 ມັງກອນ 2024 | 709,109,081,833 | 2,360,021,898 | 711,469,103,781 |
| ຜົດດ່ຽງຈາກການແປງຄ່າ | (10,531,268,082) | (35,049,647) | (10,566,317,729) |
| ນະວັນທີ 31 ທັນວາ 2024 | 698,577,813,801 | 2,324,972,251 | 700,902,786,052 |
| **ຄ່າຫຼຸຍຫ້ຽນສະສົມ** | | | |
| ນະວັນທີ 1 ມັງກອນ 2024 | - | 2,360,021,898 | 2,360,021,898 |
| ຄ່າຫຼຸຍຫ້ຽນໃນປີ | - | - | - |
| ຜົດດ່ຽງຈາກການແປງຄ່າ | - | (35,049,647) | (35,049,647) |
| ນະວັນທີ 31 ທັນວາ 2024 | - | 2,324,972,251 | 2,324,972,251 |
| **ມູນຄ່າສຸດທິ** | | | |
| ນະວັນທີ 1 ມັງກອນ 2024 | 709,109,081,833 | - | 709,109,081,833 |
| ຜົດດ່ຽງຈາກການແປງຄ່າ | (10,531,268,082) | - | (10,531,268,082) |
| ນະວັນທີ 31 ທັນວາ 2024 | 698,577,813,801 | - | 698,577,813,801 |

## 10. ຊັບສິນບໍ່ໝູນວຽນອື່ນໆ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ຈ່າຍລ່ວງໜ້າສຳລັບຄ່າເຊົ່າອາຄານ | 14,202,483,420 | 8,730,500,190 |
| | **14,202,483,420** | **8,730,500,190** |

## 11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ໜີ້ຕ້ອງສົ່ງອື່ນໆໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍ ເລກທີ 27.2)* | 7,894,769,326 | 11,399,309,064 |
| ໜີ້ຕ້ອງສົ່ງອື່ນໆໃຫ້ກັບພາກສ່ວນທີ່ສາມ | 49,613,158,267 | 53,248,165,530 |
| ໜີ້ຕ້ອງສົ່ງອື່ນໆ (i) | 1,068,651,850 | 918,228,306 |
| | **58,576,579,443** | **65,565,702,900** |

(i) ໜີ້ຕ້ອງສົ່ງອື່ນໆ ປະກອບມີໜີ້ຕ້ອງສົ່ງທີ່ເກີດຈາກການສົ່ງຄືນສິນຄ້າ.

## 12. ການກູ້ຢືມ

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| **ໝູນວຽນ** | | |
| ເງິນກູ້ເບີກເກີນບັນຊີ (i, ii, iii) | 2,028,965,427 | - |
| ເງິນກູ້ຢືມໄລຍະສັ້ນ (iv, v) | 65,361,696,390 | 54,694,740,214 |
| | **67,390,661,817** | **54,694,740,214** |
| ເງິນກູ້ຢືມໄລຍະຍາວ - ສ່ວນທີ່ໝູນວຽນ (vi, vii) | 24,031,020,120 | 26,353,809,980 |
| | **91,421,681,937** | **81,048,550,194** |
| **ບໍ່ໝູນວຽນ** | | |
| ເງິນກູ້ຢືມໄລຍະຍາວ - ສ່ວນທີ່ບໍ່ໝູນວຽນ (vi, vii) | 35,347,370,505 | 48,063,332,611 |
| | **126,769,052,442** | **129,111,882,805** |

ຍອດຄົງເຫຼືອສັນຍາເບີກເງິນເກີນບັນຊີທະນາຄານ ນະວັນທີ 31 ທັນວາ 2024 ປະກອບມີ:

i). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 2,520,100,000 ກີບ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 3.874%. ການກູ້ຢືມດັ່ງກ່າວມີຫຼັກຊັບຄໍ້າປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

ii). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 8,500,000 ບາດ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 4.695% ອັດຕາສ່ວນເພີ່ມຕໍ່ປີ. ການກູ້ຢືມດັ່ງກ່າວມີຫຼັກຊັບຄໍ້າປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

iii). ສັນຍາວົງເງິນກູ້ຮ່ວມຈາກທະນາຄານທຸລະກິດພາຍໃນປະເທດ ສໍາລັບວົງເງິນຈໍານວນ 94,178 ລ້ານກີບ, ສັນຍາດັ່ງກ່າວປະກອບດ້ວຍ ໜັງສືຄໍ້າປະກັນ, (ການປະມູນ, ການຊື້ ແລະ ຜົນການດໍາເນີນງານ), ໜັງສືສິນເຊື່ອ ແລະ ເອກະສານສິນເຊື່ອເພື່ອການນໍາເຂົ້າ. ສັນຍາດັ່ງກ່າວບໍ່ມີຍອດຄົງເຫຼືອນະວັນທີ 31 ທັນວາ 2024.

ຍອດຄົງເຫຼືອສັນຍາເງິນກູ້ໄລຍະສັ້ນ ນະວັນທີ 31 ທັນວາ 2024 ປະກອບມີ:

iv). ສັນຍາວົງເງິນກູ້ໄລຍະສັ້ນຈາກທະນາຄານທຸລະກິດພາຍໃນປະເທດ ສໍາລັບສັນຍາຈໍານວນ 30,000 ລ້ານກີບ ເຊິ່ງມີອັດຕາດອກເບ້ຍຄົງທີ່ປະຈໍາປີເທົ່າກັບ 6.05%. ຕົ້ນທຶນເງິນກູ້ຈະຊໍາລະເປັນໄຕມາດ ແລະ ດອກເບ້ຍຈະຊໍາລະທຸກໆ ເດືອນ. ການກູ້ຢືມດັ່ງກ່າວມີຫຼັກຊັບຄໍ້າປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

v). ສັນຍາເງິນກູ້ແບບໝູນວຽນຈາກທະນາຄານທຸລະກິດຕ່າງປະເທດ ສໍາຫຼັບສັນຍາຈໍານວນ 250 ລ້ານບາດ ເຊິ່ງມີອັດຕາດອກເບ້ຍປະຈໍາປີລະຫວ່າງ 4.60%- 4.85% ຕໍ່ປີ, ການເບີກເງິນກູ້ແຕ່ລະຄັ້ງແມ່ນກໍານົດໃຫ້ຊໍາລະພາຍໃນ 150 ວັນຫຼັງຈາກວັນທີຖອນເງິນກູ້ ແລະ ດອກເບ້ຍຈະຕ້ອງຊໍາລະທຸກໆ ເດືອນ. ການກູ້ຢືມມີຫຼັກຊັບຄໍ້າປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

## 12. ການກູ້ຢືມ *(ຕໍ່)*

ຍອດຄົງເຫຼືອສັນຍາເງິນກູ້ໄລຍະຍາວ ນະວັນທີ 31 ທັນວາ 2024 ປະກອບມີ:

vi). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດຈໍານວນ 50 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 5% ຕໍ່ປີ ໂດຍຈະຄົບກໍານົດໃນເດືອນມີນາ 2025. ຕົ້ນທຶນເງິນກູ້ຈະຊໍາລະເປັນໄຕມາດ ແລະ ດອກເບ້ຍຈະຊໍາລະທຸກໆ ເດືອນ.

vii). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດຈໍານວນ 145 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 6.05% ຕໍ່ປີ ແລະ ມີກໍານົດສິ້ນສຸດນະວັນທີ 31 ພຶດສະພາ 2027, ຕົ້ນທຶນເງິນກູ້ຈະຕ້ອງຊໍາລະເປັນໄຕມາດ ແລະ ດອກເບ້ຍຈະຊໍາລະທຸກໆ ເດືອນ ເລີ່ມແຕ່ວັນທີ 31 ສິງຫາ 2022 . ການກູ້ຢືມມີຫຼັກຊັບຄໍ້າປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

## 13. ຮຸ້ນກູ້

ຮຸ້ນກູ້ນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|
| ອອກຈໍາໜ່າຍຮຸ້ນກູ້ຜ່ານ ຕະຫຼາດຫຼັກຊັບລາວ | 66,233,252,250 | 62,116,071,600 |
| | **66,233,252,250** | **62,116,071,600** |

ຮຸ້ນກູ້ນີ້ແມ່ນຮຸ້ນກູ້ໃນອົງຈໍາກັດໄລຍະຍາວແບບບໍ່ມີຫຼັກປະກັນໃນຕະຫຼາດຫຼັກຊັບລາວ. ໂດຍສະຫຼຸບເງື່ອນໄຂສໍາຄັນຂອງຮຸ້ນກູ້ນະວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງລຸ່ມນີ້:

| *ລະຫັດ ISIN* | *ຈໍານວນ (ໂດລາ)* | *ທຽບເທົ່າ ກີບ* | *ອັດຕາດອກເບ້ຍ (% ຕໍ່ປີ)* | *ປີ* | *ການຈ່າຍດອກເບ້ຍ* | *ວັນທີຄົບກໍານົດ* |
|---|---|---|---|---|---|---|
| LA80000115D6 | 3,000,000 | 66,233,252,250 | 7.50% | 4 | 6 ເດືອນ | 19 ພຶດສະພາ 2027 |

## 14. ເງິນມັດຈໍາຈາກລູກຄ້າ

ເງິນມັດຈໍາຈາກລູກຄ້າແມ່ນສໍາລັບຈຸດປະສົງຄໍ້າປະກັນການຊື້ສິນຄ້າ ແລະ ໂດຍປົກກະຕິແລ້ວຈະຖືກຊໍາລະ ແລະ ສະສາງພາຍໃນ 1 - 2 ເດືອນ ເມື່ອລູກຄ້າຕົກລົງໃຫ້ຈັດສົ່ງສິນຄ້າ.

## 15. ໜີ້ສິນໝູນວຽນອື່ນໆ

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|
| ລາຍຮັບຄ່າເຊົ່າ ລໍຖ້າສະສາງ | 1,787,028,765 | 926,679,694 |
| ລາຍຮັລໍຖ້າສະສາງ ຈາກການຂາຍສິນຄ້າທີ່ຍັງບໍ່ໄດ້ນຳສົ່ງ | 4,536,580,140 | 4,989,947,018 |
| ໜີ້ສິນຄ້າງຈ່າຍໃນການຈັດກິດຈະກຳທາງການຕະຫຼາດ (i) | 3,658,805,515 | 4,699,131,909 |
| ດອກເບ້ຍຄ້າງຈ່າຍຂອງຮຸ້ນກູ້ | 567,033,273 | 590,891,425 |
| ໜີ້ຕ້ອງສົ່ງອາກອນອື່ນໆ (ii) | 3,088,441,389 | 1,575,474,589 |
| ໜີ້ຕ້ອງສົ່ງພະນັກງານອື່ນໆ (iii) | 2,046,684,883 | 1,201,709,043 |
| ໜີ້ສິນໝູນວຽນອື່ນໆ (iv) | 4,043,876,973 | 5,554,700,005 |
| | **19,728,450,938** | **19,538,533,683** |

i). ໜີ້ສິນຄ້າງຈ່າຍໃນການຈັດກິດຈະກຳທາງການຕະຫຼາດ ແມ່ນເງິນອຸດໜູນທາງການຕະຫຼາດ ຈາກຜູ້ສະໜອງ.

ii). ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີໜີ້ຕ້ອງສົ່ງຂອງອາກອນລາຍໄດ້, ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ວິສາຫະກິດ.

iii). ໜີ້ຕ້ອງສົ່ງພະນັກງານອື່ນໆ ປະກອບມີ ປະກັນສັງຄົມຄ້າງຈ່າຍ, ກອງທຶນເງິນບໍານານ ແລະ ກອງທຶນທີ່ໄດ້ຮັບຈາກເງິນເດືອນຂອງພະນັກງານ ແລະ ສະຫວັດດີການອື່ນໆ.

iv). ໜີ້ສິນໝູນວຽນອື່ນໆ ປະກອບມີເງິນມັດຈຳລ່ວງໜ້າຈາກຜູ້ສະໜອງສຳລັບເງິນເດືອນພະນັກງານທີ່ປຶກສາລາຍສິນຄ້າ, ລາຍຈ່າຍຄ້າງຈ່າຍອື່ນໆ, ລາຍຈ່າຍຄ້າງຈ່າຍຈາກການນາເຂົ້າສິນຄ້າ ແລະ ລາຍຈ່າຍດອກເບ້ຍກູ້ຢືມຄ້າງຈ່າຍ.

## 16. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

| | *ຈຳນວນຮຸ້ນ* | *ຮຸ້ນສາມັນ*<br>*ກີບ* | *ສ່ວນເພີ່ມມູນຄ່າຮຸ້ນ*<br>*ກີບ* |
|---|---|---|---|
| ນະວັນທີ 1 ມັງກອນ 2023 | 165,000,000 | 330,000,000,000 | 24,735,724,722 |
| ຮຸ້ນທີ່ອອກຈຳໜ່າຍ | - | - | - |
| ນະວັນທີ 31 ທັນວາ 2023 | 165,000,000 | 330,000,000,000 | 24,735,724,722 |
| ນະວັນທີ 1 ມັງກອນ 2024 | 165,000,000 | 330,000,000,000 | 24,735,724,722 |
| ຮຸ້ນທີ່ອອກຈຳໜ່າຍ | - | - | - |
| ນະວັນທີ 31 ທັນວາ 2024 | 165,000,000 | 330,000,000,000 | 24,735,724,722 |

## 17. ລາຍຮັບຈາກການຂາຍ

| | 2024<br>*ກີບ* | 2023<br>*ກີບ* |
|---|---|---|
| ການຂາຍສິນຄ້າ | 887,562,594,853 | 765,971,176,315 |
| ການໃຫ້ບໍລິການຈັດສົ່ງ | 1,085,306,286 | 957,421,247 |
| ການໃຫ້ບໍລິການສ້ອມແປງ ແລະ ບຳລຸງຮັກສາ | 488,509,374 | 211,218,781 |
| | **889,136,410,513** | **767,139,816,343** |

## 18. ຕົ້ນທຶນການຂາຍ

| | 2024<br>*ກີບ* | 2023<br>*ກີບ* |
|---|---|---|
| ຕົ້ນທຶນການຂາຍສິນຄ້າ | 609,521,300,516 | 541,794,415,045 |
| ຄ່າຈັດສົ່ງ ແລະ ຄ່າຂົນສົ່ງ | 51,708,742,572 | 38,042,753,637 |
| ສ່ວນປ່ຽນແປງສຸດທິຂອງເງິນແຮເຄື່ອງໃນສາງ | 1,369,945,340 | (1,968,627,461) |
| | **662,599,988,428** | **577,868,541,221** |

## 19. ລາຍຮັບອື່ນໆ

| | 2024<br>*ກີບ* | 2023<br>*ກີບ* |
|---|---|---|
| ລາຍຮັບຈາກການເຊົ່າ | 2,885,573,937 | 3,453,211,008 |
| ລາຍຮັບດອກເບ້ຍ | 789,231,705 | 322,777,151 |
| | **3,674,805,642** | **3,775,988,159** |

## 20. ຄ່າໃຊ້ຈ່າຍໃນການຂາຍ

| | 2024<br>*ກີບ* | 2023<br>*ກີບ* |
|---|---|---|
| ຄ່າແຮງງານພະນັກງານ ແລະ ຜົນປະໂຫຍດອື່ນໆ | 47,457,952,204 | 34,474,360,915 |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 27,975,197,640 | 25,635,105,925 |
| ຄ່າເຊົ່າ - ອາຄານ ແລະ ສະຖານທີ່ສະແດງສິນຄ້າ | 18,244,993,836 | 15,050,098,156 |
| ລາຍຈ່າຍຄ່ານ້ຳມັນ | 4,141,288,121 | 3,868,046,582 |
| ລາຍຈ່າຍຈາກການຕະຫຼາດ ແລະ ໂຄສະນາ | 4,814,641,775 | 2,218,276,674 |
| | **102,634,073,576** | **81,245,888,252** |

## 21. ລາຍຈ່າຍບໍລິຫານ

| | 2024<br>*ກີບ* | 2023<br>*ກີບ* |
|---|---:|---:|
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 733,829,969 | 629,855,005 |
| ຄ່າແຮງງານພະນັກງານ ແລະ ຜົນປະໂຫຍດອື່ນໆ | 31,514,552,924 | 17,942,365,669 |
| ການເກັບຄືນໜີ້ຕ້ອງຮັບຂອງເງິນແຮໜີ້ສົງໄສຈະເສຍ | (1,975,652,644) | (1,839,104,458) |
| ລາຍຈ່າຍສ້ອມແປງ ແລະ ບຳລຸງຮັກສາ | 2,966,884,240 | 3,340,726,420 |
| ລາຍຈ່າຍສາທາລະນຸປະໂພກ | 5,109,851,529 | 4,248,933,570 |
| ລາຍຈ່າຍເຄື່ອງໃຊ້ຫ້ອງການ | 1,063,091,288 | 1,062,866,645 |
| ຄ່າທຳນຽມວິຊາຊີບ | 4,090,098,483 | 3,966,757,636 |
| ລາຍຈ່າຍບໍລິຫານອື່ນໆ | 1,685,184,018 | 823,553,755 |
| ຄ່າກວດສອບ | 551,852,379 | 698,891,827 |
| ລາຍຈ່າຍປະກັນໄພ | 618,505,049 | 465,119,374 |
| | **46,358,197,235** | **31,339,965,443** |

## 22. ລາຍຈ່າຍການເງິນ

| | 2024<br>*ກີບ* | 2023<br>*ກີບ* |
|---|---:|---:|
| **ລາຍຈ່າຍດອກເບ້ຍຈາກ:** | | |
| ເງິນກູ້ຢືມຈາກສະຖາບັນການເງິນ | 5,248,756,522 | 6,913,848,030 |
| ຮຸ້ນກູ້ | 1,132,055,387 | 2,523,137,289 |
| ອື່ນໆ | 8,423,121 | 3,453,301 |
| ຄ່າທຳນຽມທະນາຄານ | 796,303,115 | 589,006,177 |
| | **7,185,538,145** | **10,029,444,797** |

## 23. (ຂາດທຶນ)/ກຳໄລ ສຸດທິຈາກອັດຕາແລກປ່ຽນ

| | 2024<br>ກີບ | 2023<br>ກີບ |
|---|---|---|
| ກຳໄລສຸດທິຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ | (1,258,575,646) | 6,314,659,590 |
| ຂາດທຶນສຸດທິຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງ | (1,652,067,844) | (5,154,528,704) |
| | **(2,910,643,490)** | **1,160,130,886** |

## 24. ອາກອນກຳໄລ

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ອັດຕາອາກອນກຳໄລປົກກະຕິແມ່ນ 20%. ນອກຈາກນັ້ນ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈະໄດ້ຮັບອັດຕາກຳໄລຫຼຸດໃນອັດຕາ 13% ເປັນເວລາ 4 ປີນັບຕັ້ງແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບ. ດັ່ງນັ້ນ, ອັດຕາອາກອນກຳໄລທີ່ໄດ້ນຳໃຊ້ຂອງບໍລິສັດໃນປີ 2024 ແມ່ນ 20%. (ສຳລັບໄລຍະສິ້ນສຸດວັນທີ 31 ທັນວາ 2023: 20%)

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|
| **ກຳໄລກ່ອນອາກອນພາຍໃນປີ** | 71,122,775,281 | 71,592,095,675 |
| *ການດັດແກ້ເພີ່ມ/(ຫຼຸດ)* | | |
| ຄ່າຫຼຸ້ຍຫ້ຽນທີ່ຄິດໄລ່ດ້ວຍອັດຕາທີ່ກຳນົດໃນກົດໝາຍອາກອນ | (9,059,402,725) | (4,166,872,944) |
| ການເກັບຄືນຂອງເງິນແຮ ສຳລັບໜີ້ສົງໄສຈະເສຍ | (1,975,652,644) | (705,338,529) |
| ສ່ວນປ່ຽນແປງສຸດທິຂອງການສຳຮອງເງິນແຮເຄື່ອງໃນສາງ | 1,369,945,340 | (1,814,031,214) |
| ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ | 1,258,575,646 | (2,076,883,361) |
| ລາຍຈ່າຍບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ | 628,725,047 | 368,497,107 |
| **ກຳໄລກ່ອນອາກອນ** | **63,344,965,945** | **53,964,298,641** |
| **ລາຍຈ່າຍອາກອນກຳໄລ, ໃນອັດຕາ 20%** | 12,668,993,305 | 10,792,859,692 |
| ໜີ້ຕ້ອງສົ່ງອາກອນກຳໄລໃນຕົ້ນປີ | 11,651,392,145 | 11,564,148,709 |
| ອາກອນກຳໄລທີ່ໄດ້ຈ່າຍໃນປີ | (10,782,859,692) | (9,934,957,710) |
| ຜົດດ່ຽງຈາກການແປງຄ່າ | (2,244,435,999) | (62,416,890) |
| **ໜີ້ຕ້ອງສົ່ງອາກອນກຳໄລໃນທ້າຍປີ** | **11,293,089,759** | **12,359,633,801** |

## 25. ກໍາໄລຂັ້ນພື້ນຖານຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍໄດ້ ແລະ ຂໍ້ມູນຮຸ້ນທີ່ໃຊ້ເປັນພື້ນຖານຂອງການຄິດໄລ່ກໍາໄລຕໍ່ຮຸ້ນ:

| | *31 ທັນວາ 2024* | *31 ທັນວາ 2023* |
|---|---|---|
| | *ກີບ* | *ກີບ* |
| ກໍາໄລສຸດທິທີ່ແບ່ງປັນໃຫ້ແກ່ຜູ້ຖືຮຸ້ນສາມັນເປັນເງິນກີບ | 58,453,781,976 | 60,799,235,983 |
| ຈໍານວນສະເລ່ຍຖ່ວງນໍ້າໜັກຮຸ້ນສາມັນ | 165,000,000 | 165,000,000 |
| **ກໍາໄລຕໍ່ຮຸ້ນຂັ້ນພື້ນຖານ** | 354 | 368 |

## 26. ເງິນປັນຜົນ

ໃນກອງປະຊຸມໃຫຍ່ຜູ້ຖືຮຸ້ນໃນວັນທີ 8 ເມສາ 2024, ຜູ້ຖືຮຸ້ນໄດ້ມີມະຕິຕົກລົງປະກາດຈ່າຍເງິນປັນຜົນຈາກກໍາໄລສະສົມທີ່ຍັງບໍ່ໄດ້ຈັດສັນ ພາຍຫຼັງການຫັກຄັງສໍາຮອງຕາມລະບຽບການ ແລະ ຄັງສໍາຮອງອື່ນໆ ແລະ ກໍາໄລສຸດທິຈາກວັນທີ 1 ມັງກອນ 2023 ຫາ 31 ທັນວາ 2023 ຈໍານວນ 120 ກີບ ຕໍ່ຮຸ້ນລວມມູນຄ່າທັງໝົດ 19,800 ລ້ານກີບ ຫຼື ທຽບເທົ່າ 30,461,533 ບາດ (2022: 16,500 ລ້ານກີບ ຫຼື ທຽບເທົ່າ 32,352,942 ບາດ). ເງິນປັນຜົນໄດ້ຈ່າຍໃຫ້ຜູ້ຖືຫຸ້ນໃນເດືອນພຶດສະພາ 2024.

## 27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງພາຍໃນໄລຍະມີດັ່ງນີ້:

| *ຂາຮຸ້ນ* | *ຈໍານວນຮຸ້ນ (ມູນຄ່າຮຸ້ນ: 2,000 ກີບ/ຮຸ້ນ)* | *ອັດຕາສ່ວນຮ້ອຍຂອງຮຸ້ນ* |
|---|---|---|
| ທ່ານ ວັດດານາ ສຸຄະບັນດິດ (*) | 28,524,440 | 17.29% |
| ທ່ານ ພົນໄນລາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານ ກິດສະດາ ສຸຄະບັນດິດ (*) | 26,844,580 | 16.27% |
| ທ່ານນາງ ປະພັດສອນ ສຸຄະບັນດິດ (*) | 840,000 | 0.51% |
| ທ່ານນາງ ວຽງດາລາ ບຸບຜາ (*) | 840,000 | 0.51% |
| ທ່ານ ອານຸສອນ ອຸ່ນໄຕ (*) | 28,000 | 0.02% |
| ທ່ານ ບຸນທະວີ ສີມມາໄຊ (*) | 22,400 | 0.01% |
| ທ່ານ ສຸວັນນີ ສີສົມໃຈ (*) | 28,000 | 0.02% |
| ທ່ານ ໄຊສັງຄົມ ຊຸມມະນີວົງ (*) | 28,000 | 0.02% |
| Global House International Limited | 56,000,000 | 33.94% |
| ຂາຮຸ້ນທີ່ເປັນບໍລິສັດມະຫາຊົນ ແລະ ບຸກຄົນອື່ນໆ | 25,000,000 | 15.15% |
| | **165,000,000** | |

(*) ຂາຮຸ້ນເຫຼົ່ານີ້ເປັນຕົວແທນໃຫ້ແກ່ ຄອບຄົວສຸຄະບັນດິດ ທີ່ມີອັດຕາສ່ວນການຖືຮຸ້ນທັງໝົດ 50.92%.

## 27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### 27.1 ລາຍຮັບ ແລະ ລາຍຈ່າຍ

ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາ. ບັນດາລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ຄວາມສຳພັນ* | *ທຸລະກຳ* | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|---|---|
| SCG INTERNATIONAL CORPORATION Co., Ltd | ບໍລິສັດໃນເຄືອ | ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ | 76,593,632,060 | 72,802,423,277 |
| SCG CERAMICS PUBLIC COMPANY LIMITED | ບໍລິສັດໃນເຄືອ | ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ | 52,102,988,728 | 76,387,660,042 |
| SCG INTERNATIONAL LAOS CO.,LTD | ບໍລິສັດໃນເຄືອ | ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ | 142,931,805 | - |
| SCG DISTRIBUTION CO.,LTD | ບໍລິສັດໃນເຄືອ | ຄ່າທຳນຽມຜູ້ຊ່ຽວຊານ | 144,785,253 | - |
| ຄອບຄົວສຸຄະບັນດິດ | ຜູ້ຖືຮຸ້ນ | ລາຍຈ່າຍຄ່າເຊົ່າ | 18,280,370,645 | 17,269,278,418 |
| | | ລາຍຮັບຈາກສິນຄ້າທີ່ຂາຍໃຫ້ພາກສ່ວນທີ່ກ່ຽວຂ້ອງ | 421,391,910 | - |

ລາຍຈ່າຍຄ່າເຊົ່າແມ່ນການເຊົ່າທີ່ດິນ ແລະ ອາຄານຈາກຜູ້ຖືຮຸ້ນ ເພື່ອນຳໃຊ້ໃນການດຳເນີນງານ ເຊິ່ງເປັນລາຄາທີ່ຕົກລົງເຫັນດີກັນທັງສອງຝ່າຍຫຼັງຈາກມີການປະເມີນມູນຄ່າ.

### 27.2 ຍອດເຫຼືອທີ່ຕິດພັນກັບລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

| *ພາກສ່ວນທີ່ກ່ຽວຂ້ອງ* | *ຄວາມສຳພັນ* | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|---|
| ***ຄ່າເຊົ່າຈ່າຍລ່ວງໜ້າ*** | | | |
| ຄອບຄົວສຸຄະບັນດິດ | ຜູ້ຖືຮຸ້ນ | 34,626,106,186 | 36,561,604,277 |
| ***ໜີ້ຕ້ອງຮັບການຄ້າ*** | | | |
| ຄອບຄົວສຸຄະບັນດິດ | ຜູ້ຖືຮຸ້ນ | 119,438,543 | - |

## 27. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### 27.2 ຍອດເຫຼືອຄົງຄ້າງທີ່ຕິດພັນກັບລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

| *ພາກສ່ວນທີ່ກ່ຽວຂ້ອງ* | *ຄວາມສຳພັນ* | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|---|
| ***ໜີ້ຕ້ອງສົ່ງການຄ້າ ແລະ ອື່ນໆ** (ບົດອະທິບາຍເລກທີ 11)* | | | |
| SCG INTERNATIONAL CORPORATION Co., Ltd | ບໍລິສັດໃນເຄືອ | 3,494,019,165 | 3,306,029,755 |
| SCG CERAMICS PUBLIC COMPANY LIMITED | ບໍລິສັດໃນເຄືອ | 4,261,702,486 | 8,093,279,309 |
| SCG DISTRIBUTION CO.,LTD | ບໍລິສັດໃນເຄືອ | 139,047,675 | - |
| | | **7,894,769,326** | **11,399,309,064** |

***ລາຍການທຸລະກຳທີ່ກ່ຽວຂ້ອງກັບຜູ້ບໍລິຫານ***

ຜົນຕອບແທນຂອງສະມາຊິກຄະນະບໍລິຫານມີດັ່ງນີ້:

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|
| ເງິນເດືອນ ແລະ ຜົນປະໂຫຍດອື່ນໆ | 7,914,955,888 | 5,107,732,882 |

## 28. ພັນທະຜູກພັນ

### *28.1* ພັນທະຜູກພັນສັນຍາເຊົ່າ

*ໃນຖານະຜູ້ເຊົ່າ*

ບໍລິສັດໄດ້ໃຫ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າການດຳເນີນງານທີ່ບໍ່ສາມາດຍົກເລີກໄດ້ຈາກຜູ້ຖືຮຸ້ນ. ອາຍຸສັນຍາເຊົ່າແມ່ນສອງຫາຫ້າປີເຄິ່ງ, ແລະ ສັນຍາເຊົ່າສ່ວນໃຫຍ່ແມ່ນສາມາດຕໍ່ອາຍຸສັນຍາໄດ້ ໃນຮອບເວລາສິ້ນສຸດຂອງສັນຍາຫຼັງຈາກການປະເມີນມູນຄ່າຄືນໃໝ່.

| | *31 ທັນວາ 2024*<br>*ກີບ* | *31 ທັນວາ 2023*<br>*ກີບ* |
|---|---|---|
| ຕໍ່າກວ່າ 1 ປີ | - | - |
| ແຕ່ 1 - 5 ປີ | 41,548,442,288 | 30,300,203,016 |
| **ລວມ** | **41,548,442,288** | **30,300,203,016** |

### *28.2* ໜັງສືສິນເຊື່ອ ແລະ ການຄໍ້າປະກັນ

ນະວັນທີ 31 ທັນວາ 2024, ບໍລິສັດໄດ້ມີໜັງສືສິນເຊື່ອ ແລະ ຄໍ້າປະກັນ ທີ່ອອກໂດຍສະຖາບັນການເງິນເພື່ອໃຊ້ເຂົ້າໃນການນຳເຂົ້າສິນຄ້າຈາກຜູ້ສະໜອງທີ່ຢູ່ໃນຕ່າງປະເທດ ໂດຍມີຍອດລວມສັນຍາສຸດທິ 29 ລ້ານບາດ.

## 29. ເຫດການພາຍຫຼັງວັນທີຂອງເອກະສານລາຍງານການເງິນ

ບໍ່ມີເຫດການໃດທີ່ເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2024 ທີ່ສົ່ງຜົນໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນທີ່ຖືກແປງຄ່າເປັນເງິນກີບຂອງບໍລິສັດ.

ທ່ານ ວັດດານາ ສຸຄະບັນດິດ
ຜູ້ອໍານວຍການໃຫຍ່

ທ່ານ ພັນໂນລາ ສຸຄະບັນດິດ
ຜູ້ອໍານວຍການຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

20 ກຸມພາ 2025

5. ເສັ້ນສະແດງແນວໂນ້ມຜົນການດຳເນີນງານ ແລະ ສະຖານະການເງິນ ໃນຊ່ວງ 5ປີ ຍ້ອນຫຼັງຂອງບໍລິສັດ

- ລາຍຮັບຍ້ອນຫຼັງ 5ປີ




- ອັດຕາກຳໄລຂັ້ນຕົ້ນຍ້ອນຫຼັງ 5ປີ




- ອັດຕາລາຍຈ່າຍທຽບລາຍຮັບຍ້ອນຫຼັງ 5ປີ



- ອັດຕາກຳໄລສຸດທິທຽບລາຍຮັບຍ້ອນຫຼັງ 5ປີ




- ຊັບສິນຍ້ອນຫຼັງ 5ປີ




- ໜີ້ສິນລວມຍ້ອນຫຼັງ 5ປີ



## 6. ວຽກງານດ້ານການຕະຫຼາດ ປີ 2024

### 6.1. ຍຸດທະສາດດ້ານຜະລິດຕະພັນ (Product):

- ໄດ້ມີການຈັດສັນສິນຄ້າໃຫ້ເປັນໝວດໝູ່ ທີ່ຖືກຕ້ອງ ແລະ ກໍານົດຈຸດຢືນ ຂອງສິນຄ້າແຕ່ລະໂຕ ຢ່າງຊັດເຈນ ເພື່ອກໍານົດແນວທາງ ປະຕິບັດໃຫ້ມີປະສິດທິພາບ;

### 6.2. ຍຸດທະສາດດ້ານຊ່ອງທາງການຈັດຈໍາໜ່າຍ (Place)

- ໃນປີ 2024 ທີ່ຜ່ານມາ ສຸວັນນີ ໂຮມເຊັນເຕີ ໄດ້ສືບຕໍ່ສ້າງຄວາມສາຍສາພັນທີ່ດີ ກັບກຸ່ມລູກຄ້າ ໃນຊ່ອງທາງຕ່າງໆ ບໍ່ວ່າຈະເປັນລູກຄ້າໜ້າຮ້ານ, ຮ້ານຄ້າຊ່ວງ, ໂຄງການ ແລະ ຊ່າງ ໂດຍຜ່ານ ໂປຣໂມຊັນ ແລະ ກິດຈະກໍາ Souvanny Club;
- ໄດ້ພັດທະນາເວັບໄຊ ແລະ Mobile Application ຂາຍອອນລາຍ ເພື່ອໃຫ້ລູກຄ້າເລືອກຊື້ ສິນຄ້າໄດ້ສະດວກສະບາຍ ພ້ອມທັງເປັນການຂະຫຍາຍຂອບເຂດການຂາຍໃຫ້ກວ້າງຂວາງຂຶ້ນ ໂດຍເປີດໃຫ້ມີການຊື້ຂາຍທາງ Souvanny Retail Apps ຕັ້ງແຕ່ເດືອນມິຖຸນາ ປີ 2024 ເປັນຕົ້ນມາ ແລະ ສ້າງສາມາດສ້າງຍອດຂາຍໄດ້ຫຼາຍພໍສົມຄວນ

www.souvanny.la



Souvanny (Retail) App



## 6.3. ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)

### 6.3.1. ການໂຄສະນາປະຊາສຳພັນ:

ພວກເຮົາໄດ້ເຮັດໂຄສະນາຜ່ານຫຼາຍຊ່ອງທາງ ທັງຊ່ອງທາງ Offline and Online ເພື່ອສ້າງຄວາມຮັບຮູ້ສຸວັນນີ ແລະ ຍີ່ຫໍ້ສິນຄ້າ ເພື່ອສ້າງຄວາມຕ້ອງການສິນຄ້າໃນໝວດສິນຄ້າຫຼັກ ຂອງບໍລິສັດ ຜ່ານຄອນເທັນຕ່າງໆ ທີ່ກົງຕໍ່ແຕ່ລະກຸ່ມຕະຫຼາດເປົ້າໝາຍເຊັ່ນ:

- **ຊ່ອງທາງ Offline** ເຊັ່ນ: ໃບປິວ, ປ້າຍຕິດລົດ, ປ້າຍບິວບອດແຄມທາງ, ວິທະຍຸທ້ອງຖິ່ນ ແລະ ອື່ນໆ
- **ຊ່ອງທາງ Online** ເຊັ່ນ: Facebook, Instagram, Youtube ແລະ Tiktok

ໃບປິວ






Online Content






### 6.3.2. ການສົ່ງເສີມການຂາຍ

ພວກເຮົາໄດ້ເຮັດກິດຈະກຳສົ່ງເສີມການຂາຍຫຼາຍຮູບແບບ ບໍ່ວ່າຈະເປັນການສົ່ງເສີມການຂາຍ ໂດຍມຸ້ງເນັ້ນລູກຄ້າ, ພະນັກງານຂາຍ ແລະ ຮ້ານຄ້າວັດສະດຸກໍ່ສ້າງ ເພື່ອໃຫ້ເກີດການຊື້ຊ້ຳ ແລະ ຊື້ຫຼາຍຂຶ້ນເຊັ່ນ:

- ໂຄງການ: Souvanny Club ສະໝັກສະມາຊິກ ສະສົມຄະແນນ ແລກຂອງລາງວັນ ເພື່ອເປີດໂອກາດໃຫ້ລູກຄ້າ ມີເວລາສະສົມຍອດຊື້ກໍ່ຄືຈຳນວນແຕ້ມຕະຫຼອດປີ ແລະ ສາມາດແລກຂອງລາງວັນໄດ້ທຸກເວລາ








- ໂປຣຊື້ຄົບຮັບເລີຍ ໂດຍບໍ່ຕ້ອງລຸ້ນ ເພື່ອສ້າງຄວາມປະທັບໃຈໃຫ້ລູກຄ້າ ທີ່ຊື້ຫຼາຍຍິ່ງໄດ້ຂອງລາງວັນຫຼາຍ;






- ໂປຣ ສຸວັນນີ ແຈກຄຳ ຊິງໂຊກ ເພື່ອ ຄືນກຳໄລໃຫ້ກັບລູກຄ້າ ເຊິ່ງເລີ່ມແຕ່ ເດືອນ 3-7 ປີ 2024 ແຈກສາຍຄໍຄຳ , ເຄື່ອງໃຊ້ໄຟຟ້າ ແລະ ລາງວັນອື່ນໆ ລວມມູນຄ່າຫຼາຍກ່ວາ 560 ລ້ານກີບ








## 7. ວຽກງານດ້ານບຸກຄະລາກອນ ປີ 2024

- ໃນປີ 2024 ບໍລິສັດໄດ້ມີການປັບຕຳແໜ່ງ ແລະ ເລື່ອນຕຳແໜ່ງໃຫ້ພະນັກງານໃນລະດັບທົ່ວໄປ ທີ່ກ້າວຂຶ້ນມາເປັນພະນັກງານລະດັບຜູ້ຈັດການພະແນກຫຼາຍຕຳແໜ່ງ ສຳລັບຜູ້ທີ່ມີການປະຕິບັດວຽກດີ, ມີຄວາມຫ້າວຫັນ ແລະ ພັດທະນາຕົນເອງຕະຫຼອດເວລາ;
- ໄດ້ສົ່ງເສີມໃຫ້ພະນັກງານໃນແຕ່ລະດັບໃຫ້ມີຄວາມຮູ້ຄວາມສາມາດ ໂດຍການຈັດໃຫ້ມີການສຳມະນາ ທັງພາຍໃນ ແລະ ພາຍນອກຢ່າງເປັນປະຈຳຕໍ່ເນື່ອງ ໃນດ້ານຄວາມຮູ້ທາງດ້ານສິນຄ້າ, ການບໍລິການ, ເທັກນິກການຂາຍ ລວມເຖິງດ້ານອື່ນໆ ທີ່ເຫັນວ່າຈຳເປັນສຳລັບພະນັກງານ ແລະ ສຳລັບພະນັກງານລະດັບຜູ້ຈັດການແມ່ນໄດ້ມີການພັດທະນາຄວາມຮູ້ທາງດ້ານພາວະຜູ້ນຳ, ດ້ານການຈັດການຂັ້ນສູງ ແລະ ດ້ານອື່ນໆ ທີ່ເຫັນວ່າເໝາະສົມ.





### ອັດຕາສະເລ່ຍອາຍຸການເຮັດວຽກຂອງພະນັກງານພາຍໃນອົງກອນ

| ຊ່ວງອາຍຸ | ຈຳນວນພ/ງ | ສັດສ່ວນ % |
|---|---|---|
| 0-2 ປີ | 307 | 35% |
| 3-5 ປີ | 150 | 17% |
| 6-8 ປີ | 214 | 24% |
| 9-11 ປີ | 84 | 10% |
| 12-15 ປີ | 69 | 8% |
| 16 ຂຶ້ນປີໄປ | 51 | 6% |
| ລວມ | 875 | 100% |

## IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2024

### 1. ທຶນຈົດທະບຽນ

ບໍລິສັດມີທຶນຈົດທະບຽນທັງໝົດ ນະວັນທີ 31 ທັນວາ 2024 ແມ່ນ 330,000,000,000 ກີບ ເປັນຮຸ້ນສາມັນຈຳນວນ 165,000,000ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2,000 ກີບ

### 2. ຜູ້ຖືຮຸ້ນ 5 ສ່ວນຮ້ອຍຂຶ້ນໄປ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປໄດ້ແກ່: ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 80,893,600 ຮຸ້ນ (51%) ແລະ ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56,000,000 ຮຸ້ນ (33,94%)

# V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ

## 1. ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ



## 2. ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 2024



**ທ່ານສົມຈິດ ອິນທະມິດ**
ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານຄະນະ
ກຳມະການຄັດເລືອກ ແລະ ຄຸ້ມຄອງຄວາມສ່ຽງ

**ທ່ານ ຣສ.ປອ ໄຊພອນ ກອງມະນີລາ**
ຮອງປະທານສະພາບໍລິຫານ, ສະມາຊິກອິດ
ສະຫຼະ ແລະ ປະທານຄະນະກຳມະການກວດສອບ





**ທ່ານວັດດານາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ
ຜູ້ອຳນວຍການໃຫຍ່

**ທ່ານສອນສະຫວັນ ແສງອຳໄພ**
ສະມາຊິກສະພາບໍລິຫານ
ສະມາຊິກອິດສະຫຼະ, ປະທານຄະນະ
ກຳມະການກຳນົດຄ່າຕອບແທນ





**ທ່ານພັນໂນລາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່,
ຜູ້ອຳນວຍການຝ່າຍການເງິນ

**ທ່ານ ນາງຄຳໄຂ ລໍວັນໄຊ**
ສະມາຊິກສະພາບໍລິຫານ
ຜູ້ຈັດການຝ່າຍຈັດຊື້





**ທ່ານກິດສະດາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ
ຮອງຜູ້ອຳນວຍການໃຫຍ່,
ຜູ້ອຳນວຍການຝ່າຍປະຕິບັດການ

**ທ່ານ ນາງຊຸຕິການ ສີແສງຈັນ**
ສະມາຊິກສະພາບໍລິຫານ





**ທ່ານພິພັບ ວາດສະໜາອາຊາສະກຸນ**
ສະມາຊິກສະພາບໍລິຫານ

## 3. ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ

### 3.1. ທ່ານສົມຈິດ ອິນທະມິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 13 ມີນາ 1959
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານຈອມມະນີ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຕໍາແໜ່ງ : ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານກໍາມະການຄັດເລືອກ ແລະ ຄຸ້ມຄອງຄວາມສ່ຽງ

➢ **ວຸດທິການສຶກສາ**

ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ມາກຕິນລຸເທີຣານເລ ວິດເຕີນແບກ, ປະເທດເຢຍລະມັນ ປີ 1985

➢ **ປະຫວັດການເຮັດວຽກ**

- ວິຊາການ ສະຖານທູດລາວທີ່ນະຄອນຫຼວງເບີລິນ ປີ 1985-1986
- ວິຊາການ ພະແນກການວາງແຜນກະສິກໍາ. ຄະນະກະມະການການວາງແຜນແຫ່ງລັດ ປີ 1987-1988
- ຜູ້ຊ່ວຍຮອງລັດຖະມົນຕີ ກະຊວງການຄ້າ ແລະ ການພົວພັນເສດຖະກິດຕ່າງປະເທດ ປີ 1989-1990
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດ. ກະຊວງການຄ້າ ແລະ ພົວພັນເສດຖະກິດຕ່າງປະເທດ ປີ 1990-1993
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດຕ່າງປະເທດ. ຄະນະກໍາມະການແຜນການ ແລະ ການຮ່ວມມື ປີ 1994-1996
- ຫົວໜ້າກົມ ກົມຮ່ວມມືເສດຖະກິດອາຊຽນ ປີ 1996-1999
- ຄະນະ ເປັນເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດຂອງ ສປປ ລາວ ປະຈໍາອາຊຽນ(SOM) ປີ 1997-2005
- ຄະນະ ຄະນະເຈລະຈາກັບອົງການການຄ້າໂລກ ປີ 2004
- ຫົວໜ້າກົມ ກົມເສດຖະກິດ. ກະຊວງການຕ່າງປະເທດ ປີ 1999-2007
- ຫົວໜ້າກົມ ກົມຮ່ວມມືສາກົນ. ກະຊວງແຜນການ ແລະ ການລົງທຶນ ປີ 2008-2011
- ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ປີ 2011-2014
- ຮອງລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ປີ 2014-2021
- ຮອງຫົວໜ້າຄະນະ ຄະນະກໍາມະການດ້ານເສດຖະກິດ-ການເງິນສະເພາະທິດສະດີສູນກາງພັກ ວັນທີ 25 ມັງກອນ 2022- ເຖິງປະຈຸບັນ

### 3.2. ທ່ານ ຮສ. ປອ ໄຊພອນ ກອງມະນີລາ



- ສັນຊາດ : ລາວ
- ວັນເດືອນປີເກີດ : 30 ທັນວາ 1973
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານນາສ້ຽວ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານ ຄະນະກຳມະການກວດສອບ

➢ **ວຸດທິການສຶກສາ**

ປະລິນຍາເອກບໍລິຫານທຸລະກິດ ມະຫາວິທະຍາໄລ ຮີໂຣຊິມ່າ, ປະເທດຍີ່ປຸ່ນ ປີ 2009

➢ **ປະຫວັດການເຮັດວຽກ**

- ວິຊາການ ບໍລິສັດ ລາວໂທລະຄົມ ປີ 1995-1997;
- ຜູ້ກວດສອບພາຍໃນ ບໍລິສັດ ໄຮຄີ ແຄຄອນ ຈຳກັດ ປີ 2000-2011;
- ຫົວໜ້າພະແນການຕະຫລາດ ແລະ ປະຕິບັດການ ບໍລິສັດຄ້າຮຸ່ງໂຣດລາວ ປີ 2011;
- ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2002-2020;
- ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2011-2017;
- ຄະນະກຳມະການກວດສອບສະພາບໍລິຫານຂອງທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ, ປີ 2011-2017;
- ທີ່ປຶກສາທາງດ້ານການເງິນຂອງບໍລິສັດ ທິບພະຍະ ປະກັນໄພ ລາວ ຈຳກັດ, ປີ 2018;
- ຮັບລາງວັນເປັນນັກຄົ້ນຄວ້າດີເດັ່ນຂອງມະຫາວິທະຍາໄລແຫ່ງຊາດ, ປີ 2018;
- ອາຈານຮັບເຊີນໄປສອນຢູ່ມະຫາວິທະຍາໄລ ເຊັນຊູ ປະເທດຍີ່ປຸ່ນ, 2019-2020; 2023;
- ສະມາຊິກສະພາບໍລິຫານ, ຄະນະກຳມະການກວດສອບ ແລະ ຄະນະກຳມະການບໍລິຫານຄວາມສ່ຽງ ທະນາຄານ ສົ່ງເສີມກະສິກຳ ຈຳກັດ, ປີ 2022-ປະຈຸບັນ;
- ຊ່ຽວຊານປະຈຳໂຄງການ FLECT-FC ຂອງກະຊວງກະສິກຳ ແລະ ປ່າໄມ້, ປີ 2022-ປະຈຸບັນ;
- ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2017-2025;
- ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2025-ປະຈຸບັນ.

## 3.3. ທ່ານວັດດານາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 28 ຕຸລາ 1966
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານວຽງຈະເລີນ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ ປະເທດໄທ ປີ 2002

➢ **ປະຫວັດການເຮັດວຽກ**

- ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນປີ 1988-ປະຈຸບັນ

## 3.4. ທ່ານສອນສະຫວັນ ແສງອຳໄພ



- ສັນຊາດ : ລາວ
- ວັນເດືອນປີເກີດ : 30 ມິຖຸນາ 1960
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໂພນສະຫວາດໃຕ້, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານຄະນະກຳມະການກຳນົດຄ່າຕອບແທນ

➢ **ວຸດທິການສຶກສາ**

- ປະລິນຍາໂທ ກົດໝາຍ (ກົດໝາຍພາຍໃນຈາກມະຫາໄລແຫ່ງຊາດລັດຕັດຊິກກິດສະຖານ ອະດີດສະຫະພາບໂຊວຽດ), ປີ 1993
- ປະລິນຍາໂທ ກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ບາງກອກ, ປະເທດໄທ, ປີ 2009

➢ **ປະຫວັດການເຮັດວຽກ**

- ວິຊາການ ກະຊວງຍຸຕິທຳ ປີ 1982-1988;
- ສຶກສາຢູ່ມະຫາໄລແຫ່ງຊາດ ລັດຕັດຊິກກິດສະຖານ (ອາທິດສະຫາພາບໂຊວຽດ) ປີ 1988-1993;
- ຈ່າສານ ພະແນກຍຸຕິທຳ ແຂວງວຽງຈັນ (ສານປະຊາຊົນ ແຂວງວຽງຈັນ) ປີ 1993-1994;
- ວິຊາການ ອົງການໄອຍະການປະຊາຊົນສູງສຸດ ປີ 1994-1995;

• ຫົວໜ້າອົງການໄອຍະການ ໄອຍະການເມືອງ ອົງການໄອຍະການ ເມືອງ ສີໂຄດຕະບອງ ປີ 1995-1998;
• ພະນັກງານສອບສວນ, ຮອງຫົວໜ້າພະແນກ ອົງການໄອຍະການປະຊາຊົນສູງສຸດ ປີ 1998-2001;
• ຫົວໜ້າພະແນກຢູ່ກົມຕິດຕາມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ ປີ 2001-2004;
• ຮອງຫົວໜ້າ ກົມຕິດຕາມກວດກາຄະດີແພ່ງ ປີ 2004-2009;
• ຮຽນຕໍ່ປະລິນຍາໂທກົດໝາຍ ຈຸລາລົງກອນມະຫາວິທະຍາໄລ, ປະເທດໄທ, ປີ 2005-2009;
• ຫົວໜ້າກົມຕິດຕາມກວດກາຄະດີແພ່ງ ປີ 2009-2015;
• ຫົວໜ້າກົມກວດກາ ປີ 2015-2021;
• ເຂົ້າບຳນານ ວັນທີ 01/07/2021;
• ທະນາຍຄວາມ (ສະມາຊິກສະພາທະນາຍຄວາມລາວ) ວັນທີ 10/09/2022;
• ທີ່ປຶກສາ ບໍລິສັດຮຸ່ງເຮືອງຄຸນນະທຳທີ່ປຶກສາກົດໝາຍຈຳກັດ ວັນທີ 01/07/2021-10/202
• ທີ່ປຶກສາກົດໝາຍ ຢູ່ບໍລິສັດ ກົດໝາຍລ້ານຊ້າງ ຈຳກັດຜູ້ດຽວ, 11/2023-05/2024;
• ທີ່ປຶກສາກົດໝາຍ ຢູ່ບໍລິສັດ ຣາຈາ ແອນ ທານ ລາວ ຈຳກັດ, 06/2024-ປະຈຸບັນ.

## 3.5. ທ່ານພັນໂນລາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 22 ກັນຍາ 1969
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໂພນສະຫວັນເໜືອ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ ປະເທດໄທ ປີ 2002

➢ **ປະຫວັດການເຮັດວຽກ**

- ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 1988-ປະຈຸບັນ

## 3.6. ທ່ານກິດສະດາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 04 ມັງກອນ 1972
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໜອງໜ່ຽງ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍຝ່າຍປະຕິບັດການ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຂອນແກ່ນ, ປະເທດໄທ ປີ 2007

➢ **ປະຫວັດການເຮັດວຽກ**

- ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-ປະຈຸບັນ

## 3.7. ທ່ານ ນາງຄຳໄຂ ລໍວັນໄຊ



- ສັນຊາດ : ລາວ
- ວັນເດືອນປີເກີດ : 21 ສິງຫາ 1978
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານນາແຄຄຳ, ເມືອງໄຊທານີ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ ແລະ ຜູ້ຈັດການຈັດຊື້

➢ **ວຸດທິການສຶກສາ**

ປະລິຍາຕີບໍລິຫານທຸະລກິດ ວິທະຍາໄລ ເສດຖາບໍລິຫານທຸລະກິດ ປະເທດລາວ ປີ 2010

➢ **ປະຫວັດການເຮັດວຽກ**

- ພະນັກງານຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-2005
- ຫົວໜ້າຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2005-2015
- ຜູ້ຈັດການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນປີ 2015-ປະຈຸບັນ

### 3.8. ທ່ານ ນາງຊຸຕິການ ສີແສງຈັນ



- ສັນຊາດ : ໄທ
- ວັນເດືອນປີເກີດ : 25 ເມສາ 1969
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ແຂວງ ຂອນແກ່ນ, ປະເທດໄທ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ ປີ 2001

➢ **ປະຫວັດການເຮັດວຽກ**

- ກຳມະການບໍລິສັດ Siam Global House PCL ປີ 2008-2012
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີ ແລະ ການເງິນ Siam Global House PCL ປີ 2012- ປະຈຸບັນ

### 3.9. ທ່ານພິພົບ ວາດສະໜາອາຊາສະກຸນ



- ສັນຊາດ : ລາວ
- ວັນເດືອນປີເກີດ : 21 ພຶດສະພາ 1970
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ກຸງເທບ, ປະເທດໄທ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ

➢ **ວຸດທິການສຶກສາ**

ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ, ປະເທດໄທ ປີ 1993

➢ **ປະຫວັດການເຮັດວຽກ**

- ຜູ້ຊ່ວຍຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2014-2017
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2017-ປະຈຸບັນ
- ຄະນະກຳມະການ ບໍລິສັດ ພີທີ ຄາທູກາດ້າ ເດໂປ້ ບັນກູນັນ ທີບີເຄ (ປະເທດ ອິນໂດເນເຊຍ) ປີ 2022-ປະຈຸບັນ

## ຄະນະຜູ້ອຳນວຍການ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

CFO



**ທ່ານພັນໂນລາ ສຸຄະບັນດິດ**
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍການເງິນ.

CEO



**ທ່ານວັດດານາ ສຸຄະບັນດິດ**
ຜູ້ອຳນວຍການໃຫຍ່

COO



**ທ່ານກິດສະດາ ສຸຄະບັນດິດ**
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍປະຕິບັດການ.

## 4. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2024

### 4.1. ການຈັດກອງປະຊຸມ

- ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ
- ຄະນະກຳມະການກວດສອບ ໄດ້ມີການຈັດກອງປະຊຸມ ຈຳນວນ 4 ຄັ້ງ
- ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ

### 4.2. ການເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານ

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ຈຳນວນຄັ້ງເຂົ້າຮ່ວມກອງປະຊຸມ | | | | | |
|---|---|---|---|---|---|---|---|---|
| | | | ກອງປະຊຸມຜູ້ຖືຮຸ້ນ | ກອງປະຊຸມສະພາບໍລິຫານ | ກອງປະຊຸມຄະນະກຳມະການກວດສອບ | ກອງປະຊຸມຄະນະກຳມະການຄັດເລືອກ | ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ | ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ |
| 1 | ທ່ານສົມຈິດ ອິນທະມິດ | ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ | 1 | 4 | | 2 | 2 | |
| 2 | ທ່ານຣສ ປອ ໄຊ ພອນ | ຮອງປະທານ ສະພາບໍລິຫານ, | 1 | 4 | 4 | | | |

| | | | | | | | | |
|---|---|---|---|---|---|---|---|---|
| | ກອງມະນີລາ | ສະມາຊິກ ອິດສະຫຼະ | | | | | | |
| 3 | ທ່ານວັດດານາ ສຸຄະບັນດິດ | ສະມາຊິກ ສະພາບລິຫານ, ຜູ້ອຳນວຍການ ໃຫຍ່ (CEO) | 1 | 4 | 3 | 2 | 2 | 2 |
| 4 | ທ່ານສອນ ສະຫວັນ ແສງອະໄພ | ສະມາຊິກສະພາ ບໍລິຫານ, ສະມາຊິກ ອິດສະຫຼະ | 1 | 4 | | | | 2 |
| 5 | ທ່ານພັນໂນລາ ສຸຄະບັນດິດ | ສະມາຊິກສະພາ ບໍລິຫານ,ຮອງ ຜູ້ອຳນວຍການ ໃຫຍ່, ຜູ້ອຳນວຍການ ໃຫຍ່ຝ່າຍການ ເງິນ (CFO) | 1 | 4 | 4 | 2 | 2 | 2 |
| 6 | ທ່ານກິດສະດາ ສຸຄະບັນດິດ | ສະມາຊິກສະພາ ບໍລິຫານ,ຮອງ ຜູ້ອຳນວຍການ ໃຫຍ່, ຜູ້ອຳນວຍການ ຝ່າຍປະຕິບັດ ການ (COO) | 1 | 4 | 4 | 2 | 2 | 2 |
| 7 | ທ່ານ ນາງຄຳໄຂ ລໍວັນໄຊ | ສະມາຊິກສະພາ ບໍລິຫານ,ຜູ້ ຈັດການຝ່າຍຈັດ ຊື້ | 1 | 4 | | | | |
| 8 | ທ່ານ ນາງຊຸຕິການ ສີແສງຈັນ | ສະມາຊິກສະພາ ບໍລິຫານ | 1 | 4 | | | | |
| 9 | ທ່ານພິພົບ ວາດສະໜາອາຊາ ສະກຸນ | ສະມາຊິກສະພາ ບໍລິຫານ | 1 | 4 | | | | |

### 5. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື

- ປະທານສະພາບໍລິຫານ: 10,500,000 ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 6,600,000 ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 6,600,000 ກີບ/ຄັ້ງ

## VI. ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ປະຈຳປີ 2024

ບໍລິສັດ ເອິນ ແອນ ຢັງ (ລາວ) ຈຳກັດ (Ernst & Young lao Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2024 ໂດຍມີຄ່າບໍລິການເປັນເງິນຈຳນວນບໍ່ກາຍ **560,740,000 ກີບ**

## VII. ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2024

### 1. ການມອບພັນທະອາກອນ ປີ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ ໂດຍສະເພາະກົດ ໝາຍສ່ວຍສາອາກອນຢ່າງເຂັ້ມງວດ ເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ ແລະ ອາກອນກຳໄລເປັນຕົ້ນ.

**ການມອບພັນທະອາກອນໃຫ້ລັດ ປະຈຳປີ 2024**

| ລຳດັບ | ລາຍການ | 2024 (ກີບ) | 2023 (ກີບ) |
|---|---|---|---|
| 1 | ພາສີນຳເຂົ້າ | 4,551,108,844 | 3,133,197,400 |
| 2 | ອາກອນມູນຄ່າເພີ່ມ | 81,294,925,202 | 54,844,898,382 |
| 3 | ອາກອນຊົມໃຊ້ | 246,663,200 | 6,320,800 |
| 4 | ອາກອນເງິນເດືອນ | 5,641,477,589 | 3,209,883,208 |
| 5 | ອາກອນກຳໄລ | 22,586,657,239 | 7,001,697,500 |
| **ລວມ** | | **114,320,832,074** | **68,195,997,290** |

### 2. ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2024

ໃນປີ 2024 ທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ໂດຍປະຕິບັດຕາມ ນະໂຍບາຍຄວາມຮັບຜິດຊອບຕໍ່ສັງຄົມ ໃນການຊ່ວຍເຫຼືອສັງຄົມໃນດ້ານຕ່າງໆ ຫຼາຍກວ່າ 50ໂຄງການທົ່ວປະເທດ ໂດຍຜ່ານໂຄງການ: **"ສ້າງຮອຍຍິ້ມດ້ວຍການແບ່ງປັນ"** ໂດຍມີລາຍລະອຽດດັ່ງນີ້:

#### 2.1. ການຊ່ວຍເຫຼືອດ້ານການສຶກສາ, ກິລາ ແລະ ສິລະປະ ປີ 2024

ໃນວັນທີ 26-27 ສິງຫາ 2024 ທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມອບອຸປະກອນການຮຽນ, ເຄື່ອງນຸ່ງນັກຮຽນ, ອຸປະກອນກິລາ ແລະ ອຸປະກອນດົນຕີ ລວມມູນຄ່າຊ່ວຍເຫຼືອທັງໝົດ 60,000,000 ກີບ ໃຫ້ແກ່ 6 ໂຮງຮຽນປະຖົມສຶກສາ ທີ່ແຂວງວຽງຈັນຄື: ປະກອບມີ 3 ບ້ານ ຢູ່ເມືອງໝື່ນ ໄດ້ແກ່ ບ້ານໂພນສີວິໄລ, ບ້ານນ້ຳເລົ້າ, ບ້ານນາຍາວ ແລະ ອີກ 3 ບ້ານ ຢູ່ເມືອງແມດ ໄດ້ແກ່ ບ້ານ

ຫ້ວຍປ່າໝາກ, ບ້ານນ້ຳຮວາງ, ບ້ານເມືອງແມັດ ລວມມີນ້ອງນັກຮຽນ 214 ຄົນໄດ້ຮັບການຊ່ວຍເຫຼືອໃນຄັ້ງນີ:



## 2.2. ການຊ່ວຍເຫຼືອດ້ານສຸຂະພາບ ປີ2024

ໃນວັນທີ 27 ມີນາ ແລະ 11 ກັນຍາ 2024 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮ່ວມໃຈກັນບໍລິຈາກເລືອດ ໃຫ້ແກ່ສູນບໍລິຈາກເລືອດກາແດງລາວທົ່ວປະເທດ ລວມມີຜູ້ບໍລິຈາກທັງໝົດ 177ທ່ານ ເຊິ່ງກິດຈະກຳນີ້ ບໍລິສັດໄດ້ຈັດຂຶ້ນທຸກໆປີ ໂດຍບໍລິຈາກ 2ຄັ້ງ/ປີ ເພື່ອຊ່ວຍເຫຼືອຜູ້ທີ່ມີຄວາມຈຳເປັນໃນການໃຊ້ເລືອດ ດັ່ງຄຳຂັວນຂອງອົງການກາແດງທີ່ວ່າ “ໃຫ້ເລືອດໃຫ້ຊີວິດ”



## 2.3. ຊ່ວຍເຫຼືອສັງຄົມອື່ນໆ

ວັນທີ 14 ກັນຍາ 2024 ສຸວັນນີ ໂຮມເຊັນເຕີ ມອບເຄື່ອງຊ່ວຍເຫຼືອອາຫານ, ເຄື່ອງດື່ມ ແລະ ຢາ ຈຳນວນ 100 ຊຸດ ມູນຄ່າ 20,500,000 ກີບ ເພື່ອບັນເທົາຄວາມເດືອດຮ້ອນແກ່ຜູ້ປະສົບໄພນ້ຳຖ້ວມ ທີ່ແຂວງຫຼວງນ້ຳທາ



## VIII. ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ 2024

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນໂດຍໃຊ້ມາດຕະຖານການປະຕິບັດງານພາຍໃຕ້ລະບົບ ISO 9001 Version 2015 ແລະ ຍັງຄວບຄຸມດ້ວຍມາດຕະຖານຮ້ານ, ມາດຕະຖານການບໍລິການຕ່າງໆ, ມາດຕະຖານ 5ສ ແລະ ມາດຕະຖານຄວາມປອດໄພ ພ້ອມນີ້ກໍ່ມີການຄວບຄຸມ ໂດຍລະບົບຄອມພິວເຕີ ນຳໃຊ້ Software ທີ່ມີປະສິດທິພາບ ເພື່ອການຄຸ້ມຄອງ. ມີການຂໍອະນຸມັດຕາມຂັ້ນຕອນຂອງລະບົບ ພາຍໃຕ້ການກວດສອບຂອງທີມງານກວດສອບພາຍໃນ ແລະ ທີມງານກວດສອບພາຍນອກ ພ້ອມເສີມດ້ວຍລະບົບກ້ອງວົງຈອນປິດ ເພື່ອກວດກາຄວບຄຸມຈຸດບົກຜ່ອງຕ່າງໆ.

ແລະ ນອກຈາກນັ້ນ ບໍລິສັດໄດ້ໃຫ້ຄວາມສຳຄັນໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ (Corporate Governance) ແລະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເຂົ້າຮ່ວມການຈັດຕັ້ງປະຕິບັດວຽກງານຄຸ້ມຂອງບໍລິຫານ ໂດຍການປະເມີນຂອງຕະຫຼາດຫຼັກຊັບລາວ ປະຈຳປີ 2024 ເຫັນໄດ້ວ່າ ບໍລິສັດ ໄດ້ຄະແນນທັງໝົດ 75.98 ຄະແນນ ຈັດເປັນປະເພດ 4 ດາວ ໂດຍມີລາຍລະອຽດດັ່ງລຸ່ມນີ້:

| ພາກ | ຄະແນນທັງໝົດ | ຄະແນນຕົວຈິງ |
|---|---|---|
| ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ | 10 | 7.00 |
| ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ | 10 | 6.82 |
| ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ | 40 | 32.97 |
| ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ | 40 | 29.19 |
| **ລວມ** | 100 | **75.98** |

1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 7.00 ຄະແນນ
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 6.82 ຄະແນນ
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 32.97 ຄະແນນ
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້: 29.19 ຄະແນນ

## IX. ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2024

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໄຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ອັດຕາແລກປ່ຽນ
2. ພາລະໜີ້ສິນຂອງລູກຄ້າ
3. ຕົ້ນທຶນສິນຄ້າທາງກົງ ແລະ ທາງອ້ອມສູງຂຶ້ນ
4. ໄພຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນໃຫ້ບໍລິສັດ ແລະ ລູກຄ້າ, ທາງດ້ານອັດຕາແລກປ່ຽນແມ່ນ ເນື່ອງຈາກ ບໍລິສັດນຳເຂົ້າ ໂດຍຖືກຕ້ອງຕາມກົດໝາຍ ຈຶ່ງສາມາດຊື້ເງິນຕາຈາກທະນາຄານໄດ້ ດ້ວຍພາວະເງິນເຟີ້ ແມ່ນຊອກຫາແຫຼ່ງສິນຄ້າທີ່ຖືກລົງ ແລະ ຕໍ່ລອງຈາກຫຼາຍປະເທດ ເພື່ອໃຫ້ໄດ້ສິນຄ້າ ທີ່ມີຄຸນນະພາບ ແລະ ລາຄາຖືກລົງ ເພື່ອຕອບຮັບກຳລັງຊື້ ຂອງລູກຄ້າທີ່ລົດລົງ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາ ເພື່ອຮອງຮັບທຸກສະຖານະການ ທີ່ຈະເກີດຂຶ້ນ.

## X. ນະໂຍບາຍດ້ານສິ່ງແວດລ້ອມ ປະຈຳປີ 2024

ບໍລິສັດດຳເນີນທຸລະກິດດ້ວຍຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໂດຍມີການປັບປຸງ ແລະ ພັດທະນາຂະບວນການປະຕິບັດງານ ແລະ ກິດຈະກຳທາງທຸລະກິດຕ່າງໆ ໃຫ້ສອດຄ່ອງກັບການອະນຸລັກສິ່ງແວດລ້ອມເຊັ່ນ: ການລົດການໃຊ້ພະລັງງານ, ການລົດການໃຊ້ຊັບພະຍາກອນ, ການລົດກາດເຮືອນກະຈົກ ແລະ ລົດການເກີດຂີ້ເຫຍື້ອ-ສິ່ງເສດເຫຼືອ ເພື່ອປ້ອງກັນຄວບຄຸມ ແລະ ລົດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນບໍລິເວນອ້ອມຂ້າງໃຫ້ໜ້ອຍທີ່ສຸດ.

## XI. ແຜນການດຳເນີນງານປະຈຳປີ 2025

### 1. ແຜນການສ້າງລາຍໄດ້ປະຈຳປີ 2025

ບໍລິສັດຕັ້ງເປົ້າການເຕີບໂຕຂອງຍອດຂາຍເພີ່ມຂຶ້ນ 20% ເມື່ອທຽບກັບປີທີ່ຜ່ານມາ ຊຶ່ງອີງໃສ່ປັດໃຈແນວໂນ້ມການຂະຫຍາຍໂຕທາງດ້ານເສດຖະກິດ, ການຟື້ນໂຕຂອງພາກການທ່ອງທ່ຽວ ແລະ ອຸດສະຫະກຳກໍ່ສ້າງ ຊຶ່ງພວກເຮົາມີແຜນຮອງຮັບເພື່ອໃຫ້ບັນລຸຜົນຕາມເປົ້າໝາຍດັ່ງນີ້:

- ເພີ່ມຍອດຂາຍຕໍ່ສາຂາ ຕັ້ງເປົ້າຍອດຂາຍສະເລ່ຍຕໍ່ສາຂາເພີ່ມຂຶ້ນ 15-20%;
- ໃຊ້ກົນລະຍຸດໂປໂມຊັ່ນສຳລັບລູກຄ້າໃໝ່ ແລະ ລູກຄ້າເກົ່າ;
- ຂະຫຍາຍກຸ່ມເປົ້າໝາຍລູກຄ້າໂຄງການກໍ່ສ້າງໃຫ້ຫຼາຍຂຶ້ນ;
- ເພີ່ມຊ່ອງທາງການຂາຍອອນລາຍ;
- ປັບປຸງການບໍລິການຂົນສົ່ງໃຫ້ວ່ອງໄວທັນເວລາ;
- ເພີ່ມສິນຄ້າໃໝ່ ທີ່ມີຜົນຕອບແທນສູງເຊັ່ນ: ກຸ່ມຕົບແຕ່ງ.

### 2. ແຜນການຕະຫຼາດ ປະຈຳປີ 2025

- ການສື່ສານ Brand Souvanny ສ້າງການຮັບຮູ້ໂດຍຜ່ານ Social Media, Content Marketing;
- ໃຊ້ຂໍ້ມູນວິເຄາະລູກຄ້າ ແລະ ສ້າງຄວາມສຳພັນກັບລູກຄ້າ;
- ຈັດກິດຈະກຳສົ່ງເສີມການຂາຍຕາມລະດູການ.

### 3. ແຜນການພັດທະນາມາດຕະຖານການຈັດການ ປະຈຳປີ 2025

- ປັບປຸງມາດຕະຖານຮ້ານໃຫ້ມີມາດຕະຖານສູງຂຶ້ນ;
- ສືບຕໍ່ປັບປຸງມາດຕະຖານລະບົບການປະຕິບັດງານ ISO 9001 VERSION-2015 ໃຫ້ໄດ້ມາດຕະຖານທີ່ສູງຂຶ້ນ.
- ປັບປຸງມາດຕະຖານບໍລິການ ໃຫ້ຕອບໂຈດຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ.

### 4. ແຜນພັດທະນາດ້ານບຸກຄະລາກອນ ປະຈຳປີ 2025

- ພັດທະນາຝຶກອົບຮົມພະນັກງານໃນທຸກລະດັບ ໂດຍການສັນຫາບຸກຄະລາກອນ ທີ່ມີຄວາມຊຳນານທັງພາຍໃນ ແລະ ພາຍນອກ ເພື່ອມາຊ່ວຍຍົກລະດັບພະນັກງານໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນ;
- ຈັດການສອບເສັງ ເພື່ອຄັດເລືອກພະນັກງານດີ ແລະ ເກັ່ງ ກຽມໄວ້ ເພື່ອຮອງຮັບການຂະຫຍາຍຕົວຂອງບໍລິສັດ;

- ສ້າງສະພາບແວດລ້ອມ ເພື່ອເຊື່ອມໂຍງການຮຽນຮູ້ແລກປ່ຽນບົດຮຽນກັບສະຖາບັນການສຶກສາ ແລະ ອົງກອນທີ່ມີຄວາມຊໍານານສະເພາະທາງ ທັງພາຍໃນ ແລະ ພາຍນອກ ເພື່ອເພີ່ມຂີດຄວາມສາມາດຂອງພະນັກງານໃນການຄົ້ນຄວ້າ, ວິໃຈ ຫາຄວາມໄດ້ປຽບຂອງທຸລະກິດໃນການແຂ່ງຂັນ ຖ້າມກາງຄວາມຕ້ອງການຂອງລູກຄ້າ ທີ່ມີການປ່ຽນແປງໄວຂຶ້ນ.

## 5. ແຜນການລົງທຶນ ແລະ ຂະຫຍາຍກິດຈະການ ປະຈໍາປີ 2025

- ຂະຫຍາຍສາຂາໃໝ່ ຈໍານວນ 3 ສາຂາ ເລີ່ມແຕ່ ປີ 2025 ຫາ ປີ 2026 ໂດຍຈະເປີດ 1 ສາຂາໃນກາງປີ 2025 ນີ້.

# ສຸວັນນີ ໂຮມເຊັນເຕີ

## ຈິນຕະນາການທີ່ເປັນໄປໄດ້




ສຸວັນນີ ໂຮມເຊັນເຕີ ມະຫາຊົນ

SOUVANNY HOME CENTER PUBLIC COMPANY

PHONETONGSAVAT RD, BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL

OFFICE TEL: (+856-21) 415645, FAX/TEL: (+856-21) 262984, WWW.SOUVANNY.LA